VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ: 044 /ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ 08 APR 2022

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021

- ອີງຕາມມະຕິກອງປະຊຸມສາມັນ ສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2022, ລົງວັນທີ 21/03/2022.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (" ວຈຊຕ ") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໃນວັນທີ 29 ເມສາ 2022 ເວລາ 14:00 ໂມງ (ເລີ່ມລົງທະບຽນເວລາ 13:00-14:00 ໂມງ) ທີ່ຫ້ອງປະຊຸມ ໄດເອີ້ມ້ອນ ຊັ້ນ 4 ຂອງໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດຍັງໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມໃຫ້ບັນດາທ່ານຊາບແລ້ວ ໂດຍຜ່ານລະບົບຂໍ້ມູນຂ່າວສານ ຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ຫວັງຢ່າງຍິ່ງວ່າທ່ານຈະສະຫຼະເວ ຄັ້ງທີ 1/2021 ລາອັນມີຄ່າຂອງທ່ານ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

Wang Wei Kun

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2021;
2. ເອກະສານຄັດຕິດຂອງວາລະທີ 2: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021 ຂອງ ວຈຊຕ;
3. ເອກະສານຄັດຕິດຂອງວາລະທີ 3: ບົດລາຍງານການເງິນປະຈຳປີ 2021 ຂອງ ວຈຊຕ;
4. ເອກະສານຄັດຕິດຂອງວາລະທີ 4: ບົດລາຍງານການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດ 2022 ຂອງ ວຈຊຕ;
5. ເອກະສານຄັດຕິດຂອງວາລະທີ6: ຊີວະປະຫວັດຫຍໍ້ຂອງຜູ້ທີ່ຈະຄັດເລືອກມາເປັນສະມາຊິກສະພາບໍລິຫານສະໄໝທີ່ 3;
6. ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະທີ່ສະດວກເຂົ້າຮ່ວມກອງປະຊຸມ ເຊິ່ງສາມາດມອບສິດໃຫ້ພ້ອມ
7. ໃບມອບສິດ;
8. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2021;
9. ແຜນທີ່ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2021;

<u>ໝາຍເຫດ:</u>

1. ຜູ້ຖືຮຸ້ນທຸກທ່ານສາມາດຮັບເອົາໜັງສືເຊີນປະຊຸມ ແລະ ເອກະສານທີ່ກ່ຽວຂ້ອງໄດ້ໃນວັນທີ 08 ເມສາ 2022 ທີ່ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4, ຖະໜົນ T4, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ເບີໂທລະສັບ: (856-21) 454361-4, ແຟັກ: (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມງານດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ເພື່ອຢັ້ງຢືນການລົງທະບຽນເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດຕາມ **<u>ເອກະສານຄັດຕິດ 7</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມ ກະລຸນາສະແດງເອກະສານ ຫຼື ຫຼັກຖານ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 8</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ຜູ້ຮັບຜິດຊອບທີ່ຖືກແຕ່ງຕັ້ງໂດຍປະທານສະພາບໍລິຫານ ແລ້ວຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີຜູ້ຖືຮຸ້ນມອບສິດໃຫ້ສະມາຊິກອິດສະຫຼະຂອງ ວຈຊຕ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ ☑ ເພື່ອເລືອກເອົາສະມາຊິກອິດສະຫຼະຂອງ ບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບທີ່ ຫ້ອງການບໍລິສັດ ວຽງຈັນ ເຊັນເຕີ ລາວ ມະຫາຊົນ, ຊັ້ນ 5 ອາຄານຫ້ອງການວຽງຈັນເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 26 ເມສາ 2022.

6. ໃນກໍລະນີທີ່ທ່ານມີຂໍ້ສົງໄສ ຫຼື ຕ້ອງການຊອບຖາມລາຍລະອຽດເພີ່ມເຕີມ, ສາມາດຕິດຕໍ່ສອບຖາມ ທ. ຄຳຮຸ່ງ (Mr. Lei Yaohai) ໂທ: 020 95549597 (ອີເມວ: yhlei@vclao.com) ໃນໂມງລັດຖະການ.

ເອກະສານຄັດຕິດ 1

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ມະຕິກອງປະຊຸມວິ ສາມັນຜູ້ຖືຮຸ້ນ ຄັ້ງ 1/2021

ລາຍລະອຽດ:

ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ມະຕິກອງປະຊຸມວິ ສາມັນຜູ້ຖືຮຸ້ນ ຄັ້ງ 1/2021 ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບ ຄື ດັ່ງລຸ່ມນີ້:

1. ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ໄດ້ຈັດຂຶ້ນໃນວັນທີ 30/04/2021 ທີ່ໂຮງແຮມແລນມາກ ນະຄອນຫຼວງວຽງຈັນ ສປປ ລາວ, ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງວາລະດັ່ງລຸ່ມນີ້:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈາປີ 2019;

ວາລະທີ 2: ພິຈາລະນາ ແລະ ຮັບຮອງປຶດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019;

ວາລະທີ 3: ພິຈາລະນາ ແລະ ຮັບຮອງປຶດລາຍງານການເງິນຂອງບໍລິສັດປະຈຳປີ 2020;

ວາລະທີ 4: ພິຈາລະນາ ແລະ ຮັບຮອງປຶດລາຍງານຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ແຜນການດຳເນີນ ທຸລະກິດປີ 2021;

ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2020 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ;

ວາລະທີ 6: ພິຈາລະນາ ແລະ ຮັບຮອງການຄັດເລືອກເພື່ອປັບປ່ຽນສະມາຊິກ ແລະ ປະທານຂອງສະພາບໍລິຫານ ສະໄໝທີ 2 ທີ່ລາອອກ;

ວາລະທີ 7: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ.

ວາລະທີ 8: ພິຈາລະນາ ແລະ ອະນຸມັດການຂໍສິດເປັນຜູ້ພິຈາລະນາ ແລະ ຮັບຮອງເລື່ອງການຕໍ່ອາຍຸສັນຍາກູ້ຢືມ ຂອງ ວຈຊຕ.

ວາລະທີ 9: ພິຈາລະນາ ແລະ ອະນຸມັດການວ່າຈ້າງບໍລິສັດກວດສອບບັນຊີໃຫ້ວຈຊຕ.

ວາລະທີ 10: ພິຈາລະນາ ແລະ ອະນຸມັດການຄັດເລືອກສະມາຊິກຄະນະກຳມະການຂອງບໍລິສັດຄົນໃຫມ່.

ວາລະທີ 11: ພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ

2. ກອງປະຊຸມວິ ສາມັນຜູ້ຖືຮຸ້ນ ຄັ້ງ 1/2021 ໄດ້ຈັດຂຶ້ນໃນວັນທີ 30/09/2021 ທີ່ຫ້ອງປະຊຸມບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ນະຄອນຫຼວງວຽງຈັນ ສປປ ລາວ, ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງ ວາລະດັ່ງລຸ່ມນີ້:

ວາລະ : ພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍ ຮຸ້ນ ທີ່ຍັງເຫຼືອ

ມະຕິຂອງແຕ່ລະວາລະດັ່ງກ່າວ ແມ່ນໄດ້ມີການຈັດຕັ້ງປະຕິບັດໃຫ້ສຳເລັດແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021 ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ບໍ່ມີການລົງຄະແນນສຽງ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ມະຕິກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021

ລາຍລະອຽດ:

ໃນປີ 2021, ວຈຊຕ ໄດ້ມີການຈັດກອງປະຊຸມຜູ້ຖືຮຸ້ນສອງຄັ້ງ ກໍຄືກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021, ແລະ ວຈຊຕ ໄດ້ມີການເຮັດບົດບັນທຶກກອງປະຊຸມດັ່ງກ່າວ ລາຍລະອຽດໃນ ເອກະສານຄັດຕິດ 2 ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ໄດ້ເປີດເຜີຍບົດບັນທຶກກອງປະຊຸມດັ່ງກ່າວໃນເວັບໄຊ້ຂອງ ຕະຫຼາດຫຼັກຊັບລາວ ແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມຊາສາມັນຜູ້ຖືຮຸ້ນດັ່ງກ່າວ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2021

ລາຍລະອຽດ:

ບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2021 ແມ່ນໄດ້ຮັບການກວດສອບຢ່າງຖືກຕ້ອງຈາກ ບໍລິສັດ ເອີນ ແອນ ຢັ ງ ລາວ ຈຳກັດ ມີລາຍລະອຽດໃນ **ເອກະສານຄັດຕິດ 3** ທີ່ໄດ້ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີ ການຮັບຮອງຈາກສະພາບໍລິຫານແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2021.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດປີ 2022

ລາຍລະອຽດ:

1. ລາຍງານຜົນການດຳເນີນທຸລະກິດປະຈຳປີ 2021

1) ລາຍຮັບ

ໃນປີ 2021, ລາຍໄດ້ຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 9.077.518.440,00 ກີບ, ມີການຫຼຸດລົງ 17,5% ຈາກປີທີ່ແລ້ວ. ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 3.284.684.938,64 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຫ້ອງການ ແມ່ນເປັນເງິນ 4.161.389.339,39 ກີບ, ລາຍໄດ້ຈາກການຮ່ວມທຸລະກິດ ແມ່ນເປັນເງິນ 383.892.231 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຈັດງານ ແມ່ນເປັນເງິນ 754.859.254,2 ກີບ, ລາຍໄດ້ຈາກການໃຫ້ເຊົ່າປ້າຍໂຄສະນາ ແມ່ນເປັນເງິນ 492.692.676,77 ກີບ.

ເຫດຜົນທີ່ລາຍຮັບຫຼຸດລົງໃນປີ 2021 : ໜຶ່ງແມ່ນຍ້ອນມີການແຜ່ລະບາດຂອງພະຍາດໂຄວິດ-19 ທາງລັດຖະບານລາວສັ່ງເຈາະກິດຈະກຳທີ່ເຕົ້າໂຮມຫຼາຍຄົນ ເຊັ່ນງານດອງ ງານໂຄສະນາສິນຄ້າ ແລະອື່ນໆ ເຮັດໃຫ້ບັນດາລູກຄ້າໄດ້ມີການຍົກເລີກສັນຍາເຊົ່າພື້ນທີ່ຈັດງານ. ສອງແມ່ນ ວຈຊຕ ໄດ້ມີການປິດບໍລິການເກືອບ 3 ເດືອນໃນປີ 2021, ເພື່ອສົ່ງເສີມວຽກງານການຊອກຫາລູກຄ້າ ວຈຊຕ ຍັງໄດ້ສ້າງນະໂຍບາຍຍົກເວັ້ນຄ່າເຊົ່າພື້ນທີ່ໃຫ້ກັບລູກຄ້າບາງສ່ວນ ແລະ ຫຼຸດຄ່າເຊົ່າລົງໂດຍອີງຕາມລາຄາເຊົ່າໃນທ້ອງຕະຫຼາດ. ສາມແມ່ນຍ້ອນທຸລະກິດຂອງລູກຄ້າບາງສ່ວນ ທີ່ເຊົ່າພື້ນທີ່ຫ້ອງການນຳ ວຈຊຕ ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ອັນໜັກໜ່ວງ ເຮັດໃຫ້ງົບປະມານການເຊົ່າຫ້ອງການມີການຫຼຸດລົງຫຼາຍ ຈົນຍົກເລີກລາຍການການເຊົ່າຫ້ອງການ.

2) ລາຍຈ່າຍ ແລະ ກຳໄລ

ໃນປີ 2021, ລາຍຈ່າຍທັງໝົດຂອງ ວຈຊຕ ແມ່ນ 2.168.144.303,00 ກີບ, ລາຍຮັບຈາກການປ່ຽນແປງຂອງມູນຄ່າຍຸດຕິທຳແຫ່ງການລົງທຶນ ຂອງຂະແໜງອະສັງຫາລິມະຊັບ ແມ່ນ 1.534.358.840,00 ກີບ, ລາຍຮັບຈາກການປ່ຽນແປງຂອງອັດຕາແລກປ່ຽນ ແມ່ນ 2.797.136.009,00 ກີບ, ລາຍຈ່າຍຂອງ ດອກເບ້ຍ 1.704.837.604,00ກີບ, ກຳໄລກ່ອນເສຍອາກອນແມ່ນ 9.536.031.382,00 ກີບ, ອາກອນ ກຳໄລແມ່ນ 1.493.636.087,00 ກີບ, ກຳໄລສຸດທິແມ່ນ 8.042.395.295,00 ກີບ ມີການຫຼຸດລົງ 13% ຈາກປີທີ່ແລ້ວ ໂດຍຍ້ອນຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ລາຍຮັບມີການຫຼຸດ ລົງຫຼາຍ ແລະມີການກະທົບຕໍ່ກຳໄລສຸດທິ.

3) **ຊັບສິນທັງໝົດ**

ໃນປີ 2021, ຊັບສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 200.177.031.937,00 ກີບ, ມີການຫຼຸດລົງ 22% ຈາກປີທີ່ແລ້ວ. ສາເຫັດທີ່ຫຼຸດລົງ ແມ່ນຍ້ອນວ່າໄດ້ມີການຊຳລະເງິນກູ້ຕົ້ນທຶນເປັນເງິນ 64.232.500.000,00 ກີບ ຄືນໃຫ້ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນ ເໜືອ ຈຳກັດໃນເດືອນຕຸລາ ປີ 2021, ເຮັດໃຫ້ໜີ້ສິນ ແລະ ເງິນສົດຂອງບໍລິສັດ ມີການຫຼຸດໜ້ອຍລົງພ້ອມກັນ ເຊິ່ງເຮັດໃຫ້ຊັບສິນທັງໝົດມີການຫຼຸດລົງ.

4) **ໜີ້ສິນທັງໝົດ**

ໃນປີ 2021, ໜີ້ສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 18.883.466.392,00 ກີບ, ມີການຫຼຸດລົງ 77% ຈາກປີທີ່ແລ້ວ. ສາເຫັດທີ່ຫຼຸດລົງ ແມ່ນຍ້ອນວ່າໄດ້ມີການຊຳລະເງິນກູ້ຕົ້ນທຶນຄືນໃຫ້ບໍລິສັດພັດທະນາ ສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດໃນເດືອນຕຸລາ ປີ 2021.

2. ແຜນການດຳເນີນທຸລະກິດປະຈຳປີ 2022

1) ທຸລະກິດຂອງຫ້າງ

ສືບຕໍ່ສ້າງສາລະບົບການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19, ເຮັດໃຫ້ ກາຍເປັນແຖວໜ້າຂອງຂະແໜງການບໍລິຫານຫ້າງໃນຍຸກຄວາມປົກກະຕິຮູບແບບໃໝ່, ສົ່ງເສີມການ ໂຄສະນາ ແລະ ການຊື້ຂາຍອອນໄລ, ພັດທະນາທຸລະກິດການຮັບຈ້າງຈັດກິດຈະກຳ.

2) ທຸລະກິດຂອງອາຄານສຳນັກງານ

ໃຫ້ສືບຕໍ່ເພີ່ມທະວີການຊອກຫາ ວິສາຫະກິດທີ່ໃກ້ຈະໝົດອາຍຸສັນຍາເຊົ່າກັບສຳນັກງານອື່ນໃນລາວ, ຍົກສູງມາດຕະຖານການບໍລິການ ແລະ ສ້າງອາຄານສຳນັກງານ ວຈຊຕ ເປັນຍີ່ຫໍ້ດັງທີ່ມີຮູບລັກສະນະແບບມືອາຊີບຂຶ້ນມາ.

ລາຍລະອຽດຂອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດປະຈຳປີ 2022 ແມ່ນໄດ້ຄັດຕິດໃນເອກະສານຄັດຕິດ 4.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດປະຈຳປີ 2022.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2021 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ

ລາຍລະອຽດ:

ອີງຕາມກົດລະບຽບຂອງບໍລິສັດ, ສຳລັບການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ພາຍຫຼັງທີ່ໄດ້ຫັກກຳໄລສຸດທິ ແລະ ກຳໄລສະສົມເຂົ້າຄັງສຳຮອງໄວ້ຕາມກົດໝາຍ ແລະ ຄັງອື່ນໆ (ຖ້າມີ) .

ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນປະຈຳປີ 2021 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນຕາມມື້ປິດປຶ້ມບັນຊີໃນວັນທີ 01 ເມສາ 2022 ໃນອັດຕາ 10 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 1.471.999.000 ກີບ. ໃຫ້ຈ່າຍເງິນປັນຜົນພາຍໃນ 30 ມື້ ຫຼັງຈາກໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນແລ້ວ ແລະ ມອບໃຫ້ຜູ້ອຳນວຍການໃຫຍ່ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

ຄຳເຫັນ ຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນວ່າໃນປີ 2021, ການແຜ່ລະບາດຂອງພະຍາດໂຄວິດ-19 ໃນລາວ ແມ່ນເປັນຄັ້ງທີ່ສອງ, ທາງລັດຖະບານລາວໄດ້ອອກຄຳສັ່ງໃຫ້ມີການໂຈະການຈັດກິດຈະກຳ ຂອງສູນການຄ້າຊື່ວຄາວ, ພ້ອມກັນນັ້ນ ການຈັບຈ່າຍໃຊ້ສອຍຂອງປະຊາຊົນກໍ່ມີການຫຼຸດລົງ. ເພື່ອມີການປະກອບສ່ວນໃນການຈັດຕັ້ງປະຕິບັດຄຳສັ່ງຂອງລັດ ທາງວຽງຈັນເຊັນເຕີໄດ້ມີການປິດບໍລິການຊົ່ວຄາວ ໂດຍ

ໂຊນຫ້າງມີການປິດບໍລິການເກືອບ 3 ເດືອນ ແລະ ໂຮງໜັງມີການປິດບໍລິການເກືອບ 12 ເດືອນ ເຮັດໃຫ້ການສ້າງລາຍໄດ້ທີ່ເປັນກະແສເງິນສົດໜ້ອຍລົງ. ໃນປີ 2022, ພະຍາດໂຄວິດ-19 ຍັງສືບຕໍ່ສົ່ງຜົນກະທົບຕໍ່ທຸລະກິດຂອງບໍລິສັດຢ່າງໜັກໜ່ວງ, ນະໂຍບາຍທີ່ໃຊ້ໃນປະຈຸບັນ ແລະ ອະນາຄົດທີ່ເປັນຊ່ວງໄລຍະໜຶ່ງ ແມ່ນການສະຫງວນເງິນສົດທີ່ສົມຄວນ ເພື່ອສະກັດກັ້ນພະຍາດໂຄວິດ-19 ດ້ານຄວາມສ່ຽງຕໍ່ການດຳເນີນທຸລະກິດ ຮັກສາຄວາມໝັ້ນຄົງຂອງທຸລະກິດ ແລະ ໃຫ້ມີການພັດທະນາຢ່າງຕໍ່ເໜື່ອງ. ບົນພື້ນຖານການຫັກອອກກຳໄລສຸດທິຈາກການປະເມີນມູນຄ່າຊັບສິນທີ່ເປັນຈຳນວນເງິນ 1.534.358.840 ກີບ ແລະ ກຳໄລສຸດທິຈາກການປ່ຽນແປງຂອງອັດຕາແລກປ່ຽນທີ່ເປັນຈຳນວນເງິນ 2.797.136.009 ກີບ, ເມື່ອຫັກຄັງສຳຮອງ 20% ຂອງກຳໄລສຸດທິທີ່ເຫຼືອເຊິ່ງເປັນຈຳນວນເງິນ 742.180.089.2 ກີບອີກແລ້ວ, ຈຳນວນເງິນກຳໄລສຸດທິແມ່ນເຫຼືອ 2.968.720.356,8 ກີບ. ເພື່ອສ້າງຜົນຕອບແທນໃຫ້ແກ່ບັນດາຜູ້ຖືຮຸ້ນທີ່ໝັ້ນໃຈຕໍ່ ວຈຊຕ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນໃນຕະຫຼາດຫຼັກຊັບ ຈະມີການສະເໜີຈ່າຍເງິນປັນຜົນປະຈຳປີ 2021 ໃນອັດຕາ 10 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 1.471.999.000 ກີບ, ປະມານ 50% ຂອງຜົນກຳໄລສຸດທິທີ່ ຫັກເງິນທີ່ບໍ່ແມ່ນເປັນກະແສເງິນສົດ ແລະ ເງິນຄັງສຳຮອງຕາມລະບຽບການ. ແລະເຫັນດີສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຜນການຈ່າຍເງິນປັນຜົນດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງແຜນການຄັດເລືອກສະມາຊິກສະພາບໍລິຫານສະໄໝທີ 3 ຂອງບໍລິສັດ ວຈຊຕ.

<u>ລາຍລະອຽດ:</u>

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ.

ຍ້ອນວ່າອາຍຸການຕຳລົງຕຳແໜ່ງສະມາຊິກສະພາບໍລິຫານສະໄໝທີ 2 ແມ່ນເປັນເວລາສອງປີ ເຊິ່ງເລີ່ມວັນທີ 29/05/2020 ຫາ ວັນທີ 28/05/2022 ແລະຊຶ່ມີການໝົດອາຍຸການ. ຜ່ານການຄັດເລືອກຈາກຄະນະກຳມະການຄັດເລືອກ ສະເໜີລາຍຊື່ເພື່ອຄັດເລືອກເປັນສະມາຊິກສະພາບໍລິຫານສະໄໝທີ 3 ຄື

ດັ່ງລຸ່ມນີ້:

- ທ່ານ ເຫີຈຸ່ນ (Mr. HE Jun) ປະທານ
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ຮອງປະທານ
- ທ່ານ ຫວັງເຫວີຍຄຸນ (Mr. WANG Weikun) ສະມາຊິກ
- ທ່ານ ບູລະພາ ສັນຕິຄົງຄາ ສະມາຊິກ
- ທ່ານ ອູ ຊິງຫວາ (Mr. Wu Xinghua) ສະມາຊິກ
- ທ່ານ ເຊີ່ນ ເຟີຍຫູ້ (Mr. Sun Feihu) ສະມາຊິກ
- ທ່ານ ຫຼໍ ສ້ຽວດົ່ງ (Mr. LUO Xiaodong) ສະມາຊິກ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະລະ
- ທ່ານ ຈ່າງ ທຽນຢີ້ (Mr. ZHANG Tianyi) ສະມາຊິກອິດສະລະ
- ທ່ານ ວຽງສະຫວັນ ພັນທະລີ ສະມາຊິກອິດສະລະ
- ທ່ານ ຈໍຊິ່ງ ບົວສີເນັ່ງມາ ສະມາຊິກອິດສະລະ

ຊີວະປະຫວັດຫຍໍ້ຂອງແຕ່ລະທ່ານໄດ້ມີລາຍລະອຽດໃນ **<u>ເອກະສານຄັດຕິດ 5</u>** ທີ່ໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ. ອາຍຸການແມ່ນເປັນເວລາ 2 ປີ ໂດຍເລີ່ມແຕ່ມື້ທີ່ໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດແຜນການຄັດເລືອກສະມາຊິກສະພາບໍລິຫານສະໄໝທີ່ 3 ຂອງບໍລິສັດ ວຈຊຕ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 7: ຮັບຟັງການລາຍງານການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ.</u>

<u>ລາຍລະອຽດ:</u>

ອີງຕາມມະຕິກອງປະຊຸມ ວຈຊຕ ປະຈຳປີ 2020 ເຊິ່ງຈັດຂຶ້ນໃນວັນທີ 30/04/2021, ເຫັນດີການວ່າຈ້າງ ບໍລິສັດ ເອີນແອນຢັ ງ ລາວ ຈຳກັດ ເປັນບໍລິສັດກວດສອບບັນຊີໃຫ້ ວຈຊຕ ໃນໄລຍະປີ 2021 ເຖິງ 2023, ຄ່າບໍລິການການກວດສອບແມ່ນ 31,000 ໂດລາ (ສາມໝື່ນໜຶ່ງພັນໂດລາຖ້ວນ)ຕໍ່ປີ. ອີງຕາມສັນຍາການບໍລິການ, ບໍລິສັດ ເອີນແອນຢັ ງ ລາວ ຈຳກັດ ຈະເສີບຕໍ່ເປັນບໍລິສັດກວດສອບບັນຊີໃຫ້ ວຈຊຕ ໃນປີ 2022.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນວ່າ ບໍລິສັດ ເອີນແອນຢັ ງ ລາວ ຈຳກັດ ໄດ້ມີການດຳເນີນງານການທົບທວນບົດລາຍງານບັນຊີປະຈຳໄຕມາດ ແລະ ກວດສອບບົດລາຍງານບັນຊີ 6 ເດືອນຕົ້ນປີ ແລະປະຈຳປີ ຢ່າງມີປະສິທິພາບສູງ ແລະ ທັນເວລາທີ່ກຳນົດ, ເຮັດໃຫ້ ວຈຊຕ ສາມາດເປີດເຜີຍຂໍ້ມູນຕາມເວລາທີ່ກຳນົດໂດຍ ສຄຄຊ ແລະ ຕລຊລ, ເຫັນດີໃຫ້ລາຍງານການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ ຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອຮັບຊາບ.

<u>ຄະແນນສຽງທີ່ຕ້ອງການ:</u>

ການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ບໍ່ມີການລົງຄະແນນສຽງ.

<u>ວາລະທີ 8: ພິຈາລະນາ ແລະ ຮັບຮອງແຜນການຄັດເລືອກສະມາຊິກຄະນະກຳມະການຕ່າງໆຂອງບໍລິສັດ ວຈຊຕ ຊຸດໃໝ່.</u>

<u>ລາຍລະອຽດ:</u>

ຍ້ອນວ່າອາຍຸການຕຳລົງຕຳແໜ່ງສະມາຊິກສະພາບໍລິຫານສະໄໝທີ່ 2 ແມ່ນເປັນເວລາສອງປີ ເຊິ່ງເລີ່ມວັນທີ 29/05/2020 ຫາ ວັນທີ 28/05/2022 ແລະຊຶ່ມີການໝົດອາຍຸການ, ຜ່ານການຄັດເລືອກຈາກຄະນະກຳມະການຄັດເລືອກ ສະເໜີລາຍຊື່ເພື່ອຄັດເລືອກເປັນສະມາຊິກຄະນະກຳມະການຕ່າງໆຂອງບໍລິສັດ ວຈຊຕ ຄືດັ່ງລຸ່ມນີ້:

<u>1. ຄະນະອຳນວຍການ</u>

1) ທ່ານ ຫວັ ງເຫວີ ຍຄຸນ, ປະທານຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການບໍລິຫານ (CEO)

2) ທ່ານ ອູ ຊິ ງຫວາ, ສະມາຊິກຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານປະຕິບັດການ (COO)

3) ທ່ານ ຫູ ສ້ ຽວດິ ງ, ສະມາຊິກຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການເງິນ (CFO)

2. **<u>ຄະນະກຳມະການກວດສອບ</u>**

1) ທ່ານ ເຫີ ຈຸ ນ, ປະທານຄະນະກຳມະການກວດສອບ/ປະທານສະພາບໍລິຫານ

2) ທ່ານ ນາງ ໂຈ ເໜີ ຍ, ສະມາຊິກຄະນະກຳມະການກວດສອບ/ສະມາຊິກອິດສະຫຼະ

3) ທ່ານ ວຽງສະຫວັນ ພັນທະລີ, ສະມາຊິກຄະນະກຳມະການກວດສອບ/ສະມາຊິກອິດສະຫຼະ

3. **ຄະນະກຳມະການຄຸ້ມຄອງຄວາມສ່ຽງ**

1) ທ່ານ ຫງໍ ສ້ຽວດິ່ງ, ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ/ສະມາຊິກ

2) ທ່ານ ຈໍຊົ່ງ ບົວສີເນ່ັງມາ, ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ/ສະມາຊິກອິດສະຫຼະ;

3) ທ່ານ ວຽງສະຫວັນ ພັນທະລີ, ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ/ສະມາຊິກອິດສະຫຼະ;

4. **ຄະນະກຳມະການຄັດເລືອກ**

1) ທ່ານ ບູລະພາ ສັນຕິຄົງຄາ, ປະທານຄະນະກຳມະການຄັດເລືອກ/ສະມາຊິກ;

2) ທ່ານ ຈ່າງ ທຽນຢີ້, ສະມາຊິກຄະນະກຳມະການຄັດເລືອກ/ສະມາຊິກອິດສະຫຼະ;

3) ທ່ານ ຈໍຊົ່ງ ບົວສີເນ່ັງມາ, ສະມາຊິກຄະນະກຳມະການຄັດເລືອກ/ສະມາຊິກອິດສະຫຼະ;

5. **ຄະນະກຳມະການກຳນົດຄ່າຕອບແທນ**

1) ທ່ານ ອູ ຊິງຫວາ, ປະທານຄະນະກຳມະການກຳນົດຄ່າຕອບແທນ/ສະມາຊິກ;

2) ທ່ານ ສ່ຽວ ໂຢງ, ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ/ສະມາຊິກອິດສະຫຼະ;

3) ທ່ານ ຈ່າງ ທຽນຢີ້, ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ/ສະມາຊິກອິດສະຫຼະ;

6. **ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ**

1) ທ່ານ ບູລະພາ ສັນຕິຄົງຄາ, ປະທານຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ສະມາຊິກ;

2) ທ່ານ ຈໍຊົ່ງ ບົວສີເນ່ັງມາ, ສະມາຊິກຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ສະມາຊິກ ອິດສະຫຼະ;

3) ທ່ານ ສ່ຽວ ໂຢງ, ສະມາຊິກຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ສະມາຊິກອິດສະຫຼະ;

ສະມາຊິກຂອງ ຄະນະກຳມະການຕ່າງໆຂອງບໍລິສັດ ມີອາຍຸການສອງປີ ໂດຍເລີ່ມຈາກມື້ທີ່ໄດ້ຮັບການອະນຸມັດໃນກອງປະຊຸມຜູ້ຖືຮຸ້ນຄັ້ງນີ້.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 09: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ.</u>

<u>ລາຍລະອຽດ:</u>

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ.

ເນື່ອງຈາກວ່າ ທ່ານ ເຫີຈຸ່ນ (Mr. HE Jun) ຂຶ້ນມາຮັບຕຳແໜ່ງເປັນປະທານສະພາບໍລິຫານສະໄໝທີ່ 3, ອີງຕາມຄວາມຕ້ອງການໃນການຈັດຈັ້ງປະຕິບັດວຽກງານຕົວຈິງ ເຫັນວ່າມີຄວາມຈຳເປັນປ່ຽນຜູ້ຕາງໜ້ານິຕິບຸກຄົນໃນທະບຽນວິສາຫະກິດ ຈາກທ່ານ ຫວັງເຫວີຍຄຸນ (Mr. WANG Weikun) ມາເປັນ ທ່ານ ເຫີຈຸ່ນ (Mr. HE Jun).

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 10 : ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.</u>

<u>ລາຍລະອຽດ:</u>

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ.

ອີງຕາມແຜນການຄັດເລືອກສະມາຊິກສະພາບໍລິຫານສະໄໝທີ່ 3 ຂອງບໍລິສັດ ວຈຊຕ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດສອດຄ່ອງກັບສະພາບຕົວຈິງ, ເຫັນວ່າມີຄວາມຈຳເປັນຕ້ອງດັດແກ້ເນື້ອໃນຂອງມາດ ຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານເຊິ່ງມີການກ່ຽວພັນກັບລາຍຊື່ການຄັດເລືອກ, ໂດຍມີເນື້ອໃນທີ່ດັດແກ້ແລ້ວ ຄືດັ່ງນີ້:

<u>1. ມາດຕາ 9. ຜູ້ອຳນວຍການ:</u>

ຜູ້ອຳນວຍການຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ມີ 11 ຄົນ, ໃນນີ້:

ກ. ຜູ້ຖືຮຸ້ນເປັນຜູ້ອຳນວຍການ 0 ຄົນ, ປະກອບດ້ວຍ: ບໍ່ມີ.

ຂ. ຈ້າງບຸກຄົນພາຍນອກ ເປັນຜູ້ອຳນວຍການ 11 ຄົນ, ປະກອບດ້ວຍ:

ຜູ່ທີໜຶ່ງ(ຜູ່ອຳນວຍການໃຫຍ່):

- ຊື່ ແລະ ນາມສະກຸນ: ທ່ານ ຫວັງເຫວີຍຄຸນ (Mr. WANG Weikun)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: EJ4156289, ລົງວັນທີ 19 ຕຸລາ 2020

ຜູ່ທີສອງ:

- ຊື່ ແລະ ນາມສະກຸນ: ທ່ານ ເຫີຈຸ່ນ (Mr. HE Jun)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E35832925, ລົງວັນທີ 17 ກຸມພາ 2016

ຜູ່ທີສາມ:

- ຊື່ ແລະ ນາມສະກຸນ: ທ່ານ ຫຼໍ ສ້ຽວຕົ້ງ (Mr. LUO Xiaodong)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E60438199, ລົງວັນທີ 10 ຕຸລາ 2015

ຜູ່ທີສີ່:

- ຊື່ ແລະ ນາມສະກຸນ: ທ່ານ ນາງ ອໍລະໄທ ສັນຕິຄົງຄາ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: 01-0036797, ລົງວັນທີ 30 ມັງກອນ 2015

ຜູ່ທີຫ້າ:

- ຊື່ ແລະ ນາມສະກຸນ: ທ່ານ ບຸລະພາ ສັນຕິຄົງຄາ
- ສັນຊາດ: ລາວ

- ທີ່ຢູ່ໃນ ສປປ ລາວ: ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: 01-0036796, ລົງວັນທີ 30 ມັງກອນ 2015

ຜູ້ທີ່ຫົ່ວ:

- ຊື່ ແລະ ນາມສະກຸນ: ທ່ານ ອູ່ ຊິງຫວາ (Mr. Wu Xinghua)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນເຫີເຝີ, ແຂວງ ອ່ານຮຸຍ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໂພນສະອາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E55964760, ລົງວັນທີ 02 ກຸມພາ 2016

ຜູ້ທີ່ເຈັດ:

- ຊື່ ແລະ ນາມສະກຸນ: ທ່ານ ເຊີນ ເຟີຍຫູ້ (Mr. Sun Feihu)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E61792462, ລົງວັນທີ 12 ພະຈິກ 2015

ຜູ້ທີ່ແປດ:

- ຊື່ ແລະ ນາມສະກຸນ: ທ່ານ ສ່ຽວ ໂຢງ (Mr. Xiao Yong)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: G28936820, ລົງວັນທີ 15 ກໍລະກົດ 2008

ຜູ້ທີ່ເກົ້າ:

- ຊື່ ແລະ ນາມສະກຸນ: ທ່ານ ຈ່າງ ທຽນຢີ້ (Mr. ZHANG Tianyi)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໂພນສະອາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E89453283, ລົງວັນທີ 01 ມີນາ 2017

ຜູ້ທີ່ສິບ:

- ຊື່ ແລະ ນາມສະກຸນ: ທ່ານ ວຽງສະຫວັນ ພັນທະລີ

- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານແສງສະຫວ່າງ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: A1-0010349, ລົງວັນທີ 28 ມີນາ 2014

ຜູ່ທີ່ສືບເອັດ:

- ຊື່ ແລະ ນາມສະກຸນ: ຈໍຊົ່ງ ບົວສີເນັ່ງມາ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: 01-18 005815, ລົງວັນທີ 05 ຕຸລາ 2018

ຜູ່ອຳນວຍການທີ່ມີອຳນາດເຊັນຜູກພັນບໍລິສັດ ແມ່ນ ທ່ານ ຫວັງເຫວີຍຄຸນ (Mr. WANG Weikun) ລົງລາຍເຊັນ ແລະ ປະທັບກາບໍລິສັດ ເພື່ອປະຕິບັດໜ້າທີ່ໃນນາມ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

2. ມາດຕາ 12. ສະພາບໍລິຫານ:

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຕົກລົງກ່ຽວກັບສະພາບໍລິຫານ ດັ່ງນີ້:

- (√) ມີສະພາບໍລິຫານນັບແຕ່ມື້ສ້າງຕັ້ງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ເຊິ່ງປະກອບດ້ວຍ:
- ປະທານສະພາບໍລິຫານ 1 ຄົນ ຄື: ທ່ານ ເຫີຈຸ່ນ (Mr. He Jun)
- ຮອງປະທານສະພາບໍລິຫານ 1 ຄົນ ຄື: ທ່ານ ນາງ ອໍລະໄທ ສັນຕິຄົງຄາ
- ສະມາຊິກສະພາບໍລິຫານ 9 ຄົນ ຄື: 1. ທ່ານ ບູລະພາ ສັນຕິຄົງຄາ(Yao Bin)
  2. ທ່ານ ຫວັງເຫວີຍຄຸນ (Mr. Wang Weikun)
  3. ທ່ານ ອູ ຊິງຫວາ (Mr. Wu Xinghua)
  4. ທ່ານ ເຊີ່ອນ ເຟີຍຫູ້ (Mr. Sun Feihu)
  5. ທ່ານ ຫຼໍ ສ້ຽວດົ່ງ (Mr. Luo Xiaodong)
  6. ທ່ານ ສ່ຽວ ໂຢງ (Mr. Xiao Yong) (ສະມາຊິກອິດສະລະ)
  7. ທ່ານ ຈ່າງ ທຽນຢີ້ (Mr. Zhang Tianyi) (ສະມາຊິກອິດສະລະ)
  8. ທ່ານ ວຽງສະຫວັນ ພັນທະລີ(ສະມາຊິກອິດສະລະ)
  9. ທ່ານ ຈໍຊົ່ງ ບົວສີເນັ່ງມາ(ສະມາຊິກອິດສະລະ)

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຢ່າງໜ້ອຍສອງສ່ວນສາມ(2/3)ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ, ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸເວງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

[ເອກະສານຄັດຕິດ 2]

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ: 011 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 11 MAY 2021

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020
ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

<u>ເວລາ ແລະ ສະຖານທີ່</u>

ກອງປະຊຸມຈັດຂຶ້ນໃນວັນທີ 30 ເມສາ 2021, ເວລາ: 14:00 ໂມງ ທີ່ຫ້ອງ Diamond ໂຮງແຮມແລນມາກ, ບ້ານທາດຂາວ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

<u>ການເປີດກອງປະຊຸມ</u>

ທ່ານ ຫຼີສຽວດິງ ຜູ້ອຳນວຍການໃຫຍ່ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ໄດ້ຮັບມອບສິດຈາກ ທ່ານ ນາງ ໂຈວເຫຼີຍ ປະທານສະພາບໍລິຫານໃຫ້ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2020 ໃນຄັ້ງນີ້ແທນ, ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ 19 ຈຶ່ງບໍ່ສາມາດມາຮ່ວມກອງປະຊຸມດັ່ງກ່າວໄດ້ດ້ວຍຕົວເອງ. ກອງປະຊຸມມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 11 ທ່ານ ແລະ ມອບສິດໃຫ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 04 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 15 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 143.534.200 ຮຸ້ນ ຫຼື ເທົ່າກັບ 97,51 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ.

ເລຂານຸການກອງປະຊຸມຈຶ່ງໄດ້ກ່າວຈຸດປະສົງ ແລະ ແຈ້ງໃຫ້ຜູ້ເຂົ້າຮ່ວມປະຊຸມຊາບກ່ຽວກັບລະບຽບການດຳເນີນກອງປະຊຸມ ແລະ ວິທີການລົງຄະແນນສຽງ, ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມໄດ້ພິຈາລະນາ ມີຄຳເຫັນ ແລະ ມີການຕົກລົງໃນແຕ່ວາລະດັ່ງນີ້:

ວາລະທີ1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

ປະທານກອງປະຊຸມໄດ້ມອບໃຫ້ເລຂານຸການກອງປະຊຸມເປັນຜູ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ແມ່ນເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງລຸ່ມນີ້:

1. ກອງປະຊຸມໄດ້ພິຈາລະນາແລະຮັບຮອງວາລະຄືດັ່ງລຸ່ມນີ້:

ວາລະທີ1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ1ປະຈຳປີ 2019;

ວາລະທີ2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ1ປະຈຳປີ 2019;

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງບໍລິສັດປະຈຳປີ 2019;

ວາລະທີ4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2019 ແລະ ແຜນການດຳເນີນທຸລະກິດປີ 2020;

ວາລະທີ5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2019 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ;

ວາລະທີ 6: ພິຈາລະນາ ແລະ ຮັບຮອງການຄັດເລືອກສະມາຊິກ ແລະ ປະທານສະພາບໍລິຫານສະໄໝທີ 2;

ວາລະທີ 7: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງວຈຊຕ.

ວາລະທີ8: ພິຈາລະນາ ແລະ ອະນຸມັດແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ.

ວາລະທີ9: ພິຈາລະນາ ແລະ ອະນຸມັດການປ່ຽນແທນຊັບຄ้ำປะกันແລะการต่ออายุการสัญญาเงินกู้.

ວາລະທີ10: ພິຈາລະນາ ແລະ ອະນຸມັດການສືບຕໍ່ວ່າຈ້າງບໍລິສັດເອີນແອນຢັ້ງລາວຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ.

ວາລະທີ 11: ພິຈາລະນາ ແລະ ອະນຸມັດການຄັດເລືອກສະມາຊິກຂອງຄະນະອຳນວຍການ ແລະ ຄະນະກຳມະການຕ່າງໆຂອງບໍລິສັດ

ວາລະທີ 12: ພິຈາລະນາ ແລະ ອະນຸມັດການຄັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ

2. ມະຕິຕັ້ງກ່າວແມ່ນໄດ້ມີການຈັດຕັ້ງປະຕິບັດໃຫ້ສຳເລັດແລ້ວນອກຈາກມະຕິຂອງວາລະທີ 8.

3. ສ່ວນມະຕິຂອງວາລະທີ 8ແມ່ນກຳລັງດຳເນີນການຢູ່ເນື່ອງຈາກວ່າຊັບສິນທີ່ມີເຈດຈຳນົງໃນການຮັບຊື້ນັ້ນ ແມ່ນເປັນລາຍການທີ່ກ່ຽວພັນ, ຕາມມະຕິວ່າໃຫ້ມີການປะเมินลาคาจากบໍລິสัดปะเมินมูลคาชับสิน ก่อน แล้วจึ่งมีการจัดตั้งปะติบัดติอจึงได้. ปะจุบันนี้ กำลังสะเพิลาคาชื้ให้ผู้ขายพิจาละนาอยู่ โดยอิงตามลาคาที่การปะเมิน.

ສຳລັບວາລະນີ້ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ ໂດຍບໍ່ມີການລົງຄະແນນສຽງ.

ວາລະທີ2 : ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

ປະທານກອງປະຊຸມໄດ້ມອບໃຫ້ເລຂານຸການກອງປະຊຸມເປັນຜູ້ລາຍງານບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ຂອງບໍລິສັດວຽງຈັນເຊັນເຕີລາວມະຫາຊົນ ປະຈຳປີ 2019 ເຊິ່ງໄດ້ຈັດຂຶ້ນໃນວັນທີ 29 ພຶດສະພາ 2020, ແລະບໍລິສັດໄດ້ ມີການເຮັດບົດບັນທຶກກອງປະຊຸມດັ່ງກ່າວ ລາຍລະອຽດໃນເອກະສານຄັດຕິດ 2 ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ໄດ້ເປີດເຜີຍ ບົດບັນທຶກກອງປະຊຸມດັ່ງກ່າວໃນເວັບໄຊ້ຂອງ ຕະຫຼາດຫຼັກຊັບລາວ ແລ້ວ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າ ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2020

ປະທານກອງປະຊຸມໄດ້ໄດ້ມອບໃຫ້ເລຂານຸການກອງປະຊຸມເປັນຜູ້ລາຍງານບົດລາຍງານການເງິນຂອງ ວຈຊຕ ປະ ຈຳປີ 2020 ແມ່ນໄດ້ຮັບການກວດສອບຢ່າງຖືກຕ້ອງຈາກບໍລິສັດ ເອັນແອນຢັ ງ ລາວຈຳກັດ ໂດຍມີລາຍລະອຽດໃນ ເອກະສານຄັດຕິດ 3 ທີ່ໄດ້ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການຮັບຮອງຈາກສະພາບໍລິຫານແລ້ວ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າ ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2020

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ແຜນການດຳເນີນທຸລະກິດປີ 2021

ເລຂານຸການກອງປະຊຸມໄດ້ລາຍງານໃຫ້ກອງປະຊຸມຊາບວ່າ:

ບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ແຜນການດຳເນີນທຸລະກິດປີ2021 ເຊິ່ງມີລາຍລະອຽດໃນເອກະສານຄັດຕິດ 4 ຂອງໜັງສືແຈ້ງເຊີນ

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ແຜນການດຳເນີນທຸລະກິດປີ 2021.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ແຜນການດຳເນີນທຸລະກິດປີ 2021

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ2020 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ

ເລຂານຸການກອງປະຊຸມໄດ້ລາຍງານແຜນການແບ່ງເງິນປັນຜົນໃຫ້ຊາບວ່າ:

ອີງຕາມກົດລະບຽບຂອງບໍລິສັດ, ສຳລັບການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ພາຍຫຼັງທີ່ໄດ້ຫັກກຳໄລສຸດທິ ແລະ ກຳໄລສະສົມເຂົ້າຄັງສຳຮອງໄວ້ຕາມກົດໝາຍ ແລະ ຄັງອື່ນໆ .

ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນປະຈຳປີ 2020 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນຕາມມື້ປິດປຶ້ມບັນຊີໃນວັນທີ 01 ເມສາ 2021 ໃນອັດຕາ12,5 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ1,839,998,750 ກີບ. ໃຫ້ຈ່າຍເງິນປັນຜົນພາຍໃນ 30 ມື້ ຫຼັງຈາກໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນແລ້ວ ແລະ ມອບໃຫ້ຜູ້ອຳນວຍການໃຫຍ່ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນວ່າພະຍາດໂຄວິດ-19ໄດ້ມີການແຜ່ລະບາດໃນທົ່ວໂລກຢ່າງໜັກໜ່ວງໃນຕົ້ນປີ 2020, ທາງລັດຖະບານລາວໄດ້ອອກຄຳສັ່ງໃຫ້ມີການໂຈະການຈັດກິດຈະກຳແລະສັ່ງປິດດ່ານສາກົນຊົ່ວຄາວ, ເຮັດໃຫ້ການຈັບຈ່າຍໃຊ້ສອຍຂອງປະຊາຊົນມີການຫຼຸດລົງແລະຈຳນວນຄົນເຂົ້າມາໃຊ້ບໍລິການຢູ່ຫ້າງກໍ່ມີການຫຼຸດລົງເຊັ້ນກັນ. ເພື່ອມີການປະກອບສ່ວນໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວທາງວຽງຈັນເຊັ້ນເຕີກໍໄດ້ມີການສັ່ງ

ໂຈະທຸລະກິດຂອງຫ້າງແລະໂຮງໜັງຊົ່ວຄາວເຮັດໃຫ້ລາຍໄດ້ຈາກກະແສເງິນສົດມີການຫຼຸດລົງ. ໃນປີ2021,ພະຍາດໂຄ ວິດ-19 ຍັງສືບຕໍ່ສົ່ງຜົນກະທົບຕໍ່ທຸລະກິດຂອງບໍລິສັດຢ່າງໜັກໜ່ວງ, ນະໂຍບາຍທີ່ໃຊ້ໃນປະຈຸບັນແລະອະນາຄົດທີ່ເປັນ ຊ່ວງໄລຍະໜຶ່ງແມ່ນການສະຫງວນເງິນສົດທີ່ສົມຄວນເພື່ອສະກັດກັ້ນພະຍາດໂຄວິດ-19 ດ້ານຄວາມສ່ຽງຕໍ່ການດຳເນີນ ທຸລະກິດຮັກສາຄວາມໝັ້ນຄົງຂອງທຸລະກິດແລະໃຫ້ມີການພັດທະນາຢ່າງຕໍ່ເໜື່ອງ. ແຕ່ເພື່ອສ້າງຜົນຕອບແທນໃຫ້ບັນດາຜູ້ ຖືຮຸ້ນທີ່ໝັ້ນໃຈຕໍ່ຈຈຸຕແລະສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນໃນຕະຫຼາດຫຼັກຊັບຈະມີການສະເໜີຈ່າຍເງິນປັນຜົນປະ ຈຳປີ 2020ໃນອັດຕາ 12,5 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 1.839.998.750 ກີບ, ປະມານ 28,87% ຂອງຜົນກຳໄລສຸດທິທີ່ຫັກອອກກຳໄລຂອງການປະເມີນມູນຄ່າຊັບສິນ.ແລະເຫັນດີສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາ ລະນາອະນຸມັດການຈ່າຍເງິນປັນຜົນດັ່ງກ່າວ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ.5 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າ ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2020 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ.

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາຮັບຮອງການຄັດເລືອກເພື່ອປັບປ່ຽນສະມາຊິກ ແລະ ປະທານສະພາບໍລິຫານສະໄໝທີ 2 ທີ່ລາ ອອກ

ເລຂານຸການກອງປະຊຸມໄດ້ລາຍງານໃຫ້ກອງປະຊຸມຊາບວ່າ:

ຍ້ອນວ່າມີການແຕ່ງຕັ້ງໄປຮັບຕຳແໜ່ງໃຫມ່, ສະມາຊິກສະພາບໍລິຫານສະໄໝທີ 2 ກໍຄືທ່ານເວີຍຫວາ (Mr. Wei Hua), ທ່ານ ນາງ ໂຈວເຫຼີ (Ms. Zhou Lei) ແລະ ທ່ານ ນາງ ເຕີ້ງຢູ່ (Ms. Deng Yu) ຈຶ່ງຂໍລາອອກຈາກຕຳ ແໜ່ງ. ຜ່ານການຄັດເລືອກຈາກຄະນະກຳມະການຄັດເລືອກສະເໜີລາຍຊື່ເພື່ອຄັດເລືອກມາແທນສະມາຊິກສະພາບໍລິຫານ ສະໄໝທີ 2 ທີ່ລາອອກດັ່ງລຸ່ມນີ້:

-ທ່ານຫວັ່ງເຫວີຍຄຸນ(Mr. WANG Weikun) ປະທານ

-ທ່ານຫຼໍ່ສ້ຽວດົ່ງ(Mr. LUO Xiaodong) ສະມາຊິກ

-ທ່ານຈ່າງທຽນຢີ(Mr. ZHANG Tianyi) ສະມາຊິກອິດສະລະ

ສ່ວນຊີວະປະຫວັດຫຍໍ້ຂອງແຕ່ລະທ່ານໄດ້ມີລາຍລະອຽດໃນເອກະສານຄັດຕິດ 5 ທີ່ໄດ້ຄັດຕິດພ້ອມກັບໜັງສື ແຈ້ງເຊີນ.

ນຶ່ອງຈາກວ່າບັນດາທ່ານທີ່ໄດ້ສະເໜີຂຶ້ນມາດັ່ງກ່າວຂ້າງເທິງນັ້ນແມ່ນມີຄຸນວຸດທິການສຶກສາສູງ, ມີຄວາມຮູ້ຄວາມສາມາດ, ມີປະສົບການໃນການດຳເນີນທຸລະກິດແທດເໝາະຕໍ່ຕຳແໜ່ງໃນການເປັນສະມາຊິກສະພາບໍລິຫານຂອງວາລະ ສະໄໝທີ 2, ອາຍຸການແມ່ນເທົ່າກັບອາຍຸການຂອງສະພາບໍລິຫານຂອງວາລະສະໄໝທີ 2 ທີ່ຍັງເຫຼືອ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ມີຜູ້ຖືຮຸ້ນມີຄຳຖາມໃນວາລະນີ້ ແລະ ການຊີ້ແຈງດັ່ງນີ້:

ຄຳຖາມຈາກພາກ່ວນບໍລິສັດຫຼັກຊັບລາວຈີນ: ທ່ານຈ່າງທຽນຢີ(Mr. ZHANG Tianyi) ເຊິ່ງເປັນຜູ້ທີ່ຖືກສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງ ເພື່ອແຕ່ງຕັ້ງເປັນສະມາຊິກອິດສະລະນັ້ນ ເພິ່ນໄດ້ມີທຸລະກິດທີ່ມີສ່ວນຮ່ວມກັບບໍລິສັດຫຼືບໍ່?

ທ່ານ ຫຼີສຽວດົ່ງ ,ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໄດ້ໃຫ້ການຊີ້ແຈງວ່າ: ທ່ານຈ່າງທຽນຢີ ບໍ່ມີທຸລະກິດໃດທີ່ມີສ່ວນຮ່ວມກັບບໍລິສັດ ບໍ່ແມ່ນບຸກຄົນທີ່ກ່ຽວພັນກັບການດຳເນີນທຸລະກິດຂອງບໍລິສັດ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງການປັບປ່ຽນສະມາຊິກ ແລະ ປະທານສະພາບໍລິຫານສະໄໝທີ 2 ທີ່ລາອອກ

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ການພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ

ເລຂານຸການກອງປະຊຸມໄດ້ລາຍງານໃຫ້ກອງປະຊຸມຊາບວ່າ:

ເນື່ອງຈາກວ່າທ່ານຫວັງເຫວີຍຄຸນ (Mr. WANG Weikun) ຂຶ້ນມາຮັບຕຳແໜ່ງເປັນປະທານສະພາບໍລິຫານ ສະໄໝທີ2, ອີງຕາມຄວາມຕ້ອງການໃນການຈັດຈັ້ງປະຕິບັດວຽກງານຕົວຈິງເຫັນວ່າມີຄວາມຈຳເປັນປ່ຽນຜູ້ຕາງໜ້ານິຕິບຸກຄົນໃນທະບຽນວິສາຫະກິດຈາກທ່ານນາງໂຈວເຫຼີ (Ms. Zhou Lei) ມາເປັນທ່ານຫວັງເຫວີຍຄຸນ (Mr. WANG Weikun).

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນໃນທະບຽນວິສາຫະກິດຈາກທ່ານ ນາງ ໂຈວເຫຼີ (Ms. Zhou Lei) ມາເປັນ ທ່ານ ຫວັງເຫວີຍຄຸນ (Mr. WANG Weikun)ຂອງ ວຈຊຕ

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8: ການພິຈາລະນາ ແລະ ອະນຸມັດການຂໍສິດເປັນຜູ້ພິຈາລະນາ ແລະ ຮັບຮອງເລື່ອງການຕໍ່ອາຍຸສັນຍາກູ້ຢືມຂອງ ວຈຊຕ

ເລຂານຸການກອງປະຊຸມໄດ້ລາຍງານໃຫ້ກອງປະຊຸມຊາບວ່າ:

ສັນຍາເງິນກູ້ລະຫວ່າງວຈຊຕ("ຜູ້ກູ້") ກັບ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອຈຳກັດ("ຜູ້ໃຫ້ກູ້")ຈະມີການໝົດອາຍຸໃນວັນທີ 29ພະຈິກ 2021, ເນື້ອໃນຕົ້ນຕໍຂອງສັນຍາດັ່ງກ່າວ ໂດຍສັງລວມມີດັ່ງນີ້:

1. ຈຳນວນເງິນກູ້: 64,232,500,000(ຫົກສິບສີ່ຕື້ສອງຮ້ອຍສາມສິບສອງລ້ານຫ້າແສນ) ກີບ;
2. ດອກເບ້ຍ: ດອກເບ້ຍເງິນກູ້ແມ່ນຄິດໄລ່ເປັນ3,5(ສາມຈຸດຫ້າ) ສ່ວນຮ້ອຍຕໍ່ປີຂອງຈຳນວນເງິນກູ້;
3. ວິທີການຊຳລະເງິນຄືນ: ເມື່ອເຖິງວັນຊຳລະເງິນຄືນ, ຜູ້ກູ້ມີພັນທະຊຳລະເງິນກູ້ແລະດອກເບ້ຍຄັ້ງດຽວ ໃຫ້ຜູ້ໃຫ້ກູ້ດ້ວຍການຊຳລະດ້ວຍເງິນສົດຫຼືຊຳລະດ້ວຍຮຸ້ນຂອງບໍລິສັດຜູ້ກູ້ຕາມລະບຽບການກ່ຽວຂ້ອງ;
4. ວັນໝົດອາຍຸສັນຍາກູ້ຢືມ: ວັນທີ 29 ພະຈິກ 2021;
5. ຫຼັກຊັບຄ้ຳປະກັນ:ອາຄານວຽງຈັນເຊັ້ນເຕີຈຳນວນ 51 ຫ້ອງ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນວ່າວັນໝົດອາຍຸສັນຍາເງິນກູ້ດັ່ງກ່າວແມ່ນບໍ່ແທດເໝາະຕໍ່ມື້ຈັດກອງປະຊຸມຜູ້ຖືຮຸ້ນແລະງົບການຈັດກອງປະຊຸມຜູ້ຖືຮຸ້ນກໍ່ບໍ່ແມ່ນເປັນເງິນໜ້ອຍ, ເພື່ອຕັດສິນເລື່ອງການຕໍ່ອາຍຸສັນຍາດັ່ງກ່າວໃຫ້ທັນເວລາແລະຖືກຕ້ອງຕາມລະບຽບການ, ຈຶ່ງສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອຂໍມອບສິດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາແລະຮັບຮອງເລື່ອງການຕໍ່ອາຍຸສັນຍາກູ້ຢືມດັ່ງດ່າວ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 8 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງການມອບສິດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາ ແລະ ຮັບຮອງເລື່ອງການຕໍ່ອາຍຸສັນຍາກູ້ຢືມຂອງ ວຈຊຕ

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ພິຈາລະນາ ແລະ ອະນຸມັດການວ່າຈ້າງບໍລິສັດກວດສອບບັນຊີໃຫ້ບໍລິສັດວຽງຈັນເຊັ້ນເຕີລາວມະຫາຊົນ

ເລຂານຸການກອງປະຊຸມໄດ້ລາຍງານໃຫ້ກອງປະຊຸມຊາບວ່າ:

ການວ່າຈ້າງບໍລິສັດ ເອີນແອນຢັ ລາວ ຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ, ໄລຍະການວ່າຈ້າງແມ່ນປີ 2021 ເຖິງ 2023, ຄ່າບໍລິການການກວດສອບແມ່ນ 31,000 ໂດລາ (ສາມໝື່ນໜຶ່ງພັນໂດລາຖ້ວນ)ຕໍ່ປີ, ຕາຕະລາງສົມທຽບລາຄາຈ້າງຜູ້ກວດສອບ ແມ່ນໃຫ້ເບິ່ງໃນວາລະທີ 9 ຂອງເອກະສານຄັດຕິດ 1 ຂອງໜັງສືແຈ້ງເຊີນ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນວ່າການວ່າຈ້າງບໍລິສັດເອີນແອນຢັງລາວຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດວຽງຈັນເຊັ້ນເຕີລາວມະຫາຊົນໃນປີ 2021 ເຖິງ 2023, ແມ່ນສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງຂອງຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ລາຄາຈ້າງຕໍ່ປີໄດ້ມີການລົດລົງ 3000ໂດລາ,ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 9 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງການວ່າຈ້າງບໍລິສັດ ເອີນແອນຢັ ລາວ ຈຳກັດ ເປັນ ບໍລິສັດກວດສອບບັນຊີໃຫ້ບໍລິສັດວຽງຈັນເຊັ້ນເຕີລາວມະຫາຊົນ

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 10: ການພິຈາລະນາ ແລະ ອະນຸມັດ ການຄັດເລືອກສະມາຊິກຄະນະກຳມະການຂອງບໍລິສັດຄົນໃຫມ່

ເລຂານຸການກອງປະຊຸມໄດ້ລາຍງານໃຫ້ກອງປະຊຸມຊາບວ່າ:

ຍ້ອນວ່າສະມາຊິກສະພາບໍລິຫານຂອງບໍລິສັດມີການແຕ່ງຕັ້ງຄົນໃຫມ່,ຈຶ່ງມີຄວາມຈຳເປັນຄັດເລືອກຕັ້ງສະມາຊິກໃໝ່ຂອງຄະນະກຳມະການທີ່ກ່ຽວຂ້ອງຂອງບໍລິສັດ ເຊິ່ງມີລາຍລະອຽດໃນວາລະທີ 10 ຂອງເອກະສານຄັດຕິດ 1 ຂອງໜັງສືແຈ້ງເຊີນ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 10 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງການຄັດເລືອກສະມາຊິກຄະນະກຳມະການຂອງບໍລິສັດຄົນໃຫມ່

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 11: ການພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ

ເລຂານຸການກອງປະຊຸມໄດ້ລາຍງານໃຫ້ກອງປະຊຸມຊາບວ່າ:

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດສອດຄ່ອງກັບການປ່ຽນແປງຜູ້ອຳນວຍການ ແລະ ສະມາຊິກສະພາບໍລິຫານຂອງບໍລິສັດ, ເຫັນວ່າມີຄວາມຈຳເປັນຕ້ອງດັດແກ້ເນື້ອໃນຂອງມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ເຊິ່ງມີລາຍລະອຽດໃນວາລະທີ 11 ຂອງເອກະສານຄັດຕິດ 1 ຂອງໜັງສືແຈ້ງເຊີນ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດ.

ຫຼັງຈາກໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 11 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ມີຜູ້ຖືຮຸ້ນມີຄຳຖາມໃນວາລະນີ້ແລະການຊີ້ແຈງດັ່ງນີ້:

ຄຳຖາມຈາກພາກສ່ວນບໍລິສັດຫຼັກຊັບລາວຈີນ: ກ່ຽວກັບເນື້ອໃນຂອງກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ, ເມື່ອຂ້າພະເຈົ້າໄດ້ອ່ານໜັງສືແຈ້ງເຊີນສະບັບພາສາອັງກິດ ເຫັນໂຕຄຳສັດ"ຜູ້ອຳນວຍການ" ໃນສະບັບພາສາອັງກິດ ແມ່ນແປເປັນວ່າ "director". ຕາມຄວາມເຂົ້າໃຈຂອງຂ້າພະເຈົ້າເອງ ຄຳສັດ"ຜູ້ອຳນວຍການ" ແມ່ນໝາຍຄວາມວ່າ ຜູ້ອຳນວຍການໃຫຍ່, ແຕ່ໃນໜັງສືແຈ້ງເຊີນສະບັບພາສາອັງກິດ ຄຳສັດ"ຜູ້ອຳນວຍການ"ແປເປັນວ່າ "director", ສະນັ້ນ ຂ້າພະເຈົ້າຄິດວ່າຄວາມໝາຍຄືຊິບໍ່ຕົງກັນ ຂໍສະເໜີໃຫ້ທາງທີມງານກະກຽມເອກະສານຊ່ວຍກວດກາຕື່ມອີກເບິ່ງໆ.

ທ່ານ ເຫຼຍຢ້າວຫ້າຍ , ເລຂານຸການສະພາບໍລິຫານໄດ້ໃຫ້ການຊີ້ແຈງວ່າ: ໃນຊ່ວງເວລາບໍລິສັດສ້າງຕັ້ງຂຶ້ນມານັ້ນ ທາງບໍລິສັດໄດ້ຈ້າງບໍລິສັດທີ່ປຶກສາດ້ານກົດໝາຍມາເປັນຜູ້ຮ່າງເນື້ອໃນກົດລະບຽບຂອງບໍລິສັດ, ຄຳສັດທີ່ໃຊ້ໃນກົດລະບຽບນັ້ນ ແມ່ນອີງຕາມກົດໝາຍວ່າດ້ວຍວິສາຫະກິດລາວ ສະບັບຫຼ້າສຸດ, ສຳລັບຄຳສັດ "ຜູ້ອຳນວຍການ"ນັ້ນ ໃນກົດໝາຍວ່າດ້ວຍວິສາຫະກິດລາວ ສະບັບພາສາອັງກິດ ແມ່ນແປເປັນວ່າ "director". ອີກຢ່າງໜຶ່ງ ກໍຂໍຂອບໃຈມາຍັງທ່ານຜູ້ຕັ້ງຄຳຖາມນັ້ນ ທີມງານກະກຽມເອ ກະສານກອງປະຊຸມ ຈະສືບຕໍ່ພະຍາຍາມສຶກສາຄົ້ນຄວ້າເລື່ອງການແປເອກະສານເຕີ່ມອີກ ເພື່ອສ້າງເນື້ອໃນເອກະສານໃຫ້ມີຄວາມຖືກຕ້ອງ ຄົບຖ້ວນ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມໄດ້ມີມະຕິດ້ວຍການລົງຄະແນນສຽງຈາກຜູ້ຖືຮຸ້ນທີ່ເຂົ້າກອງປະຊຸມດັ່ງນີ້:

ມະຕິ: ເຫັນດີຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ

- ເຫັນດີ 143.534.200 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ທ່ານປະທານກອງປະຊຸມໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບວ່າ ກອງປະຊຸມໄດ້ດຳເນີນຄົບຖ້ວນທຸກວາລະກອງປະຊຸມແລ້ວ ດັ່ງທີ່ໄດ້ກຳນົດໄວ້ໃນໜັງສືແຈ້ງເຊີນ ແລະໄດ້ສະເໜີໃຫ້ຜູ້ຖືຮຸ້ນປະກອບຄຳເຫັນອື່ນໆຕໍ່ ວຈຊຕ ແລະບໍ່ມີຜູ້ຖືຮຸ້ນປະກອບຄຳເຫັນ, ປະທານຈຶ່ງກ່າວປິດກອງປະຊຸມໃນເວລາ 15:00 ໂມງ.

ຜູ້ບັນທຶກ

ປະທານກອງປະຊຸມ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ: 025 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 10 OCT 2021

ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021
ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເວລາ ແລະ ສະຖານທີ່

ກອງປະຊຸມຈັດຂຶ້ນໃນວັນທີ 30 ກັນຍາ 2021, ເວລາ: 14:00 ໂມງ ທີ່ຫ້ອງປະຊຸມຊັ້ນ 2 ທີ່ສຳນັກງານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ການເປີດກອງປະຊຸມ

ທ່ານ ຫຼີສຽວດົ່ງ ສະມາຊິກສະພາບໍລິຫານ ຜູ້ອຳນວຍການໃຫຍ່ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ໄດ້ ຮັບມອບສິດຈາກ ທ່ານ ຫວັ່ງ ເຫວີຍຄຸນ ປະທານສະພາບໍລິຫານ ໃຫ້ເປັນປະທານກອງປະຊຸວິສາມັນຜູ້ຖືຮຸ້ນ ວຈຊຕ ຄັ້ງທີ 1/2021 ໃນຄັ້ງນີ້ແທນ, ເນື່ອງຈາກຕິດພາລະກິດບໍ່ສາມາດມາຮ່ວມກອງປະຊຸມດັ່ງກ່າວໄດ້ດ້ວຍຕົວເອງ. ກອງປະຊຸມມີຜູ້ ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 15 ທ່ານ ແລະ ມອບສິດໃຫ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 5 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 20 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 143.552.000 ຮຸ້ນ ຫຼື ເທົ່າກັບ 97,52 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ , ເລຂານຸການກອງປະຊຸມຈຶ່ງໄດ້ກ່າວຈຸດປະສົງ ແລະ ແນະນຳບັນດາສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ລາຍ ລະອຽດດັ່ງຕໍ່ໄປນີ້:

1. ທ່ານ ຫຼີສຽວດົ່ງ, ສະມາຊິກສະພາບໍລິຫານ ຜູ້ອຳນວຍການໃຫຍ່ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ;
2. ທ່ານ ອູຊິງຫວາ, ສະມາຊິກສະພາບໍລິຫານ, ປະທານເຈົ້າໜ້າທີ່ດ້ານປະຕິບັດການ (COO);
3. ທ່ານ ຫຼໍສ້ຽວດົ່ງ, ສະມາຊິກສະພາບໍລິຫານ
4. ທ່ານ ຈ່າງຫຽນຢີ້, ສະມາຊິກອິດສະຫຼະຂອງສະພາບໍລິຫານ;
5. ທ່ານ ຈໍຊິ່ງ ບິວສິເນັ່ງມາ, ສະມາຊິກອິດສະຫຼະຂອງສະພາບໍລິຫານ.
6. ທ່ານ ວຽງສະຫວັນ ພັນທະລີ, ສະມາຊິກອິດສະຫຼະຂອງສະພາບໍລິຫານ;

ພ້ອມດຽວກັນນີ້, ກໍຍັງມີຄະນະຕິດຕາມ ແລະ ປະເມີນ ການດຳເນີນກອງປະຊຸວິສາມັນຜູ້ຖືຮຸ້ນ ວຈຊຕ ຄັ້ງທີ 1/2021 ທີ່ເປັນຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບ ແລະ ຜູ້ຕາງໜ້

ຈາກຜູ້ຖືຮຸ້ນລາຍຍ່ອຍ.

ຫຼັງຈາກນັ້ນ ເລຂານຸການກອງປະຊຸມໄດ້ແຈ້ງໃຫ້ທີ່ປະຊຸມຊາບ ກ່ຽວກັບລະບຽບການດຳເນີນກອງປະຊຸມ ແລະວິທີການລົງຄະແນນສຽງ, ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມໄດ້ພິຈາລະນາ ມີຄຳເຫັນ ແລະມີການຕົກລົງໃນວາລະດັ່ງນີ້:

ວາລະ: ພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນ ທີ່ຍັງເຫຼືອ

ເລຂານຸການກອງປະຊຸມໄດ້ລາຍງານກ່ຽວກັບວາລະການປ່ຽນແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນ ທີ່ຍັງເຫຼືອ ດັ່ງລຸ່ມນີ້:

ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນຂອງ ວຈຊຕ ທັງໝົດແມ່ນເປັນຈຳນວນເງິນ 53.759.895.000 (ຫ້າສິບສາມຕື້ ເຈັດຮ້ອຍຫ້າສິບເກົ້າລ້ານ ແປດແສນ ເກົ້າສິບຫ້າພັນ)ກີບ. ໃນນັ້ນ ຈຳນວນເງິນ 30.198.788.739 (ສາມສິບຕື້ ໜຶ່ງຮ້ອຍເກົ້າສິບແປດລ້ານ ເຈັດແສນ ແປດສິບແປດພັນ ເຈັດຮ້ອຍ ສາມສິບເກົ້າກີບ)ກີບ ແມ່ນໃຊ້ໃນການຮັບຊື້ຊັບສິນ ໂດຍປະຕິບັດຕາມວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້, ສ່ວນທີ່ເຫຼືອແມ່ນເປັນຈຳນວນເງິນ 23.561.106.261 (ຊາວສາມຕື້ ຫ້າຮ້ອຍຫົກສິບອິດລ້ານ ໜຶ່ງແສນ ຫົກພັນ ສອງຮ້ອຍຫົກສິບອິດກີບ)ກີບ.

ປະຈຸບັນນີ້ ສັນຍາການກູ້ຢືມລະຫວ່າງ ວຈຊຕ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ (ຜູ້ໃຫ້ກູ້) ແມ່ນຈະໝົດອາຍຸໃນ 29 ພະຈິກ 2021, ແລະ ວຈຊຕ ຈະຕ້ອງຊຳລະເງິນກູ້ ແລະ ດອກເບ້ຍຄັ້ງດຽວໃຫ້ຜູ້ໃຫ້ກູ້ ຕາມຂໍ້ກຳນົດໃນສັນຍາເງິນກູ້.

ສະນັ້ນ ຈຶ່ງສະເໜີໃຫ້ພິຈາລະນາການປ່ຽນແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳ ໜ່າຍຮຸ້ນທີ່ຍັງເຫຼືອ ເຊິ່ງປ່ຽນຈາກ " ການຮັບຊື້ຊັບສິນ " ມາເປັນ " ການຊຳລະເງິນກູ້ ແລະ ດອກເບ້ຍໃຫ້ຜູ້ໃຫ້ກູ້ໂດຍອີງຕາມສັນຍາການກູ້ຢືມລະຫວ່າງ ວຈຊຕ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ"

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານເຫັນວ່າ ຍ້ອນໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ 19, ເຮັດໃຫ້ ການລົງທຶນພາຍໃນ ແລະ ຕ່າງປະເທດຂອງລາວ ແລະ ການບໍລິໂພກມີການຖອຍລົງ, ຂະແໜງການໃຫ້ເຊົ່າພື້ນທີ່ຫ້ອງການກໍມີການສຶດຕ່ຳຖອຍລົງຄືກັນ, ເຖິງແມ່ນວ່າທີມງານ ວຈຊຕ ໄດ້ມີການອອກແຮງຊຸກຍູ້ວຽກງານການຊອກຫາລູກຄ້າພາຍໃນປະເທດລາວກໍຕາມ ແຕ່ວ່າການເສີມສ້າງລາຍຮັບຍັງປະເຊີນສະພາບຄວາມຫຍຸ້ງ ຍາກຢູ່. ຍ້ອນວ່າສະພາບແວດລ້ອມຂອງການດຳເນີນທຸລະກິດຍັງສັບສົນຫຼາຍ ຄະນະອຳນວຍການຈຶ່ງຕົກລົງກັນວ່າໃຫ້ປັບປ່ຽນຍຸດທະສາດການດຳເນີນທຸລະກິດ: ຫຼຸດການລົງທຶນຕໍ່ພາຍນອກໃຫ້ໜ້ອຍລົງ ຮັກສາລູກຄ້າທີ່ມີຢູ່ໃຫ້ໝັ້ນຄົງ ເພີ່ມຄວາມສາມາດໃນການບໍລິການຂອງຕົນ ຍົກສູງປະສິດທິພາບໃນການນຳໃຊ້ທຶນເພື່ອເສີມສ້າງຄວາມສາມາດໃນການຄຸມຄອງຄວາມສ່ຽງຂອງຕົນ ຫຼຸດຜ່ອນຄ່າໃຊ້ຈ່າຍຂອງບໍລິສັດ ຕົກລົງກັນວ່າຈະຊຳລະເງິນກູ້ບາງສ່ວນຂອງບໍລິສັດ. ໂດຍສັງລວມປັດໃຈດັ່ງກ່າວແລ້ວ ສະພາບໍລິຫານຈຶ່ງເຫັນ

ດີການປ່ຽນ ແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນທີ່ຍັງເຫຼືອ ກໍຄືຈາກ " ການຮັບຊື້ຊັບ ສິນ " ປ່ຽນເປັນ " ການຊຳລະເງິນກູ້ ແລະ ດອກເບ້ຍໃຫ້ຜູ້ໃຫ້ກູ້ໂດຍອີງຕາມສັນຍາການກູ້ຢືມລະຫວ່າງ ວຈຊຕ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ", ແລະເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ແລະ ຮັບຮອງ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ. ຍ້ອນວ່າ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ເປັນຜູ້ທີ່ກ່ຽວພັນຂອງວາລະນີ້ ສະນັ້ນ ຜູ້ຕາງໜ້າຜູ້ຖືຮຸ້ນດັ່ງກ່າວ ແມ່ນບໍ່ມີສິດໃນການລົງຄະແນນສຽງ.

ຫຼັງຈາກເລຂານຸການກອງປະຊຸມໄດ້ລາຍງານລາຍລະອຽດກ່ຽວກັບວາລະແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ , ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ມະຕິ: ເຫັນດີຮັບຮອງການປ່ຽນແປງວັດຖຸປະສົງການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳ ໜ່າຍຮຸ້ນທີ່ຍັງເຫຼືອ ເຊິ່ງປ່ຽນຈາກ " ການຮັບຊື້ຊັບສິນ " ມາເປັນ " ການຊຳລະເງິນກູ້ ແລະ ດອກເບ້ຍໃຫ້ຜູ້ໃຫ້ກູ້ໂດຍອີງຕາມສັນຍາການກູ້ຢືມລະຫວ່າງ ວຈຊຕ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ"

- ເຫັນດີຈຳນວນ 47.552.800 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ.
- ບໍ່ເຫັນດີຈຳນວນ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ.

ທ່ານປະທານກອງປະຊຸມໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 14:30ໂມງຂອງວັນດຽວກັນ.

ຜູ້ບັນທຶກ	ປະທານກອງປະຊຸມ
(MR.LEI YAOHAI)	(MR.LI XIAODONG)

[ເອກະສານຄັດຕິດ 3]

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານນັກກວດສອບອິດສະຫຼະ	4 - 7
ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ	8
ໃບລາຍງານຖານະການເງິນ	9 - 10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	11
ໃບລາຍງານກະແສເງິນສົດ	12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 – 43

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 1169/ຈຫວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າແຫ່ງ ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງລ່າສຸດ ເລກທີ 1374/ຈຫວ ລົງວັນທີ 25 ສິງຫາ 2021 ເຊິ່ງອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າແຫ່ງ ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາອຳນວຍການ

ສະມາຊິກຂອງສະພາອຳນວຍການພາຍໃນປີ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	
ທ່ານ ຫວັ່ງ ເຫວີຍຄຸນ	ປະທານ	ແຕ່ງຕັ້ງວັນທີ 30 ເມສາ 2021
ທ່ານ ນາງ ໂຈວ ເລີຍ	ປະທານ	ລາອອກວັນທີ 30 ເມສາ 2021
ທ່ານ ນາງ ອໍລະໄທ ສັນຕິຄົງຄາ	ຮອງປະທານ	
ທ່ານ ຫຼີ ສ່ຽວຕົ໋ງ	ສະມາຊິກ	
ທ່ານ ເວີ້ຍ ຫົວ	ສະມາຊິກ	ລາອອກວັນທີ 30 ເມສາ 2021
ທ່ານ ໂຫຼວ ສ່ຽວຕົ໋ງ	ສະມາຊິກ	ແຕ່ງຕັ້ງວັນທີ 30 ເມສາ 2021
ທ່ານ ບຸລະພາ ສັນຕິຄົງຄາ	ສະມາຊິກ	
ທ່ານ ອຸ ຊິ໋ງຫົວ	ສະມາຊິກ	
ທ່ານ ຊຸນ ເຟີ່ຍ ຫູ	ສະມາຊິກ	
ທ່ານ ນາງ ເຕົ໋ງ ຢຸ	ສະມາຊິກ	ລາອອກວັນທີ 30 ເມສາ 2021
ທ່ານ ຈາງ ທຽນອີ້	ສະມາຊິກ	ແຕ່ງຕັ້ງວັນທີ 30 ເມສາ 2021
ທ່ານ ສ່ຽວ ໂຢງ	ສະມາຊິກ	
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ	
ທ່ານ ຈໍສິ໋ງ ບົວສີເບ້ັ້ງມາ	ສະມາຊິກ	

ຂໍ້ມູນທົ່ວໄປ (ຕໍ່)

ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ ຫຼີ ສ່ຽວຕົງ	ຜູ້ອຳນວຍການໃຫຍ່
ທ່ານ ຊຸນ ເຜີຍ ຫຸ	ຜູ້ອຳນວຍການ
ທ່ານ ອຸ ຊິງຫົວ	ຜູ້ອຳນວຍການ

ຄະນະກຳມະການກວດສອບ

ສະມາຊິກຂອງຄະນະກຳມະການກວດສອບພາຍໃນປີ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	
ທ່ານ ຫຼີ ສ່ຽວຕົງ	ຫົວໜ້າ	ແຕ່ງຕັ້ງວັນທີ 30 ເມສາ 2021
ທ່ານ ນາງ ເຕີ້ງ ຢຸ່	ຫົວໜ້າ	ລາອອກວັນທີ 30 ເມສາ 2021
ທ່ານ ນາງ ໂຈ ເລ່	ສະມາຊິກ	ລາອອກວັນທີ 30 ເມສາ 2021
ທ່ານ ຈໍສິ່ງ ບິວສິເນັ່ງມາ	ສະມາຊິກ	ແຕ່ງຕັ້ງວັນທີ 30 ເມສາ 2021
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ	

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດສຳລັບໄລຍະແຕ່ວັນທີ 1 ມັງກອນ 2021 ຫາວັນທີ 30 ເມສາ 2021 ແມ່ນ ທ່ານ ນາງ ໂຈ ເລ່ - ປະທານ ແລະ ສຳລັບໄລຍະແຕ່ວັນທີ 30 ເມສາ 2021 ຮອດມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ຫວັ່ງ ເຫວີຍຄຸນ - ປະທານ.

ທ່ານ ຫຼີ ສ່ຽວຕົງ ໄດ້ຮັບອະນຸຍາດເຊັນເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ໂດຍອີງຕາມໃບອະນຸຍາດ ລົງວັນທີ 1 ພະຈິກ 2017.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນ ແອນ ຢັ້ງ ລາວ ຈຳກັດ.

ຄະນະບໍລິຫານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີສະເໜີບົດລາຍງານ ແລະ ເອກະສານລາຍງານ ການເງິນຂອງບໍລິສັດສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021.

ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນຂອງແຕ່ລະປີໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທຳ ສຳລັບໃບລາຍງານຖານະການເງິນຂອງບໍລິສັດ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດພາຍໃນປີ, ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານຂອງບໍລິສັດຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົານັບດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່ານັບດານດ້ານຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ຫາກມີການເປີດເຜີຍຂໍ້ມູນທີ່ສຳຄັນ ແລະ ໄດ້ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຄາດຄະເນວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງເໝາະສົມ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງບໍລິສັດຢ່າງຖືກຕ້ອງໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນແມ່ນໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ຕາງໜ້າຄະນະບໍລິຫານ:

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ທ່ານ ຫຼີ ສ່ຽວຕົ້ງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

6 ເມສາ 2022

Ernst & Young Lao Co., Ltd
8th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 12819416/22726483

ບົດລາຍງານນັກກວດສອບອິດສະຫຼະ

ເຖິງ: ຂາຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ"), ເຊິ່ງ ປະກອບດ້ວຍ ໃບລາຍງານຖານະການເງິນນະວັນທີ 31 ທັນວາ 2021, ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານ ນອກການທຸລະກິດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດສຳລັບປີທີ່ສິ້ນສຸດ, ແລະ ບົດອະທິບາຍ ຊ້ອນທ້າຍເອກະສານລາຍງານການເງິນ ພ້ອມທັງສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ("ເອກະສານລາຍງານການເງິນ").

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນແມ່ນໄດ້ຖືກກະກຽມໂດຍຖືກຕ້ອງຕາມຄວາມເປັນຈິງ, ສອດຄ່ອງກັບ ນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ. ບັນດາຄວາມຮັບຜິດຊອບຂອງ ພວກຂ້າພະເຈົ້າທີ່ໄດ້ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນຫົວ *ຄວາມຮັບຜິດຊອບຂອງນັກກວດ ສອບໃນການກວດສອບເອກະສານລາຍງານການເງິນ* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບ ກົດຈັນຍາບັນວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງຈັນຍາບັນທີ່ກ່ຽວຂ້ອງກັບການ ກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມ ຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານ ສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນ ພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ກ່ຽວກັບບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍກ່ຽວກັບ ນະໂຍບາຍການບັນຊີທີ່ນຳໃຊ້ໂດຍບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນການດຳເນີນ ງານ ແລະ ກະແສເງິນສົດຂອງບໍລິສັດ ໂດຍອີງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

ບັນຫາການກວດສອບທີ່ສຳຄັນ

ໃນການຕັດສິນໃຈໃນແບບມືອາຊີບຂອງພວກຂ້າພະເຈົ້າ ບັນຫາການກວດສອບຫຼັກແມ່ນບັນຫາທີ່ມີຄວາມສຳຄັນທີ່ສຸດໃນການກວດ ສອບເອກະສານລາຍງານການເງິນຂອງໄລຍະປັດຈຸບັນ. ບັນຫາເຫຼົ່ານີ້ແມ່ນຖືກນຳສະເໜີໃນເນື້ອໃນຂອງການກວດສອບເອກະສານລາຍ ງານການເງິນໂດຍທັງໝົດ ແລະ ໃນການປະກອບຄຳເຫັນຂອງພວກຂ້າພະເຈົ້າ ແລະ ພວກຂ້າພະເຈົ້າບໍ່ໄດ້ໃຫ້ຄຳຄິດເຫັນແບບແຍກກ່ຽວ ກັບບັນຫາເຫຼົ່ານີ້. ສຳລັບແຕ່ລະບັນຫາຂ້າງລຸ່ມນີ້, ຄຳອະທິບາຍກ່ຽວກັບວິທີການກວດສອບຂອງພວກຂ້າພະເຈົ້າໃນການແກ້ໄຂບັນຫາ ດັ່ງກ່າວແມ່ນຖືກນຳສະເໜີຢູ່ໃນບົດລາຍງານນີ້.

A member firm of Ernst & Young Global Limited

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນ *ຄວາມຮັບຜິດຊອບຂອງຜູ້ກວດສອບໃນການກວດສອບເອກະສານລາຍງານການເງິນ* ໃນບົດລາຍງານຂອງພວກຂ້າພະເຈົ້າ ລວມເຖິງສິ່ງທີ່ກ່ຽວຂ້ອງກັບບັນຫາເຫຼົ່ານີ້. ດັ່ງນັ້ນ, ການກວດສອບຂອງພວກຂ້າພະເຈົ້າຈຶ່ງລວມເຖິງການປະຕິບັດຕາມຂະບວນການທີ່ໄດ້ຖືກອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງໃນເອກະສານລາຍງານການເງິນ. ຜົນໄດ້ຮັບຈາກຂັ້ນຕອນໃນການກວດສອບຂອງພວກຂ້າພະເຈົ້າໄດ້ໃຫ້ພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

ການຮັບຮູ້ລາຍຮັບ

ເນື່ອງຈາກລັກສະນະຂອງທຸລະກິດ, ບໍລິສັດມີລາຍຮັບຫຼາຍປະເພດ ແລະ ລາຍຮັບຈາກການດຳເນີນງານອື່ນໆ ເຊັ່ນ ລາຍຮັບຄ່າເຊົ່າຈາກຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ, ຄ່າເຊົ່າປ້າຍໂຄສະນາ ແລະ ການຈັດງານສັງສັນຕ່າງໆ, ສ່ວນແບ່ງລາຍຮັບຈາກສັນຍາການຮ່ວມທຸລະກິດທັງໝົດແມ່ນ 9,077,518,440 ກີບ ພາຍໃນປີ. ມີຄວາມສ່ຽງທີ່ອາດເຮັດໃຫ້ເກີດຂໍ້ຜິດພາດອັນໃຫຍ່ຫຼວງດ້ານການເກີດຂຶ້ນຈິງ, ຄວາມຄົບຖ້ວນ ແລະ ການຕັດຍອດລາຍຮັບ ແລະ ລາຍຮັບອື່ນໆຈາກການດຳເນີນງານ. ພວກຂ້າພະເຈົ້າພິຈາລະນາການຮັບຮູ້ລາຍຮັບ ແລະ ລາຍຮັບອື່ນໆຈາກການດຳເນີນງານ ເປັນສິ່ງທີ່ສຳຄັນໃນການກວດສອບ, ເນື່ອງຈາກ (ກ) ຂະບວນການຮຽກເກັບເງິນມີຄວາມຊັບຊ້ອນ (ຂ) ຮອບວຽນໃນການຮຽກເກັບເງິນອາດບໍ່ກົງກັບການປິດບັນຊີໃນທ້າຍປີ ແລະ ຜົນກະທົບທີ່ເກີດຂຶ້ນອາດຈະໃຫຍ່ຫຼວງຕໍ່ກຳໄລ ຫຼື ຂາດທຶນພາຍໃນປີ. ນອກຈາກການທົດສອບການຄວບຄຸມທີ່ບໍລິສັດກຳນົດໄວ້ກ່ຽວກັບຂະບວນການຂອງບໍລິສັດວ່າຖືກຕ້ອງເພື່ອໃຫ້ໝັ້ນໃຈວ່າ ການເກີດຂຶ້ນຈິງ ແລະ ການຮັບຮູ້ລາຍຮັບດັ່ງກ່າວເປັນໄປຕາມກຳນົດເວລາ, ຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າລວມເຖິງການທົດສອບຈາກການສຸ່ມເລືອກຕົວຢ່າງ ເພື່ອໃຫ້ໝັ້ນໃຈວ່າທຸລະກຳລາຍຮັບນັ້ນໄດ້ຖືກຍອມຮັບຈາກເອກະສານທີ່ກ່ຽວຂ້ອງ ແລະ ຮັບຮູ້ໃນໄລຍະເວລາທີ່ເໝາະສົມ. ນະໂຍບາຍການບັນຊີສຳລັບການຮັບຮູ້ລາຍຮັບແມ່ນຖືກນຳສະເໜີຢູ່ໃນບົດອະທິບາຍເລກທີ 3.12 ແລະ 3.14, ການເປີດເຜີຍລາຍລະອຽດກ່ຽວກັບລາຍຮັບຂອງບໍລິສັດແມ່ນຖືກນຳສະເໜີຢູ່ໃນບົດອະທິບາຍເລກທີ 4.

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ

ບໍລິສັດ ບັນທຶກບັນຊີຊັບສິນເພື່ອການລົງທຶນ ໂດຍນຳໃຊ້ວິທີແບບມູນຄ່າຍຸຕິທຳ. ນະວັນທີ 31 ທັນວາ 2021, ມູນຄ່າຕາມບັນຊີຂອງຊັບສິນເພື່ອການລົງທຶນຂອງບໍລິສັດແມ່ນ 195,659,520,000 ກີບ ຫຼື ເທົ່າກັບ 97.7% ຂອງຊັບສິນລວມຂອງບໍລິສັດ. ພວກຂ້າພະເຈົ້າພິຈາລະນາວ່າ ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ ເປັນບັນຫາການກວດສອບທີ່ສຳຄັນ ເນື່ອງຈາກວ່າ: (ກ) ຜົນກະທົບຂອງການດັດແກ້ມູນຄ່າຍຸຕິທຳທັງໝົດມີຜົນສະທ້ອນສຳຄັນຕໍ່ກຳໄລ ຫຼື ຂາດທຶນພາຍໃນປີ, ແລະ (ຂ) ຂະບວນການປະເມີນຊັບສິນເພື່ອການລົງທຶນຕ້ອງມີການຕຳນິຢ່າງຮອບຄອບ ໃນການພິຈາລະນາວິທີການປະເມີນມູນຄ່າທີ່ເໝາະສົມ ມີການຕຳນວນທີ່ຊັບຊ້ອນເຊິ່ງກ່ຽວຂ້ອງກັບການຄາດຄະເນ, ສົມມຸດຖານ ແລະ ຂໍ້ມູນເຊັ່ນ: ອັດຕາຄ່າເຊົ່າ, ອັດຕາການເຊົ່າ, ອັດຕາສ່ວນຫຼຸດ ແລະ ອັດຕາການເຕີບໂຕເຊິ່ງຂຶ້ນຢູ່ກັບປັດໃຈພາຍນອກ ແລະ ພາຍໃນທີ່ປະເມີນໂດຍຜູ້ບໍລິຫານ. ດັ່ງນັ້ນ, ຂະບວນການກວດສອບຂອງພວກຂ້າພະເຈົ້າລວມເຖິງການມີສ່ວນຮ່ວມຂອງຜູ້ຊ່ຽວຊານພາຍໃນຂອງພວກຂ້າພະເຈົ້າໃນການປະເມີນວິທີການ ແລະ ສົມມຸດຖານ ທົບທວນຄືນການນຳໃຊ້ສົມມຸດຖານ ແລະ ການຄາດຄະເນທີ່ໃຊ້ໃນການປະເມີນລາຄາໂດຍຜູ້ບໍລິຫານ ແລະ ຜູ້ປະເມີນລາຄາຂອງບໍລິສັດ ແລະ ປະເມີນຄວາມພຽງພໍຂອງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນໃນການປະເມີນມູນຄ່າຂອງຊັບສິນເພື່ອການລົງທຶນ. ນະໂຍບາຍການບັນຊີທີ່ກ່ຽວຂ້ອງ ແລະ ການປຶກສາຫາລືກ່ຽວກັບການໃຊ້ການຕັດສິນ ແລະ ການຄາດຄະເນທີ່ສຳຄັນແມ່ນໄດ້ຖືກນຳສະເໜີຢູ່ໃນບົດອະທິບາຍເລກທີ 2.2 ແລະ 3.5 ແລະ ການເປີດເຜີຍລາຍລະອຽດກ່ຽວກັບຊັບສິນເພື່ອການດຳເນີນງານແມ່ນຖືກນຳສະເໜີຢູ່ໃນບົດອະທິບາຍເລກທີ 12.

A member firm of Ernst & Young Global Limited

EY
Building a better working world

ຄວາມຮັບຜິດຊອບຂອງຄະນະບໍລິຫານ ແລະ ຄະນະຄຸ້ມຄອງກ່ຽວກັບເອກະສານລາຍງານການເງິນ

ຄະນະບໍລິຫານແມ່ນມີໜ້າທີ່ຮັບຜິດຊອບໃນການສ້າງເອກະສານລາຍງານການເງິນໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ ໃນ ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ແລະ ບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າມີຄວາມຈຳເປັນເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານບໍລິສັດຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານບໍລິສັດ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄະນະຄຸ້ມຄອງແມ່ນມີໜ້າທີ່ຮັບຜິດຊອບໃນການຄວບຄຸມຂັ້ນຕອນການສ້າງເອກະສານລາຍງານການເງິນຂອງບໍລິສັດ.

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບ ລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ, ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິດໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນຄວາມສືບເນື່ອງໃນການດຳເນີນທຸລະກິດ.ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດ

A member firm of Ernst & Young Global Limited

EY
Building a better working world

- ກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຍຸຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະຄຸ້ມຄອງບໍລິສັດກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກພ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າຍັງໄດ້ໃຫ້ຄຳຖະແຫຼງການກັບຄະນະຄຸ້ມຄອງຂອງບໍລິສັດວ່າພວກຂ້າພະເຈົ້າໄດ້ປະຕິບັດຕາມຂໍ້ກຳນົດທາງຈັນຍາບັນທີ່ກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ມີການສື່ສານກັບຄະນະຄຸ້ມຄອງກ່ຽວກັບລາຍການເຄື່ອນໄຫວທັງໝົດທີ່ກ່ຽວຂ້ອງ ແລະ ບັນຫາອື່ນໆທີ່ສົມເຫດສົມຜົນທີ່ຄາດວ່າຈະຮັບເອົາຄວາມເປັນອິດສະຫຼະຂອງພວກຂ້າພະເຈົ້າ ແລະ ການປ້ອງກັນຫາກມີ

ຈາກກໍລະນີໃນການສື່ສານກັບຄະນະບໍລິຫານ, ພວກຂ້າພະເຈົ້າພິຈາລະນາສິ່ງເຫຼົ່ານັ້ນເປັນບັນຫາທີ່ສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນໃນໄລຍະປັດຈຸບັນ ແລະ ເປັນບັນຫາທີ່ສຳຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍເຫດການເຫຼົ່ານີ້ໃນບົດລາຍງານຂອງພວກຂ້າພະເຈົ້າ ເວັ້ນເສຍແຕ່ກົດໝາຍ ຫຼື ຂໍ້ບັງຄັບບໍ່ອະນຸຍາດໃຫ້ເປີດເຜີຍຕໍ່ມວນຊົນ ຫຼື ເມື່ອໃນສະຖານະການທີ່ບໍ່ຄ່ອຍເກີດຂຶ້ນ ພວກຂ້າພະເຈົ້າຕັດສິນໃຈວ່າບັນຫາເຫຼົ່ານັ້ນບໍ່ຄວນສື່ສານລົງໃນບົດລາຍງານເພາະອາດຈະເກີດຜົນກະທົບດ້ານລົບຈາກການກະທຳນັ້ນໆ ຫຼາຍກວ່າຜົນປະໂຫຍດຕໍ່ມວນຊົນກ່ຽວກັບການສື່ສານດັ່ງກ່າວ.

ບໍລິສັດ
ເອິນ ແອນ ຢັ
ລາວ ຈຳກັດ
ERNST & YOUNG
LAO CO.,LTD

ແອ່ງ ຫວ ຈິ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

6 ເມສາ 2022

A member firm of Ernst & Young Global Limited

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ*	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ລາຍຮັບ	4	7,795,989,507	9,089,266,191
ລາຍຮັບອື່ນໆຈາກການດຳເນີນງານ		1,281,528,933	1,908,146,302
ລາຍຮັບລວມ		**9,077,518,440**	**10,997,412,493**
ລາຍຈ່າຍຈາກການດຳເນີນງານ	5	(2,168,144,303)	(846,240,739)
ກຳໄລຈາກການຕີມູນຄ່າຊັບສິນເພື່ອການລົງທຶນ	12	1,534,358,840	1,474,216,851
ກຳໄລຈາກການດຳເນີນງານ		**8,443,732,977**	**11,625,388,605**
ລາຍຮັບທາງການເງິນ	6	2,797,136,009	1,701,290,218
ລາຍຈ່າຍທາງການເງິນ	7	(1,704,837,604)	(2,291,851,284)
ກຳໄລກ່ອນອາກອນ		**9,536,031,382**	**11,034,827,539**
ລາຍຈ່າຍອາກອນກຳໄລ	8	(1,493,636,087)	(1,533,588,364)
ກຳໄລພາຍໃນປີ		**8,042,395,295**	**9,501,239,175**
ລາຍຮັບອື່ນໆນອກການທຸລະກິດພາຍໃນປີ, ອາກອນສຸດທິ		-	-
ລວມລາຍຮັບນອກການທຸລະກິດພາຍໃນປີ, ອາກອນສຸດທິ		**8,042,395,295**	**9,501,239,175**
ກຳໄລຕໍ່ຮຸ້ນ			
- *ພື້ນຖານກຳໄລພາຍໃນປີຂອງຜູ້ຖືຮຸ້ນສາມັນ*	*20*	*54.64*	*64.55*

ກະກຽມໂດຍ:

孙飞虎

ທ່ານ ຊຸນ ເຟີ ຫູ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ້ງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

6 ເມສາ 2022

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	31 ທັນວາ 2021 ກີບ	31 ທັນວາ 2020 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ	9	3,384,656,995	22,497,520,522
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	10	807,835,094	30,878,284,709
ຈ່າຍລ່ວງໜ້າສຳລັບຊື້ຊັບສິນບັດຄົງທີ່	11	-	10,000,000,000
ລວມຊັບສິນໝຸນວຽນ		**4,192,492,089**	**63,375,805,231**
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ	12	195,659,520,000	194,125,161,160
ຊັບສິນບັດຄົງທີ່ມີຕົວຕົນ		325,019,848	4,561,085
ລວມຊັບສິນບໍ່ໝຸນວຽນ		**195,984,539,848**	**194,129,722,245**
ລວມຊັບສິນ		**200,177,031,937**	**257,505,527,476**

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	31 ທັນວາ 2021 ກີບ	31 ທັນວາ 2020 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະສັ້ນ	13	6,842,806,011	5,349,436,856
ລວມໜີ້ສິນໝຸນວຽນ		**6,842,806,011**	**5,349,436,856**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະຍາວ	13	4,429,029,065	6,643,543,597
ເງິນກູ້ຢືມໄລຍະຍາວ	14	-	64,232,500,000
ອາກອນລໍຖ້າຊຳລະສະສາງດ້ານໜີ້ສິນ	8	7,611,631,316	6,188,878,021
ລວມໜີ້ສິນບໍ່ໝຸນວຽນ		**12,040,660,381**	**77,064,921,618**
ລວມໜີ້ສິນ		**18,883,466,392**	**82,414,358,474**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	15	147,199,900,000	147,199,900,000
ສ່ວນເກີນມູນຄ່າຮຸ້ນ		2,559,995,000	2,559,995,000
ຄັງແຮຕາມລະບຽບການ		3,530,787,599	2,726,548,069
ຄັງແຮເພື່ອຂະຫຍາຍທຸລະກິດ		3,530,787,599	2,726,548,069
ກຳໄລສະສົມ		24,472,095,347	19,878,177,864
ລວມທຶນ		**181,293,565,545**	**175,091,169,002**
ລວມໜີ້ສິນ ແລະ ທຶນ		**200,177,031,937**	**257,505,527,476**

ກະກຽມໂດຍ:

孙飞虎

ທ່ານ ຊຸນ ເຟີ ຫູ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ໋ງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

6 ເມສາ 2022

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ *ກີບ*	*ສ່ວນເກີນມູນຄ່າຮຸ້ນ* *ກີບ*	*ຄັງແຮຕາມລະບຽບການ* *ກີບ*	*ຄັງແຮເພື່ອຂະຫຍາຍທຸລະກິດ* *ກີບ*	*ກຳໄລສະສົມ* *ກີບ*	*ລວມທັງໝົດ* *ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2020	**147,199,900,000**	**2,559,995,000**	**1,776,424,152**	**1,776,424,152**	**14,211,393,210**	**167,524,136,514**
ກຳໄລສຸດທິພາຍໃນປີ	-	-	-	-	9,501,239,175	9,501,239,175
ຈ່າຍເງິນປັນຜົນ					(1,934,206,687)	(1,934,206,687)
ຈັດສັນກຳໄລເຂົ້າຄັງແຮ	-	-	950,123,917	950,123,917	(1,900,247,834)	-
ຍອດເຫຼືອນະວັນທີ 31 ທັນວາ 2020	**147,199,900,000**	**2,559,995,000**	**2,726,548,069**	**2,726,548,069**	**19,878,177,864**	**175,091,169,002**
ຍອດເຫຼືອນະວັນທີ 1 ມັງກອນ 2021	**147,199,900,000**	**2,559,995,000**	**2,726,548,069**	**2,726,548,069**	**19,878,177,864**	**175,091,169,002**
ກຳໄລສຸດທິພາຍໃນປີ	-	-	-	-	8,042,395,295	8,042,395,295
ຈ່າຍເງິນປັນຜົນ	-	-	-	-	(1,839,998,752)	(1,839,998,752)
ຈັດສັນກຳໄລເຂົ້າຄັງແຮ	-		804,239,530	804,239,530	(1,608,479,060)	-
ຍອດເຫຼືອນະວັນທີ 31 ທັນວາ 2021	**147,199,900,000**	**2,559,995,000**	**3,530,787,599**	**3,530,787,599**	**24,472,095,347**	**181,293,565,545**

ກະກຽມໂດຍ:

ທ່ານ ຊຸນ ເຜີຍ ຫູ
ຜູ້ຈັດການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ
6 ເມສາ 2022

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕິງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ*	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**9,536,031,382**	**11,034,827,539**
ລາຍການດັດແກ້ສຳລັບ:			
ການຫັກຄ່າຫຼຸ້ຍຫ້ຽນພາຍໃນປີ		24,086,692	1,023,915
ຄ່າເສື່ອມມູນຄ່າຂອງໜີ້ສົງໄສ		-	171,444,970
ກຳໄລຈາກການຕີມູນຄ່າໃນຊັບສິນເພື່ອການລົງທຶນ	12	(1,534,358,840)	(1,474,216,851)
ລາຍຈ່າຍດອກເບ້ຍ	7	1,704,837,604	2,291,851,284
ລາຍການດັດແກ້ທຶນໝຸນວຽນ:			
ປ່ຽນແປງໃນໜີ້ຕ້ອງຮັບ		40,070,449,615	(6,734,345,795)
ປ່ຽນແປງໃນໜີ້ຕ້ອງສົ່ງ		(2,488,406,432)	8,341,373,403
ອາກອນກຳໄລທີ່ຈ່າຍແລ້ວ		(8,459,341)	(396,678,916)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການດຳເນີນງານ		**47,304,180,680**	**13,235,279,549**
ກິດຈະກຳການລົງທຶນ			
ການຊື້ຊັບສິນເພື່ອການລົງທຶນ		-	(27,453,444,309)
ການຊື້ຊັບສິນບັດຄົງທີ່ມີຕົວຕົນ		(344,545,455)	(5,585,000)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**(344,545,455)**	**(27,459,029,309)**
ກິດຈະກຳການຈັດຫາເງິນທຶນ			
ການຊຳລະຄືນເງິນກູ້		(64,232,500,000)	-
ການຈ່າຍເງິນປັນຜົນ		(1,839,998,752)	(1,934,206,687)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການຈັດຫາເງິນທຶນ		**(66,072,498,752)**	**(1,934,206,687)**
ເງິນສົດຫຼຸດລົງສຸດທິພາຍໃນປີ		**(19,112,863,527)**	**(16,157,956,447)**
ເງິນສົດເລີ່ມຕົ້ນປີ		**22,497,520,522**	**38,655,476,969**
ເງິນສົດສິ້ນປີ	**9**	**3,384,656,995**	**22,497,520,522**

ກະກຽມໂດຍ:

孙飞虎

ທ່ານ ຊຸນ ເຟີ ຫູ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ
6 ເມສາ 2022

1. ຂໍ້ມູນກ່ຽວກັບບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 1169/ຈຫວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງລ່າສຸດ ເລກທີ 1374/ຈຫວ ລົງວັນທີ 25 ສິງຫາ 2021 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

2. ພື້ນຖານການກະກຽມ

2.1 ພື້ນຖານການກະກຽມ

ອີງຕາມກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ລວມທັງບໍລິສັດຈົດທະບຽນແມ່ນຄວນນຳໃຊ້ມາດຕະຖານລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງລັດຖະການ. ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ອອກໂດຍກະຊວງການເງິນ, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະແມ່ນຖືກອະນຸຍາດໃຫ້ເລື່ອນເວລາການນຳໃຊ້ມາດຕະຖານລາຍງານການເງິນສາກົນໄປຈົນຮອດວັນທີ 1 ມັງກອນ 2026.

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021, ເອກະສານລາຍງານການເງິນ ຂອງບໍລິສັດໄດ້ມີການກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ, ສະແດງເປັນ ສະກຸນເງິນກີບ ("ກີບ"), ໄດ້ຖືກສ້າງຂຶ້ນໂດຍນຳໃຊ້ມູນຄ່າຕົ້ນທຶນເດີມ ຍົກເວັ້ນຊັບສິນເພື່ອການລົງທຶນ ທີ່ໄດ້ຖືກວັດແທກຕາມມູນຄ່າຍຸຕິທຳ.

ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດ ຂອງບໍລິສັດ ຕາມຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

2. ພື້ນຖານການກະກຽມ (ຕໍ່)

2.2 *ການຕັດສິນ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ*

ການກະກຽມເອກະສານລາຍງານການເງິນຂອງບໍລິສັດ ຄະນະບໍລິຫານຕ້ອງຕັດສິນ, ຄາດຄະເນ ແລະ ຕັ້ງສົມມຸດຖານ ທີ່ມີຜົນກະທົບຕໍ່ມູນຄ່າລາຍງານຂອງລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ, ແລະ ການເປີດເຜີຍຂໍ້ມູນ, ແລະ ການເປີດເຜີຍໜີ້ສິນທີ່ອາດຈະເກີດຂຶ້ນ. ການຄາດຄະເນ ແລະ ຕັ້ງສົມມຸດຖານແມ່ນມີການປະເມີນຢ່າງຕໍ່ເນື່ອງໂດຍອີງໃສ່ປະສົບການຂອງຄະນະບໍລິຫານ ແລະ ປັດໃຈອື່ນໆ ລວມທັງການຄາດຄະເນເຫດການໃນອະນາຄົດທີ່ສົມເຫດສົມຜົນພາຍໃຕ້ແຕ່ລະສະຖານະການ. ຄວາມບໍ່ແນ່ນອນຂອງການຕັ້ງສົມມຸດຖານ ແລະ ການຄາດຄະເນເຫຼົ່ານີ້ ອາດສົ່ງຜົນໃຫ້ມີການດັດແກ້ມູນຄ່າຕາມບັນຊີຊັບສິນ ຫຼື ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ການຕັດສິນ

ໃນການປະຕິບັດຕາມນະໂຍບາຍການບັນຊີຂອງບໍລິສັດ, ຄະນະບໍລິຫານຕ້ອງໄດ້ໃຊ້ການຕັດສິນດັ່ງຕໍ່ໄປນີ້, ເຊິ່ງມີຜົນກະທົບທີ່ສຳຄັນຕໍ່ຕົວເລກທີ່ຖືກຮັບຮູ້ໃນເອກະສານລາຍງານການເງິນ:

ການຈັດປະເພດຊັບສິນ

ບໍລິສັດ ກຳນົດວ່າຊັບສິນຖືກຈັດເຂົ້າເປັນຊັບສິນເພື່ອການລົງທຶນ ຫຼື ຊັບສິນໃນສາງ:

- ► ຊັບສິນເພື່ອການລົງທຶນປະກອບດ້ວຍ ທີ່ດິນ ແລະ ອາຄານ (ສ່ວນໃຫຍ່ເປັນຫ້ອງການ, ແລະ ຮ້ານຄ້າຍ່ອຍ) ທີ່ບໍ່ໄດ້ມີໄວ້ເພື່ອນຳໃຊ້ໃນການດຳເນີນງານຂອງບໍລິສັດ, ຫຼື ເພື່ອຂາຍ, ແຕ່ມີໄວ້ເພື່ອຫາລາຍຮັບຈາກການເຊົ່າ ແລະ ການເພີ່ມຄ່າຂອງເງິນທຶນ. ບັນດາຕຶກອາຄານເຫລົ່ານີ້ແມ່ນຖືກເຊົ່າໂດຍຜູ້ເຊົ່າ ໂດຍບໍ່ມີຈຸດປະສົງທີ່ຈະຂາຍຕາມການດຳເນີນທຸລະກິດປົກກະຕິ.
- ► ຊັບສິນໃນສາງປະກອບດ້ວຍຊັບສິນທີ່ມີໄວ້ເພື່ອຂາຍໃນການດຳເນີນທຸລະກິດປົກກະຕິ. ໂດຍພື້ນຖານແລ້ວ, ນີ້ແມ່ນຊັບສິນປະເພດທີ່ຢູ່ອາໄສທີ່ບໍລິສັດພັດທະນາ ແລະ ຕັ້ງໃຈທີ່ຈະຂາຍກ່ອນ ຫຼື ເມື່ອກໍ່ສ້າງສຳເລັດ.

ນະວັນທີ 31 ທັນວາ 2021, ບໍລິສັດມີພຽງຊັບສິນການລົງທຶນເທົ່ານັ້ນ ເຊິ່ງໄດ້ນຳສະເໜີໃນບົດອະທິບາຍເລກທີ 12.

ສັນຍາເຊົ່າເພື່ອການດຳເນີນງານ - ບໍລິສັດໃນຖານະເປັນຜູ້ໃຫ້ເຊົ່າ

ບໍລິສັດໄດ້ເຮັດສັນຍາເຊົ່າຊັບສິນທາງການຄ້າໃນຊັບສິນເພື່ອການລົງທຶນ. ບໍລິສັດໄດ້ກຳນົດ, ໂດຍອີງໃສ່ການປະເມີນຂໍ້ກຳນົດ ແລະ ເງື່ອນໄຂຂອງຂໍ້ຕົກລົງ ໂດຍພິຈາລະນາຄວາມສ່ຽງ ແລະ ຜົນຕອບແທນທີ່ສຳຄັນຂອງການເປັນເຈົ້າຂອງຊັບສິນເຫຼົ່ານີ້ ແລະ ບັນຊີສຳລັບສັນຍາທີ່ເປັນສັນຍາການດຳເນີນງານ.

2. ພື້ນຖານການກະກຽມ (ຕໍ່)

***2.2 ການເກັດສິນ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ* (ຕໍ່)**

ການຄາດຄະເນ ແລະ ສົມມຸດຖານ

ສົມມຸດຖານທີ່ສຳຄັນກ່ຽວກັບອະນາຄົດ ແລະ ແຫຼ່ງທີ່ມາສຳຄັນອື່ນໆຂອງການຄາດຄະເນທີ່ບໍ່ແນ່ນອນນະວັນທີຂອງບົດລາຍງານ, ເຊິ່ງມີຄວາມສ່ຽງທີ່ສຳຄັນໃນການປັບປຸງມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນໃນລະຫວ່າງປີການບັນຊີຕໍ່ໄປ, ໄດ້ຖືກອະທິບາຍຢ່າງລຸ່ມນີ້. ບໍລິສັດໄດ້ອີງຕາມສົມມຸດຖານ ແລະ ການຄາດຄະເນຂອງຕົນກ່ຽວກັບຕົວຊີ້ວັດການທີ່ມີໃນເວລາທີ່ບົດລາຍງານທາງການເງິນໄດ້ຖືກກະກຽມ. ສະຖານະການ ແລະ ສົມມຸດຖານທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດ. ເຖິງຢ່າງໃດກໍຕາມ, ອາດຈະມີການປ່ຽນແປງຍ້ອນການປ່ຽນແປງຂອງຕະຫຼາດ ຫຼື ສະຖານະການທີ່ເກີດຂຶ້ນທີ່ເກີນຄວາມສາມາດໃນການຄວບຄຸມຂອງບໍລິສັດ. ການປ່ຽນແປງດັ່ງກ່າວແມ່ນສະທ້ອນໃຫ້ເຫັນສົມມຸດຖານເມື່ອເກີດຂຶ້ນ.

ການປະເມີນມູນຄ່າຊັບສິນເພື່ອການລົງທຶນ

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ ແມ່ນຖືກກຳນົດໂດຍຜູ້ຊ່ຽວຊານດ້ານການປະເມີນມູນຄ່າອະສັງຫາລິມະຊັບໂດຍນຳໃຊ້ເຕັກນິກ ແລະ ຫຼັກການປະເມີນມູນຄ່າທີ່ເປັນທີ່ຍອມຮັບຕາມການເປີດເຜີຍໃນບົດອະທິບາຍເລກທີ 12.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

3.1 ການຈັດປະເພດໝຸນວຽນ ກັບ ບໍ່ໝຸນວຽນ

ອາກອນ

ຄວາມບໍ່ແນ່ນອນກ່ຽວກັບການຕີຄວາມໝາຍຂອງລະບຽບອາກອນທີ່ສັບສົນ, ການປ່ຽນແປງຂອງລະບຽບການຂອງອາກອນ ແລະ ຈຳນວນ ແລະ ໄລຍະເວລາຂອງລາຍຮັບທີ່ຕ້ອງເສຍອາກອນໃນອະນາຄົດ. ເນື່ອງຈາກລັກສະນະທີ່ມີໄລຍະຍາວ ແລະ ຄວາມຊັບຊ້ອນຂອງຂໍ້ຕົກລົງສັນຍາທີ່ມີຢູ່, ຄວາມແຕກຕ່າງທີ່ເກີດຂຶ້ນລະຫວ່າງຜົນໄດ້ຮັບຕົວຈິງ ແລະ ສົມມຸດຖານທີ່ໄດ້ຕັ້ງໄວ້, ຫຼື ການປ່ຽນແປງໃນອະນາຄົດຕໍ່ກັບການສົມມຸດຖານດັ່ງກ່າວ, ອາດຈຳເປັນຕ້ອງໄດ້ດັດແກ້ໃນອະນາຄົດກ່ຽວກັບລາຍຮັບ ແລະ ລາຍຈ່າຍທີ່ໄດ້ບັນທຶກແລ້ວ. ບໍລິສັດໄດ້ສ້າງເງິນແຮ, ໂດຍອີງໃສ່ການຄາດຄະເນທີ່ສົມເຫດສົມຜົນ, ເພື່ອຜົນກະທົບທີ່ອາດເກີດຂຶ້ນຈາກການກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນຂອງ ສປປ ລາວ. ມູນຄ່າຂອງເງິນແຮດັ່ງກ່າວ ແມ່ນອີງໃສ່ຫຼາຍປັດໄຈເຊັ່ນ: ປະສົບການຂອງການໄລ່ລຽງອາກອນທີ່ຜ່ານມາ ແລະ ການຕີຄວາມໝາຍທີ່ແຕກຕ່າງຂອງລະບຽບການອາກອນໂດຍໜ່ວຍງານອາກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນທີ່ຮັບຜິດຊອບ. ຄວາມແຕກຕ່າງດັ່ງກ່າວໃນການຕີຄວາມໝາຍ ອາດຈະເກີດຂຶ້ນຈາກເງື່ອນໄຂທີ່ພົ້ນເດັ່ນໃນ ສປປ ລາວ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.1 ການຈັດປະເພດໝຸນວຽນ ກັບ ບໍ່ໝຸນວຽນ (ຕໍ່)

ອາກອນ (ຕໍ່)

ບໍລິສັດນຳສະເໜີຊັບສິນ ແລະ ໜີ້ສິນໃນໃບລາຍງານຖານະການເງິນໂດຍອີງໃສ່ການຈັດປະເພດໝຸນວຽນ/ບໍ່ໝຸນວຽນ. ການຈັດເປັນຊັບສິນໝຸນວຽນກໍຕໍ່ເມື່ອ:

- ຄາດວ່າຈະໄດ້ຮັບຮູ້ ຫຼື ມີຈຸດປະສົງທີ່ຈະຂາຍ ຫຼື ບໍລິໂພກໃນຮອບວຽນການດຳເນີນງານເປັນປົກກະຕິ
- ຖືກຈັດຂຶ້ນໄວ້ເພື່ອຈຸດປະສົງຂອງການຊື້ - ຂາຍ
- ຄາດວ່າຈະຮັບຮູ້ໄດ້ພາຍໃນສິບສອງເດືອນຫຼັງຈາກວັນທີຂອງບົດລາຍງານ, ຫຼື
- ເງິນສົດ ຫຼື ທຽບເທົ່າເງິນສົດເວັ້ນເສຍແຕ່ຖືກຈຳກັດໄວ້ເພື່ອການແລກປ່ຽນ ຫຼື ນຳໃຊ້ເພື່ອຊຳລະໜີ້ສິນຢ່າງໜ້ອຍສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ.

ບໍລິສັດໄດ້ຈັດປະເພດຊັບສິນອື່ນໆທັງໝົດ ເປັນຊັບສິນບໍ່ໝຸນວຽນ.

ການຈັດເປັນໜີ້ສິນໝຸນວຽນທີ່ກໍຕໍ່ເມື່ອ:

- ຄາດວ່າຈະມີການຊຳລະໃນຮອບວຽນການດຳເນີນງານປົກກະຕິ
- ຖືກຈັດຂຶ້ນໄວ້ເພື່ອຈຸດປະສົງຂອງການຊື້ - ຂາຍ
- ມີກຳນົດຊຳລະພາຍໃນສິບສອງເດືອນຫຼັງຈາກວັນທີຂອງບົດລາຍງານ, ຫຼື
- ບໍ່ມີສິດທີ່ຈະເລື່ອນການຊຳລະໜີ້ເປັນເວລາຢ່າງໜ້ອຍສິບສອງເດືອນຫຼັງຈາກວັນທີຂອງບົດລາຍງານບໍລິສັດໄດ້ຈັດປະເພດໜີ້ສິນອື່ນໆທັງໝົດ ເປັນໜີ້ສິນບໍ່ໝຸນວຽນ

ຊັບສິນ ແລະ ໜີ້ສິນທີ່ຕິດພັນກັບອາກອນລໍຖ້າຊຳລະສະສາງ ແມ່ນຖືກຈັດປະເພດເປັນຊັບສິນ ແລະ ໜີ້ສິນບໍ່ໝຸນວຽນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.2 *ການວັດແທກມູນຄ່ຍຸຕິທຳ*

ບໍລິສັດໄດ້ວັດແທກຊັບສິນເພື່ອການລົງທຶນຕາມມູນຄ່າຍຸຕິທຳ ນະວັນທີຂອງບົດລາຍງານ. ບໍລິສັດບໍ່ມີເຄື່ອງມືທາງການເງິນທີ່ວັດແທກຕາມມູນຄ່າຍຸຕິທຳ. ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງກັບມູນຄ່າຍຸຕິທຳ ສຳລັບລາຍການທີ່ຖືກວັດແທກດ້ວຍ ຫຼື ມູນຄ່າຍຸຕິທຳທີ່ເປີດເຜີຍ, ໄດ້ສັງລວມຕາມບົດອະທິບາຍດັ່ງຕໍ່ໄປນີ້:

- ການເປີດເຜີຍນະໂຍບາຍການບັນຊີ — *ບົດອະທິບາຍເລກທີ 3.5*
- ວິທີການປະເມີນມູນຄ່າ, ການຄາດຄະເນ ແລະ ສົມມຸດຖານທີ່ສຳຄັນ — *ບົດອະທິບາຍເລກທີ 12*
- ຊັບສິນເພື່ອການລົງທຶນ — *ບົດອະທິບາຍເລກທີ 12*

ມູນຄ່າຍຸຕິທຳ ແມ່ນລາຄາທີ່ຈະໄດ້ຮັບຈາກການຂາຍຊັບສິນ ຫຼື ຈ່າຍເພື່ອໂອນໜີ້ສິນໃນການດຳເນີນທຸລະກຳທີ່ເປັນລະບຽບລະຫວ່າງຜູ້ເຂົ້າຮ່ວມຕະຫຼາດ ນະວັນທີການວັດແທກ. ການວັດແທກມູນຄ່າຍຸຕິທຳ ແມ່ນອີງໃສ່ສົມມຸດຖານວ່າມີທຸລະກຳການຂາຍຊັບສິນ ຫຼື ໂອນໜີ້ສິນດັ່ງກ່າວ:

- ໃນຕະຫຼາດຫຼັກ ສຳລັບຊັບສິນ ຫຼື ໜີ້ສິນ, ຫຼື
- ໃນກໍລະນີທີ່ບໍ່ມີຕະຫຼາດຫຼັກ, ໃນຕະຫຼາດທີ່ໄດ້ປຽບຫຼາຍທີ່ສຸດ ສຳລັບຊັບສິນ ຫຼື ໜີ້ສິນ

ຕະຫຼາດຫຼັກ ຫຼື ຕະຫຼາດທີ່ໄດ້ປຽບທີ່ສຸດ ແມ່ນບໍລິສັດຕ້ອງສາມາດເຂົ້າເຖິງໄດ້.

ມູນຄ່າຍຸຕິທຳຂອງສິນຊັບ ຫຼື ໜີ້ສິນ ແມ່ນຖືກວັດແທກໂດຍນຳໃຊ້ສົມມຸດຖານທີ່ຜູ້ເຂົ້າຮ່ວມຕະຫຼາດຈະນຳໃຊ້ໃນເວລາທີ່ກຳນົດລາຄາຂອງຊັບສິນ ຫຼື ໜີ້ສິນ, ໂດຍສົມມຸດວ່າຜູ້ເຂົ້າຮ່ວມຕະຫຼາດປະຕິບັດເພື່ອຜົນປະໂຫຍດທາງເສດຖະກິດສູງສຸດຂອງພວກເຂົາ.

ການວັດແທກມູນຄ່າຍຸຕິທຳຂອງຊັບສິນທີ່ບໍ່ແມ່ນການເງິນໄດ້ຄຳນຶງເຖິງຄວາມສາມາດຂອງຜູ້ເຂົ້າຮ່ວມຕະຫຼາດໃນການສ້າງຜົນປະໂຫຍດທາງເສດຖະກິດໂດຍການ ນຳໃຊ້ຊັບສິນດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ ຫຼື ການຂາຍໃຫ້ຜູ້ເຂົ້າຮ່ວມຕະຫຼາດອື່ນທີ່ຈະນຳໃຊ້ຊັບສິນດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ.

ບໍລິສັດນຳໃຊ້ເຕັກນິກການປະເມີນມູນຄ່າທີ່ເໝາະສົມຕາມສະພາບການ ແລະ ເພື່ອໃຫ້ມີຂໍ້ມູນທີ່ພຽງພໍໃນການວັດແທກມູນຄ່າທີ່ຍຸຕິທຳ, ເພີ່ມການນຳໃຊ້ທີ່ກ່ຽວຂ້ອງ, ສາມາດສັງເກດໄດ້ ແລະ ຫຼຸດການໃຊ້ຂໍ້ມູນທີ່ບໍ່ສາມາດສັງເກດໄດ້.

ຊັບສິນ ແລະ ໜີ້ສິນທັງໝົດ ທີ່ມູນຄ່າຍຸຕິທຳຖືກວັດແທກ ຫຼື ເປີດເຜີຍໃນເອກະສານລາຍງານການທາງເງິນຖືກຈັດປະເພດພາຍໃນລຳດັບຂັ້ນມູນຄ່າຍຸຕິທຳ, ເຊິ່ງອະທິບາຍດັ່ງຕໍ່ໄປນີ້, ໂດຍອີງຕາມຂໍ້ມູນລະດັບຕ່ຳສຸດທີ່ສຳຄັນໃນການວັດມູນຄ່າຍຸຕິທຳທັງໝົດ:

- ລະດັບ 1 - ອ້າງອີງລາຄາຕະຫຼາດ (ບໍ່ມີການດັດແກ້) ໃນຕະຫຼາດທີ່ມີການເຄື່ອນໄຫວສຳລັບຊັບສິນ ຫຼື ໜີ້ສິນທີ່ຄ້າຍຄືກັນ
- ລະດັບ 2 - ເຕັກນິກການປະເມີນມູນຄ່າຂໍ້ມູນລະດັບຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸຕິທຳ ແມ່ນສາມາດສັງເກດເຫັນໂດຍທາງກົງ ຫຼື ໂດຍທາງອ້ອມ
- ລະດັບ 3 - ເຕັກນິກການປະເມີນມູນຄ່າຂໍ້ມູນລະດັບຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸຕິທຳແມ່ນບໍ່ສາມາດສັງເກດໄດ້

ສຳລັບຊັບສິນ ແລະ ໜີ້ສິນທີ່ຖືກຮັບຮູ້ໃນເອກະສານລາຍງານການເງິນດ້ວຍມູນຄ່າຍຸຕິທຳ ບົນພື້ນຖານການເກີດຂຶ້ນເປັນປະຈຳ ບໍລິສັດກຳນົດວ່າການໂອນຍ້າຍເກີດຂຶ້ນລະຫວ່າງລະດັບໃນລຳດັບຂັ້ນໂດຍມີການປະເມີນການຈັດປະເພດຄືນໃໝ່ (ອີງໃສ່ຂໍ້ມູນໃນລະດັບຕ່ຳສຸດເຊິ່ງມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸຕິທຳທັງໝົດ) ໃນປີທີ່ສິ້ນສຸດຂອງບົດລາຍງານແຕ່ລະໄລຍະ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 *ອາກອນ*

ອາກອນກຳໄລພາຍໃນປີ

ອາກອນກຳໄລພາຍໃນປີທາງດ້ານຊັບສິນ ແລະ ໜີ້ສິນແມ່ນຖືກວັດແທກຕາມຈຳນວນທີ່ຄາດວ່າຈະເກັບຄືນ ຫຼື ຈ່າຍໃຫ້ເຈົ້າໜ້າທີ່ສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ໃຊ້ໃນການຄິດໄລ່ຈຳນວນເງິນດັ່ງກ່າວຕາມຂໍ້ກຳນົດທາງກົດໝາຍໂດຍຫົວໄປ, ນະວັນທີຂອງປົດລາຍງານ.

ອາກອນກຳໄລໃນປັດຈຸບັນທີ່ກ່ຽວຂ້ອງກັບບັນດາລາຍການຂອງຜູ້ຖືຮຸ້ນໂດຍກົງ ຈະຮັບຮູ້ໃນສ່ວນຂອງຜູ້ຖືຮຸ້ນ ແລະ ບໍ່ໄດ້ຢູ່ໃນປົດລາຍງານຜົນການດຳເນີນງານນອກການທຸລະກິດ. ຄະນະບໍລິຫານຈະປະເມີນສະຖານະການເກັບຄືນອາກອນເປັນໄລຍະຕາມກົດລະບຽບຂອງອາກອນ ພາຍໃຕ້ການຕີຄວາມໝາຍ ແລະ ສ້າງຂໍ້ກຳນົດຕ່າງໆທີ່ເໝາະສົມ.

ອາກອນລໍຖ້າຊຳລະສະສາງ

ອາກອນລໍຖ້າຊຳລະສະສາງແມ່ນຄິດໄລ່ໂດຍໃຊ້ວິທີໜີ້ສິນຕາມໃບລາຍງານຖານະການເງິນຈາກຄວາມແຕກຕ່າງຊົ່ວຄາວນະວັນທີຂອງໃບລາຍງານການຖານະການເງິນລະຫວ່າງພື້ນຖານອາກອນຂອງຊັບສິນ ແລະ ໜີ້ສິນ ແລະ ມູນຄ່າຕາມບັນຊີຂອງລາຍການດັ່ງກ່າວສຳລັບຈຸດປະສົງການລາຍງານທາງການເງິນ ນະວັນທີລາຍງານ.

ອາກອນລໍຖ້າຊຳລະສະສາງດ້ານໜີ້ສິນ ແມ່ນໄດ້ຖືກຄິດໄລ່ຈາກສ່ວນຕ່າງຊົ່ວຄາວທາງອາກອນທັງໝົດ, ຍົກເວັ້ນ:

- ໃນກໍລະນີທີ່ອາກອນລໍຖ້າຊຳລະສະສາງດ້ານໜີ້ສິນເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນໃນທຸລະກຳນະວັນທີ່ທຸລະກຳສິ່ງຜົນກະທົບຕໍ່ກຳໄລທາງການບັນຊີ ແລະ ກຳໄລ ຫຼື ຂາດທຶນທາງອາກອນ, ແລະ
- ໃນສ່ວນຕ່າງຊົ່ວຄາວທາງອາກອນ ມີຄວາມກ່ຽວຂ້ອງກັບການລົງທຶນໃນບໍລິສັດໃນເຄືອທີ່ສາມາດຄວບຄຸມເວລາໃນການເກັບຄືນ ຂອງສ່ວນຕ່າງຊົ່ວຄາວ ແລະ ມີຄວາມເປັນໄປໄດ້ທີ່ວ່າ ສ່ວນຕ່າງຊົ່ວຄາວຈະບໍ່ສາມາດເກັບຄືນມາໄດ້ໃນອະນາຄົດ.

ອາກອນລໍຖ້າຊຳລະສະສາງດ້ານຊັບສິນແມ່ນຖືກຮັບຮູ້ສຳລັບສ່ວນຕ່າງຊົ່ວຄາວທາງອາກອນ, ຍອດຍົກມາຂອງສິນເຊື່ອອາກອນທີ່ບໍ່ໄດ້ໃຊ້ ແລະ ຂາດທຶນອາກອນທີ່ບໍ່ໄດ້ໃຊ້, ໃນກໍລະນີທີ່ມີຄວາມເປັນໄປໄດ້ວ່າ ກຳໄລທາງອາກອນຈະສາມາດໃຊ້ໄດ້ກັບສ່ວນຕ່າງຊົ່ວຄາວທີ່ໃຊ້ຫັກອາກອນ, ຍອດຍົກມາຕໍ່ຂອງສິນເຊື່ອອາກອນທີ່ບໍ່ໄດ້ໃຊ້ ແລະ ຂາດທຶນທາງອາກອນທີ່ບໍ່ໄດ້ໃຊ້ສາມາດນຳໃຊ້ໄດ້, ຍົກເວັ້ນ:

- ໃນກໍລະນີທີ່ອາກອນລໍຖ້າຊຳລະສະສາງທາງຊັບສິນເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນໃນທຸລະກຳທີ່ສິ່ງຜົນກະທົບຕໍ່ກຳໄລທາງການບັນຊີ ແລະ ກຳໄລ ຫຼື ຂາດທຶນທາງອາກອນ, ແລະ
- ໃນສ່ວນຂອງສ່ວນຕ່າງຊົ່ວຄາວທີ່ໃຊ້ຫັກອາກອນມີຄວາມກ່ຽວຂ້ອງກັບການລົງທຶນໃນບໍລິສັດໃນເຄືອ. ອາກອນລາຍຮັບລໍຖ້າຊຳລະສະສາງດ້ານຊັບສິນ ແມ່ນຖືກຮັບຮູ້ໃນກໍລະນີທີ່ມີຄວາມເປັນໄປໄດ້ວ່າ ສ່ວນຕ່າງຊົ່ວຄາວຈະສາມາດເກັບຄືນໄດ້ໃນອະນາຄົດ ແລະ ກຳໄລທາງອາກອນຈະສາມາດໃຊ້ໄດ້ກັບສ່ວນຕ່າງຊົ່ວຄາວທີ່ສາມາດນຳໃຊ້ໄດ້.

ມູນຄ່າທາງບັນຊີຂອງອາກອນລາຍຮັບລໍຖ້າຊຳລະສະສາງດ້ານຊັບສິນ ແມ່ນຖືກທົບທວນຄືນນະມື້ທີ່ອອກໃບລາຍງານຖານະການເງິນແຕ່ລະເທື່ອ ແລະ ຈະຫຼຸດລົງຕາມກໍລະນີທີ່ບໍ່ໜ້າຈະເປັນໄປໄດ້ທີ່ຈະມີກຳໄລທາງອາກອນພຽງພໍທີ່ຈະອະນຸຍາດໃຫ້ໄດ້ເກັບຄືນທັງໝົດ ຫຼື ບາງສ່ວນຂອງຊັບສິນ. ອາກອນລາຍຮັບລໍຖ້າຊຳລະສະສາງດ້ານຊັບສິນກ່ອນໜ້ານີ້ທີ່ບໍ່ໄດ້ຖືກຮັບຮູ້ ຈະຖືກປະເມີນຄືນໃໝ່ ໃນແຕ່ລະເທື່ອຂອງນະມື້ອອກໃບລາຍງານຖານະການເງິນ ແລະ ໄດ້ຖືກຮັບຮູ້ໃນກໍລະນີທີ່ມີຄວາມເປັນໄປໄດ້ໃນອະນາຄົດວ່າ ກຳໄລທາງອາກອນ ຈະອະນຸຍາດໃຫ້ອາກອນລໍຖ້າຊຳລະສະສາງດ້ານຊັບສິນສາມາດເກັບຄືນໄດ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 *ອາກອນ* (ຕໍ່)

ອາກອນລໍ່ຖ້າຊຳລະສະສາງ (ຕໍ່)

ອາກອນລາຍຮັບລໍ່ຖ້າຊຳລະສະສາງດ້ານຊັບສິນ ແລະ ໜີ້ສິນ ແມ່ນຖືກວັດແທກໂດຍໃຊ້ອັດຕາອາກອນທີ່ຄາດວ່າຈະນຳໃຊ້ໃນປີເມື່ອມີການຮັບຮູ້ຊັບສິນ ຫຼື ໜີ້ສິນຕາມອັດຕາອາກອນ ແລະ ອັດຕາຕາມກົດໝາຍທີ່ມີຜົນບັງຄັບໃຊ້ນະມື້ອອກໃບລາຍງານຖານະການເງິນ.

ອາກອນລໍ່ຖ້າຊຳລະສະສາງຈະຖືກຄິດໄລ່ ຫຼື ໂອນໄປໃນໃບລາຍງານຜົນການດຳເນີນງານ, ຍົກເວັ້ນແຕ່ມີການພົວພັນໂດຍກົງກັບສ່ວນຂອງຜູ້ຖືຮຸ້ນ, ໃນກໍລະນີທີ່ອາກອນລໍ່ຖ້າຊຳລະສະສາງຖືກແບ່ງໂດຍຜູ້ຖືຮຸ້ນ.

ອາກອນລາຍຮັບລໍ່ຖ້າຊຳລະສະສາງດ້ານຊັບສິນ ແລະ ໜີ້ສິນແມ່ນຫັກລ້າງກັນ, ຖ້າຫາກວ່າມີການບັງຄັບໃຊ້ຕາມກົດໝາຍໃນການກຳນົດຊັບສິນທາງອາກອນປັດຈຸບັນກັບໜີ້ສິນທາງອາກອນລາຍໄດ້ປັດຈຸບັນ ແລະ ອາກອນລໍ່ຖ້າຊຳລະສະສາງທີ່ກ່ຽວຂ້ອງກັບນິຕິບຸກຄົນທີ່ມີການເກັບພາສີຄືກັນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນດຽວກັນ:

- ນິຕິບຸກຄົນທີ່ມີການເສຍພາສີຄືກັນ;
- ຫຼື ໃນເວລາທີ່ບໍລິສັດຕັ້ງໃຈທີ່ຈະຊຳລະໜີ້ສິນ ແລະ ຊັບສິນທາງອາກອນພາຍໃນປີ ບົນພື້ນຖານສຸດທິ ຫຼື ຮັບຮູ້ຊັບສິນ ແລະ ຊຳລະໜີ້ສິນພ້ອມກັນ ແຕ່ລະໄລຍະໃນອະນາຄົດ ເມື່ອຄາດວ່າອາກອນລໍ່ຖ້າຊຳລະສະສາງທາງດ້ານຊັບສິນ ແລະ ໜີ້ສິນຈຳນວນຫຼາຍຈະຖືກຊຳລະ ຫຼື ເກັບຄືນ.

ອາກອນມູນຄ່າເພີ່ມ

ອາກອນມູນຄ່າເພີ່ມຂອງລາຍຮັບຄ່າເຊົ່າ ແລະ ລາຍຮັບອື່ນໆໄດ້ຖືກຄິດໄລ່ໂດຍໃຊ້ອັດຕາອາກອນທີ່ກ່ຽວຂ້ອງພາຍໃນປີ.

ອີງຕາມນະໂຍບາຍການບັນຊີສຳລັບ ອາກອນມູນຄ່າເພີ່ມທີ່ກ່ຽວຂ້ອງກັບສັນຍາການຮ່ວມມືທຸລະກິດ ("BCC") ແມ່ນໄດ້ຖືກນຳສະເໜີໃນບົດອະທິບາຍເລກທີ 3.14.

ການດັດແກ້ຕົວເລກໜີ້ຕ້ອງສົ່ງທາງອາກອນສຳລັບປີທີ່ຜ່ານມາ ແມ່ນອີງໃສ່ຜົນຂອງບົດໄລ່ລຽງອາກອນທີ່ໄດ້ບັນທຶກໂດຍກົງເຂົ້າກຳໄລສະສົມ.

3.4 *ເງິນຕາຕ່າງປະເທດ*

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີເປັນສະກຸນເງິນກີບ, ເຊິ່ງເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງບໍລິສັດ. ການເຮັດທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດໃນເບື້ອງຕົ້ນບໍລິສັດແມ່ນບັນທຶກໂດຍການນຳໃຊ້ອັດຕາແລກປ່ຽນທີ່ວໄປນະມື້ທີ່ເກີດທຸລະກຳທຳອິດເພື່ອຮັບຮູ້. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນໄດ້ຖືກຕີມູນຄ່າຄືນໃໝ່ເປັນສະກຸນເງິນຫຼັກໃນມື້ຂອງບົດລາຍງານ.

ສ່ວນຕ່າງທີ່ເກີດຂຶ້ນຈາກການຊຳລະສະສາງ ຫຼື ຕີມູນຄ່າລາຍການທີ່ເປັນເງິນຕາຕ່າງປະເທດໄດ້ຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.4 ເງິນຕາຕ່າງປະເທດ (ຕໍ່)

ລາຍການທີ່ບໍ່ແມ່ນເງິນຕາຖືກວັດແທກຈາກມູນຄ່າຕົ້ນທຶນເດີມໃນສະກຸນເງິນຕາຕ່າງປະເທດ ແມ່ນຖືກຕີມູນຄ່າໂດຍການນຳໃຊ້ອັດຕາແລກປ່ຽນນະວັນທີຂອງທຸລະກຳເບື້ອງຕົ້ນ. ລາຍການທີ່ບໍ່ແມ່ນເງິນຕາທີ່ຖືກວັດແທກໃນມູນຄ່ຍຸຕິທຳໃນສະກຸນເງິນຕາຕ່າງປະເທດ ແລະ ໄດ້ຖືກຕີມູນຄ່າໂດຍການນຳໃຊ້ອັດຕາແລກປ່ຽນນະວັນທີກຳນົດມູນຄ່າຍຸຕິທຳ.

3.5 ຊັບສິນເພື່ອການລົງທຶນ

ຊັບສິນເພື່ອການລົງທຶນປະກອບດ້ວຍຊັບສິນທີ່ກິດຈະການມີໄວ້ຄອບຄອງເພື່ອຫາລາຍຮັບຈາກຄ່າເຊົ່າ ຫຼື ການເພີ່ມຂຶ້ນຂອງມູນຄ່າຊັບສິນ ຫຼື ທັງສອງຢ່າງ. ຊັບສິນທີ່ຖືໄວ້ຄອບຄອງເພື່ອໃຫ້ເຊົ່າແມ່ນຖືກຈັດປະເພດເປັນຊັບສິນເພື່ອການລົງທຶນເມື່ອມີລາຍຮັບຈາກຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຊັບສິນ ຫຼື ທັງສອງຢ່າງ, ແທນທີ່ຈະມີໄວ້ສຳລັບຂາຍຕາມການດຳເນີນທຸລະກິດປົກກະຕິ, ຫຼື ເພື່ອໃຊ້ໃນການຜະລິດ ຫຼື ໃຊ້ໃນການບໍລິຫານງານ.

ຊັບສິນເພື່ອລົງທຶນແມ່ນຖືກປະເມີນຕາມຕົ້ນທຶນທີ່ເກີດຂຶ້ນເບື້ອງຕົ້ນ, ເຊິ່ງປະກອບດ້ວຍຕົ້ນທຶນການເຮັດທຸລະກິດ. ຕົ້ນທຶນການເຮັດທຸລະກິດປະກອບດ້ວຍພາສີໃນການໂອນຊັບສິນ ຄ່າທຳນຽມວິຊາຊີບສຳລັບການບໍລິການທາງກົດໝາຍ ແລະ ລາຍຈ່າຍທີ່ຈຳເປັນເພື່ອເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ. ມູນຄ່າຕາມບັນຊີແມ່ນລວມທັງຕົ້ນທຶນການປ່ຽນແທນສ່ວນໃດ ໜຶ່ງຂອງຊັບສິນເພື່ອການລົງທຶນທີ່ມີຢູ່ນະເວລາທີ່ຕົ້ນທຶນນັ້ນເກີດຂຶ້ນ ຖ້າຫາກວ່າເປັນໄປຕາມເກນການຮັບຮູ້.

ພາຍຫຼັງການຮັບຮູ້ເບື້ອງຕົ້ນ, ຊັບສິນເພື່ອການລົງທຶນແມ່ນຈະຖືກບັນທຶກໂດຍມູນຄ່າຍຸຕິທຳ, ເຊິ່ງສະທ້ອນເຖິງສະພາບຕະຫຼາດນະມື້ຂອງການລາຍງານ. ກຳໄລ ຫຼື ຂາດທຶນທີ່ເກີດຂຶ້ນຈາກການປ່ຽນແປງໃນມູນຄ່ຍຸຕິທຳຂອງຊັບສິນເພື່ອການລົງທຶນແມ່ນໄດ້ລວມຢູ່ໃນ ກຳໄລ ຫຼື ຂາດທຶນ ແລະ ລາຍຮັບອື່ນໆນອກການທຸລະກິດໃນໄລຍະທີ່ເກີດຂຶ້ນ ລວມເຖິງຜົນກະທົບທາງອາກອນທີ່ກ່ຽວຂ້ອງ.

ການໂອນແມ່ນເກີດຂຶ້ນແກ່ (ຫຼື ຈາກ) ຊັບສິນເພື່ອລົງທຶນເມື່ອມີການປ່ຽນແປງການນຳໃຊ້. ສຳລັບການໂອນຈາກຊັບສິນເພື່ອລົງທຶນມາເປັນຊັບສິນທີ່ຖືຄອງໄວ້ໂດຍເຈົ້າຂອງ, ຕົ້ນທຶນທີ່ຄາດວ່າຈະໄດ້ຮັບຈາກບັນຊີພາຍຫຼັງແມ່ນມູນຄ່ຍຸຕິທຳນະມື້ທີ່ມີການປ່ຽນແປງການໃຊ້ງານ.

ຊັບສິນເພື່ອການລົງທຶນແມ່ນຖືກຢຸດຮັບຮູ້ເມື່ອມີການສະສາງ ຫຼື ຢຸດນຳໃຊ້ຊັບສິນນັ້ນຢ່າງຖາວອນ ແລະ ຄາດວ່າຈະບໍ່ໄດ້ຮັບຜົນປະໂຫຍດທາງທຸລະກິດໃນອະນາຄົດຈາກການສະສາງຊັບສິນ. ຄວາມແຕກຕ່າງລະຫວ່າງຂັ້ນຕອນການສະສາງສຸດທິ ແລະ ມູນຄ່າຕາມບັນຊີຂອງຊັບສິນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນໃນໄລຍະຂອງການຢຸດຮັບຮູ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.6 ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

3.7 ໜີ້ຕ້ອງຮັບຄ່າເຊົ່າ ແລະ ອື່ນໆ

ໜີ້ຕ້ອງຮັບຄ່າເຊົ່າ ແລະ ອື່ນໆແມ່ນຖືກຮັບຮູ້ຕາມມູນຄ່າໃນໃບເກັບເງິນຕົ້ນສະບັບ ຍົກເວັ້ນເມື່ອມູນຄ່າຕາມເວລາຂອງເງິນມີຄວາມສຳຄັນ, ເຊິ່ງໃນກໍລະນີນີ້ຕ້ອງຮັບຮູ້ໃນມູນຄ່ายุติທຳ ແລະ ວັດແທກພາຍຫຼັງຕາມຕົ້ນທຶນຄ່າເສື່ອມມູນຄ່າ.

ເງິນແຮຈະຖືກບັນທຶກເມື່ອມີຫຼັກຖານທີ່ຊັດເຈນວ່າ ບໍລິສັດຈະບໍ່ສາມາດເກັບຄືນໄດ້ເຕັມຈຳນວນ.

ຍອດເຫຼືອຈະຖືກສະສາງອອກເມື່ອຄວາມເປັນໄປໄດ້ຂອງການເກັບຄືນໄດ້ຖືກປະເມີນວ່າມີໂອກາດໜ້ອຍຫຼາຍ.

3.8 ເງິນມັດຈຳຄ່າເຊົ່າ

ໜີ້ຕ້ອງສົ່ງເງິນມັດຈຳຄ່າເຊົ່າແມ່ນຖືກຮັບຮູ້ເບື້ອງຕົ້ນຕາມມູນຄ່ายุติທຳ ແລະ ວັດແທກພາຍຫຼັງຕາມຈຳນວນທີ່ຕ້ອງຈ່າຍໃນອະນາຄົດ.

ສ່ວນຜິດຕ່ຽງລະຫວ່າງມູນຄ່ายุติທຳເບື້ອງຕົ້ນ ແລະ ຈຳນວນເງິນສ່ວນໜ້ອຍທີ່ລວມຢູ່ໃນລາຍຮັບຄ່າເຊົ່າໃນການດຳເນີນງານ ແລະ ຖືກຮັບຮູ້ຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

3.9 ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມ

ເງິນກູ້ ແລະ ການກູ້ຢືມທັງໝົດແມ່ນຖືກຮັບຮູ້ຕາມມູນຄ່າທີ່ໄດ້ຮັບຫັກຕົ້ນທຶນທຸລະກຳທີ່ກ່ຽວຂ້ອງໂດຍກົງ. ພາຍຫຼັງການຮັບຮູ້ໃນເບື້ອງຕົ້ນ, ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມແມ່ນໄດ້ຮັບການວັດແທກພາຍຫຼັງຕາມມູນຄ່າທີ່ຕ້ອງຈ່າຍໃນອະນາຄົດ. ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມທີ່ເພີ່ມຂຶ້ນແມ່ນຈະຖືກຄິດໄລ່ໂດຍໃຊ້ອັດຕາດອກເບ້ຍທີ່ກຳນົດໄວ້ໃນສັນຍາ.

3.10 ສັນຍາເຊົ່າ

ການກຳນົດວ່າຂໍ້ຕົກລົງແມ່ນ (ຫຼື ມີ) ການເຊົ່າ ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງນະວັນທີເລີ່ມຂອງສັນຍາເຊົ່າ. ຂໍ້ຕົກລົງວ່າແມ່ນ ຫຼື ເປັນສັນຍາເຊົ່າ ຖ້າຫາກວ່າການປະຕິບັດຂອງຂໍ້ຕົກລົງຂຶ້ນກັບການໃຊ້ຊັບສິນສະເພາະ ຫຼື ຂໍ້ຕົກລົງທີ່ສະແດງເຖິງສິດໃນການນຳໃຊ້ຊັບສິນ, ເຖິງແມ່ນວ່າສິດນັ້ນຈະບໍ່ລະບຸຊັດເຈນໃນຂໍ້ຕົກລົງ.

ບໍລິສັດເປັນຜູ້ໃຫ້ເຊົ່າ

ສັນຍາເຊົ່າທີ່ບໍລິສັດບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຄວາມເປັນເຈົ້າຂອງໃນຊັບສິນໄດ້ຖືກຈັດປະເພດເປັນການເຊົ່າເພື່ອການດຳເນີນງານ. ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຈາກການເຈລະຈາ ແລະ ການດຳເນີນການເຊົ່າຈະລວມຢູ່ໃນມູນຄ່າຕາມບັນຊີຂອງຊັບສິນທີ່ເຊົ່າ ແລະ ຮັບຮູ້ຕາມໄລຍະຂອງສັນຍາເຊົ່າໂດຍໃຊ້ຫຼັກເກນດຽວກັບລາຍຮັບຄ່າເຊົ່າ. ຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຮັບໃນໄລຍະທີ່ໄດ້ລາຍຮັບ.

3.11 ຄັງສຳຮອງ

ອີງຕາມມາດຕາ 156 ຂອງກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 26 ທັນວາ 2013, ບໍລິສັດຕ້ອງຫັກເງິນແຮ 10% ຂອງກຳໄລຫຼັງອາກອນໃນແຕ່ລະປີເຂົ້າຄັງສຳຮອງຕາມກົດໝາຍ. ເມື່ອຄັງສັງຮອງດັ່ງກ່າວບັນລຸ 50% ຂອງເງິນທຶນຈົດທະບຽນ, ບໍລິສັດອາດຈະຢຸດການຫັກສຳຮອງດັ່ງກ່າວ, ເວັ້ນເສຍແຕ່ກົດໝາຍຈະກຳນົດໄວ້ຢ່າງອື່ນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.11 ຄັງສຳຮອງ (ຕໍ່)

ການຈັດສັນກຳໄລເຂົ້າຄັງເພື່ອຂະຫຍາຍທຸລະກິດແມ່ນສອດຄ່ອງກັບມາດຕາ 16 ຂອງຂໍ້ກຳນົດຂອງບໍລິສັດ. ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021, ບໍລິສັດໄດ້ສຳຮອງ 10% ຂອງກຳໄລເຂົ້າຄັງເພື່ອຂະຫຍາຍທຸລະກິດ.

3.12 ການຮັບຮູ້ລາຍຮັບ

ລາຍຮັບແມ່ນໄດ້ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງເສດຖະກິດຈະໄຫຼເຂົ້າບໍລິສັດ ແລະ ລາຍຮັບສາມາດ ວັດແທກໄດ້ຢ່າງໜ້າເຊື່ອຖື ບໍ່ວ່າຈະໄດ້ຮັບການຊຳລະເງິນຕອນໃດ. ລາຍຮັບແມ່ນຖືກວັດແທກດ້ວຍມູນຄ່າຍຸຕິທຳຕາມການພິຈາລະນາທີ່ໄດ້ຮັບ ຫຼື ຄ້າງຮັບ, ໂດຍຄຳນຶງເຖິງເງື່ອນໄຂການຊຳລະເງິນຕາມສັນຍາ ແລະ ບໍ່ລວມພາສີ ຫຼື ອາກອນ.

ເງື່ອນໄຂການຮັບຮູ້ສະເພາະທີ່ລະບຸໄວ້ຂ້າງລຸ່ມນີ້ຕ້ອງເປັນໄປຕາມເງື່ອນໄຂ ກ່ອນທີ່ຈະຮັບຮູ້ລາຍຮັບ.

ລາຍຮັບຄ່າເຊົ່າ

ບໍລິສັດແມ່ນຜູ້ໃຫ້ເຊົ່າໃນການເຊົ່າເພື່ອການດຳເນີນງານ. ລາຍຮັບຄ່າເຊົ່າທີ່ເກີດຂຶ້ນຈາກການເຊົ່າເພື່ອການດຳເນີນງານໃນຊັບສິນເພື່ອການລົງທຶນແມ່ນບັນທຶກເປັນລາຍຮັບຕາມວິທີເສັ້ນຊື່ໃນໄລຍະເວລາການເຊົ່າ ແລະ ລວມຢູ່ໃນລາຍຮັບໃນໃບລາຍງານຜົນການດຳເນີນງານ ແລະ ລາຍຮັບອື່ນໆນອກການທຸລະກິດ, ເນື່ອງຈາກມີລັກສະນະການດຳເນີນງານ, ຍົກເວັ້ນລາຍຮັບຈາກຄ່າເຊົ່າທີ່ບໍ່ແນ່ນອນທີ່ຕ້ອງຖືກຮັບຮູ້ເມື່ອເກີດຂຶ້ນ.

ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຂຶ້ນໃນການເຈລະຈາ ແລະ ການຕົກລົງໃນການເຊົ່າເພື່ອການດຳເນີນງານແມ່ນໄດ້ຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາການເຊົ່າຕາມພື້ນຖານດຽວກັນກັບລາຍຮັບຈາກສັນຍາເຊົ່າ.

ແຮງຈູງໃຈໃນການເຊົ່າຂອງຜູ້ເຊົ່າໄດ້ຖືກຮັບຮູ້ເປັນການຫຼຸດລົງຂອງສັນຍາລາຍຮັບຄ່າເຊົ່າໂດຍວິທີເສັ້ນຊື່ຕະຫຼອດອາຍຸສັນຍາເຊົ່າ. ໄລຍະເວລາການເຊົ່າແມ່ນໄລຍະເວລາທີ່ຍົກເລີກບໍ່ໄດ້ ພ້ອມກັບໄລຍະເວລາເພີ່ມເຕີມທີ່ຜູ້ເຊົ່າມີທາງເລືອກທີ່ຈະສືບຕໍ່ການເຊົ່າ, ໃນເວລາຮັບຮູ້ການເຊົ່າ, ທີ່ຜູ້ອຳນວຍການແມ່ນມີຄວາມແນ່ໃຈຢ່າງສົມເຫດສົມຜົນວ່າຜູ້ເຊົ່າຈະໃຊ້ຕົວເລືອກນັ້ນ.

ຈຳນວນເງິນທີ່ໄດ້ຮັບຈາກຜູ້ເຊົ່າເພື່ອຍຸດຕິສັນຍາການເຊົ່າ ຫຼື ເພື່ອຊົດເຊີຍຄວາມເສຍຫາຍຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນເວລາທີ່ສິດທີ່ຈະໄດ້ຮັບນັ້ນເກີດຂຶ້ນ.

ລາຍຮັບຈາກການດຳເນີນງານອື່ນໆ

ລາຍຮັບຈາກການດຳເນີນງານອື່ນໆປະກອບດ້ວຍລາຍຮັບຈາກການໃຫ້ເຊົ່າປ້າຍໂຄສະນາ ແລະ ການຈັດກິດຈະກຳ ເຊິ່ງຖືກຮັບຮູ້ໃນໄລຍະການໃຫ້ບໍລິການ.

ລາຍຮັບຈາກສັນຍາການຮ່ວມມືທຸລະກິດ ("BCC")

ລາຍຮັບຈາກສັນຍາການຮ່ວມມືທຸລະກິດ ("BCC") ແມ່ນຖືກຮັບຮູ້ຕາມນະໂຍບາຍການບັນຊີທີ່ສະແດງໃນບົດອະທິບາຍເລກທີ 3.14.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.12 ການຮັບຮູ້ລາຍຮັບ (ຕໍ່)

ລາຍຮັບດອກເບ້ຍ

ລາຍຮັບດອກເບ້ຍຖືກຮັບຮູ້ເພາະວ່າເປັນການຄ້າງຮັບໂດຍນຳໃຊ້ວິທີການອັດຕາດອກເບ້ຍທີ່ແທ້ຈິງ (EIR). ອັດຕາດອກເບ້ຍທີ່ແທ້ຈິງ ແມ່ນອັດຕາທີ່ໃຊ້ໃນການຄິດຫຼຸດປະມານການເງິນສິດຮັບ ຫຼື ຈ່າຍໃນອະນາຄົດຕະຫຼອດອາຍຸທີ່ຄາດໄວ້ຂອງເຄື່ອງມືທາງການເງິນ ຫຼື ໄລຍະເວລາທີ່ສັ້ນກວ່າ, ຕາມເໝາະສົມກັບມູນຄ່າທາງບັນຊີສຸດທິຂອງຊັບສິນທາງການເງິນ. ລາຍຮັບດອກເບ້ຍແມ່ນຢູ່ໃນລາຍຮັບການເງິນທີ່ສະແດງຢູ່ໃນໃບລາຍງານຜົນການດຳເນີນງານ.

3.13 ຕົ້ນທຶນການກູ້ຢືມ

ຕົ້ນທຶນການກູ້ຢືມທີ່ກ່ຽວຂ້ອງໂດຍກົງກັບການໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ຕ້ອງໃຊ້ໄລຍະເວລາ ເພື່ອພ້ອມສຳລັບການໃຊ້ ຫຼື ການຂາຍໄດ້ຖືກບັນທຶກເປັນສ່ວນໜຶ່ງຂອງຕົ້ນທຶນຊັບສິນນັ້ນ. ຕົ້ນທຶນການກູ້ຢືມອື່ນໆທັງໝົດຈະເປັນຄ່າໃຊ້ຈ່າຍໃນໄລຍະທີ່ເກີດຂຶ້ນ. ຕົ້ນທຶນການກູ້ຢືມປະກອບດ້ວຍດອກເບ້ຍ ແລະ ຕົ້ນທຶນອື່ນທີ່ເກີດຂຶ້ນຈາກການກູ້ຢືມເງິນ.

3.14 ສັນຍາການຮ່ວມມືທຸລະກິດ ("BCC") ໃນຮູບແບບການດຳເນີນງານທີ່ຄວບຄຸມຮ່ວມກັນ

ສັນຍາການຮ່ວມມືທຸລະກິດແມ່ນການດຳເນີນງານທີ່ບໍ່ໄດ້ປະກອບເປັນໜ່ວຍງານໃໝ່, ຂາຮຸ້ນຂອງ BCC ແມ່ນມີພັນທະ ແລະ ມີສິດໄດ້ຮັບຜົນປະໂຫຍດຕາມທີ່ໄດ້ລະບຸໄວ້ໃນສັນຍາ. ກິດຈະກຳຂອງ BCC ແມ່ນປະຕິບັດພ້ອມກັນກັບກິດຈະກຳການດຳເນີນງານປະຈຳຂອງຂາຮຸ້ນ.

ບໍລິສັດໄດ້ຮັບຮູ້ລາຍຮັບຈາກ BCC ແລະ ພາລະຜູກພັນທາງອາກອນມູນຄ່າເພີ່ມທີ່ກ່ຽວຂ້ອງຕາມລາຍຮັບສຸດທິຕາມສັນຍາ, ເຊິ່ງເປັນຄວາມແຕກຕ່າງກັນລະຫວ່າງລາຍຮັບລວມ ແລະ ສັດສ່ວນກຳໄລຂອງຂາຮຸ້ນອື່ນຂອງ BCC.

ສຳລັບອາກອນມູນຄ່າເພີ່ມເກີດຂຶ້ນຈາກສັນຍາທີ່ໄດ້ແຈ້ງເສຍອາກອນ ແລະ ຈ່າຍຕາມມູນຄ່າສຸດທິທີ່ບໍລິສັດໄດ້ຮັບ.

ລາຍລະອຽດຂອງການດຳເນີນງານທີ່ບໍລິສັດມີໃນປັດຈຸບັນ ມີຢູ່ໃນບົດອະທິບາຍເລກທີ 4.

3.15 ລາຍຮັບລໍຖ້າຊຳລະສະສາງ

ລາຍຮັບລໍຖ້າຊຳລະສະສາງແມ່ນໜີ້ສິນໃນໃບລາຍງານຖານະການເງິນຂອງບໍລິສັດທີ່ປະກອບດ້ວຍ ລາຍຈ່າຍລ່ວງໜ້າ, ທັງທາງກົງ ຫຼື ທາງອ້ອມໃຫ້ແກ່ບໍລິສັດ, ຈາກລູກຄ້າຂອງບໍລິສັດ ສຳລັບສິນຄ້າ ຫຼື ການບໍລິການທີ່ຍັງບໍ່ທັນໄດ້ສົ່ງ. ລາຍຮັບລໍຖ້າຊຳລະສະສາງແມ່ນຖືກຮັບຮູ້ເປັນລາຍຮັບໃນໃບລາຍງານຜົນການດຳເນີນງານ ແລະ ລາຍຮັບອື່ນໆຈາກທຸລະກິດເຊິ່ງແມ່ນສິນຄ້າ ຫຼື ການບໍລິການທີ່ສົ່ງໃຫ້ແກ່ລູກຄ້າແລ້ວ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.16 ກຳໄລຕໍ່ຮຸ້ນ

ລາຍຮັບຂັ້ນພື້ນຖານຕໍ່ມູນຄ່າຮຸ້ນແມ່ນຖືກຄິດໄລ່ໂດຍສ່ວນແບ່ງ ກຳໄລ/(ຂາດທຶນ) ສຸດທິ ຫຼັງຈາກອາກອນພາຍໃນປີ ເຊິ່ງຈ່າຍໃຫ້ຜູ້ຖືຮຸ້ນສາມັນຂອງບໍລິສັດ (ຫຼັງຈາກດັດແກ້ເງິນໂບນັດ ແລະ ກອງທຶນສະຫວັດດີການ) ໂດຍຕົວເລກຖ່ວງນ້ຳໜັກສະເລ່ຍຂອງຮຸ້ນທີ່ຍັງຄ້າງພາຍໃນປີ.

ລາຍໄດ້ທີ່ສຸນເສຍຕໍ່ປະລິມານຮຸ້ນແມ່ນບໍ່ໄດ້ຖືກຄິດໄລ່ ແລະ ນຳສະເໜີ.

3.17 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງປະກອບມີວິສາຫະກິດ ແລະ ບຸກຄົນທີ່ຄວບຄຸມ, ຫຼື ຖືກຄວບຄຸມໂດຍບໍລິສັດ, ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ, ຫຼື ທີ່ຢູ່ພາຍໃຕ້ການຄວບຄຸມໂດຍທົ່ວໄປຂອງບໍລິສັດ.

ພາກສ່ວນທີ່ກ່ຽວຂ້ອງຍັງລວມເອົາບັນດາບໍລິສັດທີ່ກ່ຽວຂ້ອງ ແລະ ບຸກຄົນທີ່ເປັນເຈົ້າຂອງໂດຍທາງກົງ ຫຼື ທາງອ້ອມ ທີ່ມີອຳນາດໃນການລົງຄະແນນສຽງໃນບໍລິສັດ ທີ່ໃຫ້ພວກເຂົາມີອິດທິພົນທີ່ສຳຄັນຕໍ່ບໍລິສັດ, ບຸກຄະລາກອນຜູ້ບໍລິຫານຫຼັກ, ຜູ້ອຳນວຍການ, ແລະ ພະນັກງານທີ່ມີສິດອຳນາດໃນການວາງແຜນ ແລະ ທິດທາງໃນການດຳເນີນງານຂອງບໍລິສັດ.

3.18 ຂໍ້ມູນຈຳແນກສ່ວນງານ

ຂໍ້ມູນຈຳແນກສ່ວນງານແມ່ນອົງປະກອບໜຶ່ງທີ່ຈຳແນກສ່ວນງານຕ່າງຫາກ ໂດຍບໍລິສັດທີ່ມີສ່ວນໃນການສະໜອງຜະລິດຕະພັນ ຫຼື ການບໍລິການທີ່ກ່ຽວຂ້ອງ (ພາກສ່ວນທຸລະກິດ) ຫຼື ການສະໜອງຜະລິດຕະພັນ ຫຼື ການບໍລິການໃນເຂດເສດຖະກິດສະເພາະ (ພາກສ່ວນທາງພູມສັນຖານ) ເຊິ່ງຂຶ້ນກັບຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງຈາກຂໍ້ມູນຈຳແນກສ່ວນງານ.

ກິດຈະກຳຫຼັກຂອງບໍລິສັດຕໍ່ໃບອະນຸຍາດດຳເນີນທຸລະກິດແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການຕ່າງໆ. ນອກຈາກນັ້ນ, ກິດຈະກຳເຫຼົ່ານີ້ແມ່ນມີຂຶ້ນພາຍໃນ ສປປ ລາວ ເທົ່ານັ້ນ. ດ້ວຍເຫດນີ້, ການບໍລິຫານຂອງບໍລິສັດມີທັດສະນະວ່າມີພຽງແຕ່ໜຶ່ງສ່ວນງານສຳລັບທຸລະກິດ ແລະ ພູມສາດເທົ່ານັ້ນ ແລະ ດັ່ງນັ້ນການນຳສະເໜີຂໍ້ມູນສ່ວນງານແມ່ນບໍ່ຈຳເປັນ.

4. ລາຍຮັບ

	ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ລາຍຮັບຈາກສັນຍາການຮ່ວມມື (*)	345,922,491	867,210,999
ລາຍຮັບຈາກການເຊົ່າ	7,450,067,016	8,222,055,192
	7,795,989,507	**9,089,266,191**

(*) ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ ເມເຈີ ແຜ່ດທິນໍາ ຊິເນຜ້ຳ (ລາວ) ຈຳກັດ (ເມເຈີ), ບໍລິສັດ ໄດ້ໃຫ້ເຊົ່າໃນໄລຍະເວລາ 20 ປີ ນັບແຕ່ ວັນທີ 7 ສິງຫາ 2015 ເຖິງ ວັນທີ 6 ສິງຫາ 2035 ໃນສ່ວນຂອງຊັບສິນເພື່ອ ການລົງທຶນເຂົ້າໃນການດຳເນີນງານທາງດ້ານໂຮງໜັງຮ່ວມກັນກັບເມເຈີ. ລາຍຮັບຈາກການດຳເນີນງານຂອງໂຮງໜັງ ແມ່ນ ແບ່ງກັນລະຫວ່າງບໍລິສັດ ແລະ ເມເຈີ ໃນອັດຕາຄົງທີ່ຕາມການກຳນົດໄວ້ໃນສັນຍາ.

5. ລາຍຈ່າຍອື່ນໆການດຳເນີນງານ

	ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ລາຍຈ່າຍຄ່າໜ້ຍຫ້ຽນ	24,086,692	1,023,915
ຄ່າເສື່ອມມູນຄ່າຂອງໜີ້ເສຍ	-	171,444,970
ລາຍຈ່າຍໃຫ້ພະນັກງານ	277,697,600	375,759,000
ຄ່າທຳນຽມການບໍລິຫານ (*)	1,353,689,931	-
ອື່ນໆ	512,670,080	298,012,854
	2,168,144,303	**846,240,739**

(*) ພາຍໃນປີ 2021, ບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ໄດ້ລົງ ນາມໃນຂໍ້ຕົກລົງກ່ຽວກັບຄ່າທຳນຽມການບໍລິຫານຊັບສິນຂອງວຽງຈັນເຊັ້ນເຕີ. ດັ່ງນັ້ນ, ບໍລິສັດ ພັດທະນາສູນເສດຖະກິດ ການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ຈະເປັນຜູ້ໃຫ້ບໍລິການບໍລິຫານຊັບສິນສຳລັບຮ້ານຄ້າຍ່ອຍ ແລະ ຫ້ອງການ ຂອງອາຄານວຽງຈັນເຊັ້ນເຕີ ກວມເນື້ອທີ່ 5,651.71 ຕາແມັດ ດ້ວຍອັດຕາບໍລິການດັ່ງນີ້:

- ພື້ນທີ່ສູນການຄ້າ 7 ໂດລາສະຫະລັດ/ຕາແມັດຕໍ່ເດືອນ
- ພື້ນທີ່ຫ້ອງການ 1 ໂດລາສະຫະລັດ/ຕາແມັດຕໍ່ເດືອນ
- ພື້ນທີ່ອື່ນໆ 2 ໂດລາສະຫະລັດ/ຕາແມັດຕໍ່ເດືອນ

6. ລາຍຮັບທາງການເງິນ

	ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ກຳໄລສຸດທິຈາກສ່ວນຕ່າງອັດຕາແລກປ່ຽນເງິນຕາຕ່າງປະເທດ	2,797,136,009	1,701,290,218
	2,797,136,009	**1,701,290,218**

7. ລາຍຈ່າຍທາງການເງິນ

	ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ລາຍຈ່າຍດອກເບ້ຍຈາກພາກສ່ວນທີ່ກ່ຽວຂ້ອງ	1,704,837,604	2,291,851,284
	1,704,837,604	**2,291,851,284**

8. ອາກອນ

ລາຍຈ່າຍອາກອນລາຍໄດ້

ພາຍໃຕ້ກົດໝາຍວ່າດ້ວຍອາກອນລາຍໄດ້ສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020 ອັດຕາອາກອນກຳໄລປົກກະຕິ ("PT") ແມ່ນ 20%. ນອກຈາກນີ້, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວໄດ້ຮັບອັດຕາຈູງໃຈທີ່ 13% ເປັນເວລາ 4 ປີນັບຈາກວັນທີ່ຈົດທະບຽນ. ດັ່ງນັ້ນ, ອີງຕາມອັດຕາອາກອນທີ່ບັງຄັບໃຊ້ ສຳລັບບໍລິສັດໃນປີ 2021 ແມ່ນ 13%.

	ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ລາຍຈ່າຍອາກອນກຳໄລພາຍໃນປີ	70,882,792	118,653,530
ລາຍຈ່າຍອາກອນລໍຖ້າຊຳລະສະສາງ	1,422,753,295	1,414,934,834
	1,493,636,087	**1,533,588,364**

ການແຈ້ງອາກອນທີ່ບໍລິສັດຍື່ນຈະຕ້ອງຜ່ານການກວດກາໂດຍເຈົ້າໜ້າທີ່ອາກອນ. ເນື່ອງຈາກການບັງຄັບໃຊ້ກົດໝາຍ ແລະ ຂໍ້ກຳນົດດ້ານອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

8. ອາກອນ (ຕໍ່)

	ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021 ກີບ	*ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ກີບ*
ກຳໄລກ່ອນອາກອນ	**9,536,031,382**	**11,034,827,539**
ອັດຕາອາກອນ	13%	13%
ລາຍຈ່າຍອາກອນກຳໄລ	1,239,684,082	1,434,527,579
ການດັດແກ້ເພື່ອເພີ່ມ/(ຫຼຸດ) ອາກອນກຳໄລ		
ລາຍຈ່າຍດອກເບ້ຍທີ່ບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍ	221,628,889	297,940,667
ຄ່າເສື່ອມມູນຄ່າໜີ້ເສຍ	-	22,287,846
ຂາດທຶນ/(ກຳໄລ)ທີ່ບໍ່ເກີດຂຶ້ນຈິງຈາກສ່ວນຕ່າງອັດຕາ ແລກປ່ຽນເງິນຕາຕ່າງປະເທດ	32,323,116	(221,167,728)
ລາຍຈ່າຍອາກອນລາຍໄດ້	**1,493,636,087**	**1,533,588,364**

ອາກອນພາຍໃນປີ

ອາກອນກຳໄລພາຍໃນປີແມ່ນອີງໃສ່ກຳໄລທີ່ທີ່ຕ້ອງຈ່າຍອາກອນພາຍໃນປີ. ອາກອນລາຍໄດ້ຂອງບໍລິສັດພາຍໃນປີຕ່າງຈາກກຳໄລທີ່ລາຍງານໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ ເນື່ອງຈາກວ່າອາກອນລາຍໄດ້ດັ່ງກ່າວແມ່ນບໍ່ລວມລາຍຮັບ ຫຼື ລາຍຈ່າຍທີ່ຕ້ອງຈ່າຍອາກອນ ຫຼື ຕັດຍອດປີອື່ນ ແລະ ບໍ່ລວມລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍອາກອນ ຫຼື ຫັກໄດ້. ອາກອນກຳໄລພາຍໃນປີທີ່ຕ້ອງຈ່າຍຂອງບໍລິສັດແມ່ນຄິດໄລ່ໂດຍໃຊ້ອັດຕາອາກອນທີ່ໄດ້ກຳນົດໄວ້ນະວັນທີຂອງບົດລາຍງານ.

8. ອາກອນ (ຕໍ່)

ອາກອນລໍຖ້າຊຳລະສະສາງ

ຕະຕາລາງລຸ່ມນີ້ ແມ່ນອາກອນລໍຖ້າຊຳລະສະສາງດ້ານໜີ້ສິນທີ່ຮັບຮູ້ໂດຍບໍລິສັດ, ແລະ ການເຄື່ອນໄຫວພາຍໃນປີ ແລະ ໄລຍະຜ່ານມາ.

ສະກຸນເງິນ: ກີບ

	ໃນລາຍງານຖານະການເງິນ		*ໃນລາຍງານຜົນການດຳເນີນງານ ແລະ ໃນລາຍງານຜົນໄດ້ຮັບສ້ຽລວມອື່ນ*	
			ສຳລັບປີທີ່ສິ້ນສຸດ ວັນທີ	*ສຳລັບປີທີ່ສິ້ນສຸດ ວັນທີ*
	31 ທັນວາ 2021	*31 ທັນວາ 2020*	*31 ທັນວາ 2021*	*31 ທັນວາ 2020*
ອາກອນລໍຖ້າຊຳລະສະສາງດ້ານໜີ້ສິນ				
ຄວາມແຕກຕ່າງລະຫວ່າງ ຖານອາກອນ ແລະ ຖານການບັນຊີທີ່ກ່ຽວຂ້ອງກັບຊັບສິນເພື່ອການລົງທຶນ	7,611,631,316	6,188,878,021	1,422,753,295	1,414,934,834
ອາກອນລໍຖ້າຊຳລະສະສາງສຸດທິດ້ານໜີ້ສິນ	***7,611,631,316***	***6,188,878,021***		
ຄ່າໃຊ້ຈ່າຍອາກອນລໍຖ້າຊຳລະສະສາງສຸດທິໃນໃບລາຍງານຜົນການດຳເນີນງານ			***1,422,753,295***	***1,414,934,834***

9. ເງິນສົດ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ເງິນສົດໃນຄັງ	11,526,254	22,532,369
ເງິນຝາກທະນາຄານ	3,373,130,741	22,474,988,153
	3,384,656,995	**22,497,520,522**

10. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 16)	-	30,165,838,073
ໜີ້ຕ້ອງຮັບຈາກຜູ້ເຊົ່າ	979,280,064	883,891,606
ຫັກ: ຄ່າເສື່ອມມູນຄ່າໜີ້ສົງໄສ	(171,444,970)	(171,444,970)
	807,835,094	**30,878,284,709**

11. ລາຍຈ່າຍລ່ວງໜ້າສຳລັບການຊື້ຊັບສົມບັດຄົງທີ່

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ລາຍຈ່າຍລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍເລກທີ 16)*	-	10,000,000,000
	-	**10,000,000,000**

ລາຍລະອຽດຂອງລາຍຈ່າຍລ່ວງໜ້າມີດັ່ງນີ້:

	31 ທັນວາ 2021	*31 ທັນວາ 2020*
	ກີບ	*ກີບ*
ລາຍຈ່າຍລ່ວງໜ້າສຳລັບການຊື້ຂອງພື້ນທີ່ສຳນັກງານຄັ້ງທີ 2 (ກ)	-	10,000,000,000
	-	**10,000,000,000**

(ກ) ອີງຕາມຂໍ້ຕົກລົງໃນວັນທີ 21 ມັງກອນ 2020, ບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ຕົກລົງວ່າ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ຈະໂອນພື້ນທີ່ໃຫ້ບໍລິສັດເພີ່ມ 1,380.3 ຕາແມັດໃນຊັ້ນ 3 ຂອງຕຶກວຽງຈັນເຊັ້ນເຕີ ດ້ວຍມູນຄ່າສັນຍາ 2,070,450 ໂດລາສະຫະລັດ. ໃນປີ 2020, ບໍລິສັດໄດ້ຈ່າຍເງິນ 10,000,000,000 ກີບໃຫ້ກັບບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດເປັນລາຍຈ່າຍລ່ວງໜ້າຂອງສັນຍາແລ້ວ. ແນວໃດກໍ່ຕາມ, ການຊື້ແມ່ນໄດ້ຖືກເລື່ອນອອກໄປ ແລະ ເງິນລ່ວງໜ້າແມ່ນໄດ້ຖືກສະສາງແລ້ວ ນະວັນທີ 31 ທັນວາ 2021.

12. ຊັບສິນເພື່ອການລົງທຶນ

ໃນວັນທີ 30 ພະຈິກ 2017, ບໍລິສັດແມ່ - ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດໄດ້ໂອນຊັບສິນໃຫ້ເຊົ່າ ("ຊັບສິນເພື່ອການລົງທຶນ - ອົງປະກອບທີ 1") ເຊິ່ງປະກອບດ້ວຍຮ້ານຄ້າຍ່ອຍ ແລະ ຫ້ອງການ ດ້ວຍພື້ນທີ່ລວມ 9,607.88 ຕາແມັດ.

ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຮັບໂອນພື້ນທີ່ເພີ່ມເຕີມ 1,709.5 ຕາແມັດ ໃນຊັ້ນ 2, 4, 5 ແລະ 8 ("ຊັບສິນເພື່ອການລົງທຶນ - ອົງປະກອບທີ 2") ຂອງຕຶກວຽງຈັນເຊັ້ນເຕີ.

ລາຍການເຄື່ອນໄຫວຂອງຊັບສິນເພື່ອການລົງທຶນແມ່ນມີດັ່ງນີ້:

ສຳລັບປີສິ້ນສຸດວັນທີ 31 ທັນວາ 2021

	ລວມ *ກີບ*
ນະວັນທີ 1 ມັງກອນ	**194,125,161,160**
ດັດແກ້ມູນຄ່າຍຸຕິທຳ	1,534,358,840
ນະວັນທີ 31 ທັນວາ	**195,659,520,000**

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

	ລວມ *ກີບ*
ນະວັນທີ 1 ມັງກອນ	**165,197,500,000**
ຊື້ຊັບສິນເພື່ອການລົງທຶນ - ອົງປະກອບທີ 2	27,453,444,309
ດັດແກ້ມູນຄ່າຍຸຕິທຳ	1,474,216,851
ນະວັນທີ 31 ທັນວາ	**194,125,161,160**

12. ຊັບສິນເພື່ອການລົງທຶນ (ຕໍ່)

12.1 *ຕົ້ນທຶນຂອງຊັບສິນເພື່ອການລົງທຶນ*

ຕົ້ນທຶນຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1

ຂໍ້ມູນລາຍລະອຽດຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ມີດັ່ງນີ້:

- ພາກສ່ວນ A: ຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ ໃນຊັ້ນທີ 1, 2, 4 ແລະ 6 ຂອງຕຶກວຽງຈັນເຊັ້ນເຕີ ໂດຍມີເນື້ອທີ່ 5,753.66 ຕາແມັດ (ຫົວໜ່ວຍເລກທີ A1003, A2003, A1012, A1017-2, A1018, A1021, A1020, A1023, A1038, A2049, A4003-1, A4009, B4001, C1016, F6020 ແລະ F6027);

- ພາກສ່ວນ B: ພື້ນທີ່ໂຄສະນາ ແລະ ພື້ນທີ່ຫ້ອງການ ໃນຊັ້ນທີ 1, 6, 7 ແລະ 9 ຂອງວຽງຈັນເຊັ້ນເຕີ (ຕຶກຫ້ອງການ) ໂດຍມີເນື້ອທີ່ 3,854.22 ຕາແມັດ (ຫົວໜ່ວຍເລກທີ A1007-1, F6001, F6002, F6003, F6004, F6005, F6006, F6007, F6008, F6009-1, F6009-2, F6010 ຫາ F6015, F6016-1, F6016-2, F6017, F6018, F6019, F6021 ຫາ F6026, F6028 ຫາ F6031, F6032-1, F6032-2, F6033 ຫາ F6049, F7004 ຫາ F7010, F9001 ຫາ F9012 ແລະ A1000).

ຊັບສິນເພື່ອການລົງທຶນນີ້ - ອົງປະກອບທີ 1 ແມ່ນຕັ້ງຢູ່ ຖະໜົນ ຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ, ສປປ ລາວ. ໄລຍະເວລາການໃຫ້ເຊົ່າທັງໝົດແມ່ນ 50 ປີ ແລະ ສາມາດຕໍ່ສັນຍາສຳປະທານໄດ້ຕື່ມອີກ 20 ປີ, ແຕ່ ວັນທີ 29 ກັນຍາ 2010 ອີງຕາມສັນຍາປະທານທີ່ດິນ ລົງວັນທີ 29 ກັນຍາ 2010 ແລະ ໃບສັນຍາສຳປະທານທີ່ດິນເພີ່ມ ເຕີມ ລົງວັນທີ 29 ເມສາ 2014 ແລະ ໃບທະບຽນສຳປະທານລົງວັນທີ 8 ພຶດສະພາ 2014 ເຊິ່ງອອກໂດຍ ເຈົ້າໜ້າທີ່ ນະຄອນຫຼວງວຽງຈັນມອບໃຫ້ແກ່ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ໄດ້ຮັບໃບຕາດິນ ເມື່ອວັນທີ 4 ເມສາ 2014 ຈາກ ກົມຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ນະຄອນຫຼວງວຽງຈັນ.

ໃນເບື້ອງຕົ້ນບໍລິສັດໄດ້ຮັບຮູ້ຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ຕາມຕົ້ນທຶນ, ຕາມລາຄາທີ່ຕົກລົງກັນ ລະຫວ່າງ ບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ລາຄາດັ່ງກ່າວໄດ້ຖືກກຳນົດ ໂດຍອີງໃສ່ບົດລາຍງານການປະເມີນມູນຄ່າ ໃນວັນທີ 26 ມີນາ 2018 ໂດຍ ບໍລິສັດ Sims Property Consultants ຈຳກັດ, ທີ່ປຶກສາພາຍນອກຈາກປະເທດໄທ, ເຊິ່ງມູນຄ່າຊັບສິນເພື່ອການລົງທຶນທັງໝົດແມ່ນ:

- ພາກສ່ວນ A: 95,999,200,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ;
- ພາກສ່ວນ B: 64,232,500,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ.

ຕົ້ນທຶນຊັບສິນເພື່ອການລົງທຶນ - ອົງປະກອບທີ 2

ລາຄາຊື້ຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ແມ່ນ 30,198,788,739 ກີບ (ລວມອາກອນມູນຄ່າເພີ່ມ 10%). ຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ເຊິ່ງປະກອບດ້ວຍ 14 ໜ່ວຍຕັ້ງຢູ່ໃນ ຊັ້ນ 2, 4, 5 ແລະ ຊັ້ນ 8 ຂອງອາຄານດຽວ ກັນຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1.

12. ຊັບສິນເພື່ອການລົງທຶນ (ຕໍ່)

12.2 *ການວັດແທກມູນຄ່ຍຸຕິທຳ – ຊັບສິນເພື່ອການລົງທຶນ*

ນະໂຍບາຍ ແລະ ຂັ້ນຕອນການປະເມີນມູນຄ່າຂອງບໍລິສັດສຳລັບການຕີມູນຄ່າຊັບສິນ ແມ່ນໄດ້ຖືກສະເໜີໂດຍຄະນະຜູ້ບໍລິຫານ ໃນຂະນະທີ່ ຄະນະກຳມະການກວດສອບເປັນຜູ້ກຳນົດໃນແຕ່ລະປີ. ຄະນະຜູ້ບໍລິຫານຈະແນະນຳ ແລະ ຄະນະກຳມະການກວດສອບແຕ່ງຕັ້ງຜູ້ປະເມີນພາຍໃນ/ພາຍນອກເຊິ່ງມີໜ້າທີ່ຮັບຜິດຊອບໃນການປະເມີນມູນຄ່າຊັບສິນຂອງບໍລິສັດ ເພື່ອຈຸດປະສົງໃນການກຳນົດມູນຄ່ຍຸຕິທຳໃນເອກະສານລາຍງານການເງິນປະຈຳປີ. ເງື່ອນໄຂໃນການຄັດເລືອກລວມມີຄວາມຮູ້ກ່ຽວກັບຕະຫຼາດ, ຊື່ສຽງ, ຄວາມເປັນເອກະລາດ ແລະ ບໍ່ວ່າຈະເປັນມາດຕະຖານດ້ານວິຊາຊີບ. ຜູ້ປະເມີນຜົນແມ່ນຈະມີການປ່ຽນທຸກໆສາມປີ.

ການປ່ຽນແປງເຕັກນິກຂອງການປະເມີນມູນຄ່າ

ໃນປີ 2020, ມູນຄ່ຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອີງປະກອບທີ 1 ແລະ ມູນຄ່ຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອີງປະກອບທີ 2 ໄດ້ຖືກກຳນົດໂດຍລາຍຮັບສຸດທິຈາກການດຳເນີນກິດຈະການທີ່ເກີດຈາກຊັບສິນ ແລະ ຫານດ້ວຍອັດຕາຕົ້ນທຶນ (ສ່ວນຫຼຸດ). ເນື່ອງຈາກ ການປ່ຽນແປງສະພາບແວດລ້ອມຂອງທຸລະກິດ, ບໍລິສັດເຊື່ອວ່າວິທີການຄິດໄລ່ສ່ວນຫຼຸດກະແສເງິນສົດ (DCF) ໃຫ້ຄວາມໂປ່ງໃສດີກວ່າວິທີຈິດເຂົ້າເປັນລາຍຮັບ ແລະ ໄດ້ຕັດສິນໃຈທີ່ຈະປ່ຽນແປງວິທີການປະເມີນມູນຄ່າໃນຂະນະກະກຽມເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021. ການປ່ຽນແປງວິທີການປະເມີນມູນຄ່ານີ້ຈະນຳໄປໃຊ້ໃນອະນາຄົດເນື່ອງຈາກເປັນການປ່ຽນແປງໃນການຄາດຄະເນ.

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

ຊັບສິນເພື່ອການລົງທຶນ - ອີງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ - ອີງປະກອບທີ 2 ແມ່ນຖືກປະເມີນດ້ວຍວິທີຈິດເຂົ້າເປັນລາຍຮັບ, ເຊິ່ງວ່າ ມູນຄ່ຍຸຕິທຳຂອງຊັບສິນແມ່ນອີງຕາມລາຍຮັບສຸດທິຈາກການດຳເນີນກິດຈະການທີ່ເກີດຈາກຊັບສິນ ແລະ ຫານດ້ວຍອັດຕາຕົ້ນທຶນ (ສ່ວນຫຼຸດ). ມູນຄ່ຍຸຕິທຳແມ່ນກຳນົດໂດຍອີງຕາມບົດລາຍງານການປະເມີນມູນຄ່າຊັບສິນນະວັນທີ 25 ມັງກອນ 2021 ເຊິ່ງອອກໂດຍ ບໍລິສັດ ລາວສາກົນປະເມີນຊັບສິນ ຈຳກັດ. ພາຍໃຕ້ວິທີຈິດເຂົ້າລາຍຮັບ, ຄວາມສາມາດໃນການສ້າງລາຍໄດ້ຂອງຊັບສິນແມ່ນຖືກຄາດຄະເນໂດຍໃຊ້ຄ່າເຊົ່າຕາມສັນຍາທີ່ມີການເຊົ່າ ແລະ ລາຄາຄ່າເຊົ່າໃນຕະຫຼາດຄູ່ແຂ່ງທີ່ດຳເນີນກິດຈະການການປະເພດດຽວກັນ. ຈາກນັ້ນຈະມີການຫັກສ່ວນທີ່ຫວ່າງ, ການເກັບຄືນບໍ່ໄດ້ ແລະ ລາຍຈ່າຍໃນການດຳເນີນກິດຈະການ. ລາຍຮັບສຸດທິຈາກການດຳເນີນກິດຈະການຈະຖືກແບ່ງອອກໃຫ້ອັດຕາຕົ້ນທຶນໂດຍລວມເພື່ອຮັບເອົາຄວາມຄິດເຫັນຂອງມູນຄ່າສຳລັບຊັບສິນດັ່ງກ່າວ. ອັດຕາການຈິດເຂົ້າຕົ້ນທຶນສະແດງເຖິງຄວາມສຳພັນລະຫວ່າງລາຍຮັບສຸດທິຈາກການດຳເນີນກິດຈະການ ແລະ ມູນຄ່າກິດຈະການ.

12. ຊັບສິນເພື່ອການລົງທຶນ (ຕໍ່)

12.2 *ການວັດແທກມູນຄຸ່ຍຸຕິທຳ – ຊັບສິນເພື່ອການລົງທຶນ* (ຕໍ່)

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ແມ່ນການຄິດໄລ່ໂດຍວິທີສ່ວນຫຼຸດກະແສເງິນສົດ (DCF). ມູນຄ່າຍຸຕິທຳແມ່ນກຳນົດໂດຍອີງຕາມບົດລາຍງານການປະເມີນມູນຄ່າຊັບສິນ ນະວັນທີ 14 ມີນາ 2022 ເຊິ່ງອອກໂດຍ ບໍລິສັດ ລາວສາກົນປະເມີນຊັບສິນ ຈຳກັດ.

ພາຍໃຕ້ວິທີການສ່ວນຫຼຸດກະແສເງິນສົດ, ມູນຄ່າຍຸຕິທຳໄດ້ຖືກຄາດຄະເນໂດຍການຕັ້ງສົມມຸດຖານກ່ຽວກັບຜົນປະໂຫຍດ ແລະ ໜີ້ສິນຂອງຜູ້ເປັນເຈົ້າຂອງຕະຫຼອດອາຍຸຂອງການໃຊ້ງານຂອງຊັບສິນ ລວມທັງມູນຄ່າທີ່ມີຢູ່ ຫຼື ມູນຄ່າຢຸດເຊົານຳໃຊ້. ວິທີການນີ້ປະກອບດ້ວຍການຄາດຄະເນຂອງກະແສເງິນສົດຕາມຜົນປະໂຫຍດທີ່ແທ້ຈິງຂອງຊັບສິນ. ສຳລັບກະແສເງິນສົດທີ່ຄາດຄະເນຕາມຄວາມເໝາະສົມ, ອັດຕາສ່ວນຫຼຸດຈາກຕະຫຼາດ ແມ່ນຖືກນຳໃຊ້ເພື່ອສ້າງມູນຄ່າປັດຈຸບັນຂອງກະແສລາຍຮັບທີ່ກ່ຽວຂ້ອງກັບຊັບສິນ. ຕາມປົກກະຕິ ຜົນໄດ້ຮັບທີ່ອອກມາຈະຖືກກຳນົດໄວ້ຕ່າງຫາກ ແລະ ແຕກຕ່າງຈາກອັດຕາສ່ວນຫຼຸດ.

ໄລຍະເວລາຂອງກະແສເງິນສົດ ແລະ ໄລຍະເວລາສະເພາະຂອງການໄຫຼເຂົ້າ ແລະ ໄຫຼອອກ ແມ່ນໄດ້ຖືກກຳນົດໂດຍເຫດການເຊັ່ນວ່າ ການທົບທວນຄ່າເຊົ່າ, ການຕໍ່ອາຍຸການເຊົ່າ ແລະ ການໃຫ້ເຊົ່າໃໝ່, ການປັບປຸງໃໝ່, ຫຼື ການຕົບແຕ່ງໃໝ່ທີ່ກ່ຽວຂ້ອງ. ໄລຍະເວລາທີ່ເໝາະສົມແມ່ນເຄື່ອນໄຫວຕາມປົກກະຕິຂຶ້ນກັບພຶດຕິກຳຂອງຕະຫຼາດ ຕາມລັກສະນະປະເພດຂອງຊັບສິນຕົວຈິງ. ກະແສເງິນສົດໃນແຕ່ໄລຍະ ໂດຍທົ່ວໄປແມ່ນໄດ້ຄາດຄະເນຕາມລາຍຮັບທັງໝົດ ຫັກສ່ວນຫ້ອງທີ່ວ່າງ, ລາຍຈ່າຍທີ່ບໍ່ສາມາດຮຽກເກັບຄືນໄດ້, ການເກັບຄືນບໍ່ໄດ້, ແຮງຈູງໃຈໃນການເຊົ່າ, ລາຍຈ່າຍໃນການບຳລຸງຮັກສາ, ຄ່າຕົວແທນ ແລະ ຄ່ານາຍໜ້າ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ການບໍລິຫານອື່ນໆ. ລາຍຮັບສຸດທິຈາກການດຳເນີນງານແຕ່ລະໄລຍະ ພ້ອມກັບການຄາດຄະເນຂອງມູນຄ່າທີ່ຈະສິ້ນສຸດທີ່ຄາດໄວ້ ໃນເວລາສິ້ນສຸດໂຄງການ, ແມ່ນຈະຖືກຫຼຸດລົງ.

12. ຊັບສິນເພື່ອການລົງທຶນ (ຕໍ່)

12.3 *ລຳດັບຂັ້ນຂອງມູນຄ່າຍຸຕິທຳ*

ຕາຕະລາງຊຸ່ມນີ້ສະແດງໃຫ້ເຫັນການວິເຄາະມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ ໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໂດຍລຳດັບຂັ້ນຂອງມູນຄ່າຍຸຕິທຳ:

	ມູນຄ່າຍຸຕິທຳ				
	ລາຄາອ້າງອີງໃນຕະຫຼາດທີ່ມີການເຄື່ອນໄຫວ (ລະດັບ 1)	*ຕີລາຄາຢ່ອນສຳຄັນທີ່ບໍ່ສາມາດສັງເກດເຫັນໄດ້ (ລະດັບ 2)*	*ຕີລາຄາຢ່ອນສຳຄັນຕ່າງໆທີ່ບໍ່ສາມາດສັງເກດເຫັນໄດ້ (ລະດັບ 3)*	*ລວມທັງໝົດ*	*ກຳໄລທັງໝົດພາຍໃນປີໃນໃບລາຍງານຜົນການດຳເນີນງານ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*
ວັນທີ 31 ທັນວາ 2021					
ຊັບສິນເພື່ອການລົງທຶນ	-	-	195,659,520,000	195,659,520,000	1,534,358,840
	-	**-**	**195,659,520,000**	**195,659,520,000**	**1,534,358,840**
ວັນທີ 31 ທັນວາ 2020					
ຊັບສິນເພື່ອການລົງທຶນ	-	-	194,125,161,160	194,125,161,160	1,474,216,851
	-	**-**	**194,125,161,160**	**194,125,161,160**	**1,474,216,851**

ບໍ່ມີການໂອນລະຫວ່າງລະດັບ 1, 2 ຫຼື 3 ໃນລະຫວ່າງປີທີ່ສິ້ນສຸດ ວັນທີ 31 ທັນວາ 2021.

12. ຊັບສິນເພື່ອການລົງທຶນ (ຕໍ່)

12.4 *ເຕັກນິກການປະເມີນມູນຄ່າທີ່ໃຊ້ໃນການວັດແທກມູນຄ່ายุติธรรม*

ຕາຕະລາງຕໍ່ໄປນີ້ສະແດງເຖິງເຕັກນິກການປະເມີນມູນຄ່າທີ່ໃຊ້ໃນການວັດແທກມູນຄ່ายุติธรรมของชับสินเพื่อการลงทุน - ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ - ອົງປະກອບທີ 2, ເຊັ່ນດຽວກັບຕົວປ້ອນທີ່ບໍ່ສາມາດສັງເກດເຫັນໄດ້ຢ່າງສຳຄັນ:

ເຕັກນິກການປະເມີນມູນຄ່າ	*ຕົວປ້ອນທີ່ບໍ່ສາມາດສັງເກດເຫັນໄດ້ຢ່າງສຳຄັນ*	*ຄວາມສຳພັນລະຫວ່າງຕົວປ້ອນຫຼັກທີ່ບໍ່ສາມາດສັງເກດໄດ້ຢ່າງສຳຄັນ ແລະ ການວັດແທກມູນຄ່ายุติธรรม*
ສ່ວນຫຼຸດກະແສເງິນສົດ: ຮູບແບບການປະເມີນມູນຄ່າປັດຈຸບັນຂອງກະແສເງິນສົດສຸດທິທີ່ມາຈາກຊັບສິນໂດຍຄຳນຶງເຖິງອັດຕາການເພີ່ມລາຄາຄ່າເຊົ່າສຳຫຼັບພື້ນທີ່ຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ, ອັດຕາພື້ນທີ່ຖືກເຊົ່າ, ຕົ້ນທຶນການດຳເນີນງານ ແລະ ຄ່າໃຊ້ຈ່າຍອື່ນໆ. ກະແສເງິນສົດສຸດທິທີ່ຄາດໄວ້ຈະຖືກຫຼຸດໂດຍໃຊ້ອັດຕາສ່ວນຫຼຸດທີ່ປັບຕາມຄວາມສ່ຽງ. ໃນບັນດາປັດໄຈອື່ນໆ, ການຄາດຄະເນອັດຕາສ່ວນຫຼຸດຈະພິຈາລະນາຄຸນນະພາບຂອງອາຄານ ແລະ ສະຖານທີ່ຕັ້ງ, ຄຸນນະພາບສິນເຊື່ອຂອງຜູ້ເຊົ່າ ແລະ ເງື່ອນໄຂການເຊົ່າ.	▶ ອັດຕາການເພີ່ມຂຶ້ນຂອງລາຄາເຊົ່າສຳລັບພື້ນທີ່ຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ. - ພື້ນທີ່ຮ້ານຄ້າຍ່ອຍ: 2% ຕໍ່ປີ ເລີ່ມປີ 2023 ເຖິງ 2080. - ພື້ນທີ່ຫ້ອງການ: 2% ຕໍ່ປີ ເລີ່ມປີ 2023 ເຖິງປີ 2028. ▶ ອັດຕາພື້ນທີ່ຖືກເຊົ່າ. - ພື້ນທີ່ຮ້ານຄ້າຍ່ອຍ: 80% - ພື້ນທີ່ຫ້ອງການ: 70% ▶ ອັດຕາສ່ວນຫຼຸດທີ່ປັບຕາມຄວາມສ່ຽງ ແມ່ນ 9.65% (ອັດຕາທີ່ບໍ່ມີຄວາມສ່ຽງບວກກັບຄ່າປະກັນໄພຄວາມສ່ຽງ).	*ມູນຄ່ายุติธรรมคาดคะเนจะเพิ่มขึ้น/(ຫຼຸດລົງ) ຫາກ:* ▶ ອັດຕາການເພີ່ມຂຶ້ນລາຄາເຊົ່າສຳລັບພື້ນທີ່ຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ ສູງກວ່າ (ຕ່ຳກວ່າ); ▶ ອັດຕາພື້ນທີ່ຖືກເຊົ່າ (ຕ່ຳກວ່າ); ▶ ອັດຕາສ່ວນຫຼຸດທີ່ປັບຕາມຄວາມສ່ຽງຕ່ຳກວ່າ (ສູງກວ່າ).

13. ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ

ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງໄລຍະສັ້ນ

	31 ທັນວາ 2021 ກີບ	*31 ທັນວາ 2020* ກີບ
ໜີ້ຕ້ອງສິ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍຊ້ອນທ້າຍເລກທີ 16)*	558,557,792	-
ໜີ້ຕ້ອງສິ່ງອາກອນກຳໄລ	391,669,380	329,245,928
ລາຍຮັບລໍຖ້າຊຳລະສະສາງຈາກຜູ້ເຊົ່າ - ໄລຍະສັ້ນ	3,202,109,289	3,198,832,995
ໜີ້ຕ້ອງສິ່ງອາກອນມູນຄ່າເພີ່ມ	668,899,411	58,795,420
ເງິນຄ້ຳປະກັນຈາກຜູ້ເຊົ່າ	1,871,720,576	1,581,822,504
ອື່ນໆ	149,849,563	180,740,009
	6,842,806,011	**5,349,436,856**

ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງໄລຍະຍາວ

	31 ທັນວາ 2021 ກີບ	*31 ທັນວາ 2020* ກີບ
ລາຍຮັບລໍຖ້າຊຳລະສະສາງຈາກຜູ້ເຊົ່າ - ໄລຍະຍາວ	4,429,029,065	6,643,543,597
	4,429,029,065	**6,643,543,597**

14. ເງິນກູ້ຍືມໄລຍະຍາວ

	31 ທັນວາ 2021 *ກີບ*	*31 ທັນວາ 2020* *ກີບ*
ເງິນການກູ້ຍືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍຊໍ້ອນທ້າຍເລກທີ 16)*	-	64,232,500,000
	-	**64,232,500,000**

ອີງຕາມບົດບັນທຶກຂອງການໂອນຊັບສິນໃນວັນທີ 30 ພະຈິກ 2017 ແລະ ຂໍ້ຕົກລົງເງິນກູ້ ໃນວັນທີ 30 ພະຈິກ 2017, ບໍລິສັດຮັບຮູ້ເງິນກູ້ຍືມໄລຍະສັ້ນຈາກ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ໂດຍຕົ້ນທຶນເປັນສ່ວນຕ່າງລະຫວ່າງລາຄາຕົ້ນທຶນຂອງຊັບສິນເພື່ອການລົງທຶນ ນະເວລາທີ່ໂອນ 160,231,700,000 ກີບ ແລະ ທຶນສະໜັບສະໜຸນຈາກ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ຈຳນວນ 95,999,200,000 ກີບ. ບໍລິສັດໃຊ້ 68 ໜ່ວຍໃນ ພາກ B ຂອງຊັບສິນເພື່ອການລົງທຶນເປັນຫຼັກຄ้ຳປะกัน. ອີງຕາມການປັບປຸງສັນຍາເງິນກູ້ສະບັບວັນທີ 13 ມິຖຸນາ 2018, ເງິນກູ້ມີອາຍຸການ 2 ປີ ແລະ ຮັບດອກເບ້ຍ 3.5% ຕໍ່ປີ. ດັ່ງນັ້ນ, ວັນຄົບກຳນົດຂອງສັນຍາເດີມແມ່ນວັນທີ 30 ພະຈິກ 2020 ແລະ ຕົ້ນທຶນ ແລະ ດອກເບ້ຍຈະຊຳລະໃນມື້ຄົບກຳນົດ.

ໃນວັນທີ 30 ພະຈິກ 2019, ບໍລິສັດ ພັດທະນາສູນເສດຖະກິດການຄ้าຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ແລະ ບໍລິສັດ ໄດ້ເຂົ້າຮ່ວມການປັບປຸງສັນຍາເງິນກູ້ສະບັບແກ້ໄຂໂດຍກຳນົດງວດຊຳລະຄືນໃໝ່ໃນວັນທີ 29 ພະຈິກ 2021 ແລະ ຫຼັກຊັບຄ้ຳປะกันใหม่เป็น 51 ໜ่วย ของชับสินเพื่อการลงทุน - อิงปะกอบที่ 1. ອີງຕາມສັນຍາເງິນກູ້ທີ່ປັບປຸງໃໝ່, ເງິນກູ້ຍືມສາມາດຕໍ່ໄດ້ຫຼັງຈາກວັນຄົບກຳນົດໂດຍອີງໃສ່ຕາມຂໍ້ຕົກລົງຂອງບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ้าคบวงจอนหมองจันตอนเหนือ จำกัด.

ເງິນກູ້ແມ່ນໄດ້ຖືກຊຳລະໃນວັນທີ 11 ຕຸລາ 2021 ແລະ ບໍ່ມີຍອດຄົງເຫຼືອໃນວັນທີ 31 ທັນວາ 2021.

15. ທຶນຈົດທະບຽນທີ່ຖອກແລ້ວ

	31 ທັນວາ 2021		*31 ທັນວາ 2020*	
	ຈຳນວນຮຸ້ນ	*ຈຳນວນເງິນ (ກີບ)*	*ຈຳນວນຮຸ້ນ*	*ຈຳນວນເງິນ (ກີບ)*
ການອອກຮຸ້ນ ແລະ ຈ່າຍຮຸ້ນ				
ຮຸ້ນສາມັນ	147,199,900	147,199,900,000	147,199,900	147,199,900,000

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ 0833/ຈທອ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

16. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດມີບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ*	*ປະເທດທີ່ດຳເນີນທຸລະກິດ*
ບໍລິສັດ ຜັດທະນາສຸນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ຜູ້ຖືຮຸ້ນ	ສປປ ລາວ

ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນລາຄາທີ່ຕົກລົງກັນຕາມສັນຍາ. ບັນດາລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ລັກສະນະຂອງທຸລະກຳ*	*ສຳລັບປີທີ່ສິ້ນສຸດໃນວັນທີ 31 ທັນວາ 2021*	*ສຳລັບປີທີ່ສິ້ນສຸດໃນວັນທີ 31 ທັນວາ 2020*
		ກີບ	*ກີບ*
ບໍລິສັດ ຜັດທະນາສຸນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ການເກັບຄ່າເຊົ່າ ແລະ ອື່ນໆໃນນາມຂອງບໍລິສັດ	101,750,387	15,440,911,298
	ຄ່າໃຊ້ຈ່າຍດອກເບ້ຍ	(1,704,837,604)	(2,291,851,284)
	ການຊຳລະໃນນາມບໍລິສັດ	(13,166,000)	(394,860,869)
	ຄ່າໃຊ້ຈ່າຍຄ່າທຳນຽມການບໍລິຫານ	(1,353,689,931)	-
	ການເກັບຄ່າບຳລຸງຮັກສາໃນນາມຂອງ NNCD	(306,572,563)	(589,934,415)
	ຈ່າຍລ່ວງໜ້າສຳລັບການສັ່ງຊື້ຊັບສິນ	-	10,000,000,000
	ການໂອນຂອງການຊື້ຊັບສິນເພື່ອການລົງທຶນ	-	(27,453,444,309)

16. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຂໍ້ກຳນົດ ແລະ ເງື່ອນໄຂ

ຍອດເຫຼືອທີ່ຍັງຄ້າງຢູ່ ນະວັນທີ 31 ທັນວາ 2021 ແມ່ນບໍ່ມີຫຼັກຊັບຄ້ຳປະກັນ ແລະ ຈະຖືກຊຳລະເປັນເງິນສົດ. ສຳລັບປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2021, ບໍລິສັດບໍ່ໄດ້ຫັກເງິນແຮສຳລັບໜີ້ສິງໄສທີ່ກ່ຽວຂ້ອງກັບຈຳນວນເງິນຂອງພາກສ່ວນທີ່ກ່ຽວຂ້ອງ (31 ທັນວາ 2020: ສູນ)

ການຊື້ ແລະ ດອກເບ້ຍຈາກພາກສ່ວນທີ່ກ່ຽວຂ້ອງແມ່ນເຮັດບົນພື້ນຖານການເຈລະຈາສັນຍາ.

ຍອດເຫຼືອໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2021 ແລະ 31 ທັນວາ 2020 ມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ລັກສະນະຂອງທຸລະກຳ*	*31 ທັນວາ 2021*	*31 ທັນວາ 2020*
		ກີບ	*ກີບ*
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ *(ບົດອະທິບາຍເລກທີ 10)*			
ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ການຮັບເງິນສຸດທິໃນນາມຂອງບໍລິສັດ	-	30,165,838,073
		-	**30,165,838,073**
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ *(ບົດອະທິບາຍເລກທີ 13)*			
ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ດອກເບ້ຍຕ້ອງສົ່ງ	558,557,792	-
		558,557,792	**-**
ລາຍຈ່າຍລ່ວງໜ້າສຳລັບການສັ່ງຊື້ຊັບສິນ *(ບົດອະທິບາຍເລກທີ 11)*			
ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ລາຍຈ່າຍລ່ວງໜ້າ	-	10,000,000,000
		-	**10,000,000,000**

16. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ລັກສະນະຂອງທຸລະກຳ*	*31 ທັນວາ 2021* ກີບ	*31 ທັນວາ 2020* ກີບ
***ການກູ້ຢືມໄລຍະຍາວ** (ບົດອະທິບາຍເລກທີ 14)*			
ບໍລິສັດ ພັດທະນາສຸນ ເສດຖະກິດການຄ້າຄົບວົງ ຈອນໜອງຈັນຕອນເໜືອ ຈຳກັດ	ເງິນກູ້ຢືມ	-	64,232,500,000
		-	**64,232,500,000**

17. ການບໍລິຫານທຶນ

ທຶນຂອງບໍລິສັດປະກອບດ້ວຍທຶນ, ເງິນກູ້, ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ.

ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງບໍລິສັດແມ່ນເພື່ອຮັບປະກັນວ່າ ບໍລິສັດຮັກສາອັດຕາສ່ວນທຶນ ຢູ່ໃນສະພາບທີ່ດີ ເພື່ອສະໜັບສະໜຸນທຸລະກິດຂອງຕົນ ແລະ ເພີ່ມມູນຄ່າຂອງຜູ້ຖືຮຸ້ນ.

ບໍລິສັດບໍລິຫານໂຄງສ້າງທຶນຂອງຕົນ ແລະ ປັບປຸງແກ້ໄຂຕໍ່ໂຄງສ້າງດັ່ງກ່າວ ໃນດ້ານຂອງການປ່ຽນແປງເງື່ອນໄຂເສດຖະກິດ. ເພື່ອຮັກສາ ຫຼື ປັບໂຄງສ້າງທຶນ, ບໍລິສັດອາດຈະປັບປຸງການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ, ຄືນທຶນໃຫ້ຜູ້ຖືຮຸ້ນ ຫຼື ເພີ່ມຮຸ້ນທຶນ.

ບໍລິສັດໄດ້ຕິດຕາມທຶນ ໂດຍນຳໃຊ້ອັດຕາສ່ວນໜີ້ສິນຕໍ່ທຶນ ເຊິ່ງເທົ່າກັບໜີ້ສິນສຸດທິຫານໃຫ້ທຶນທັງໝົດບວກກັບໜີ້ສິນ ສຸດທິ.

	31 ທັນວາ 2021 ກີບ	*31 ທັນວາ 2020* ກີບ
ໜີ້ສິນທັງໝົດ	18,883,466,392	82,414,358,474
ຫັກ: ເງິນສົດ	(3,384,656,995)	(22,497,520,522)
ໜີ້ສິນສຸດທິ	**15,498,809,397**	**59,916,837,952**
ທຶນ	181,293,565,545	175,091,169,002
ທຶນ ແລະ ໜີ້ສິນສຸດທິ	**196,792,374,942**	**235,008,006,954**
ອັດຕາສ່ວນໜີ້ສິນຕໍ່ທຶນ	8%	25%

ຄວາມເໝາະສົມຂອງອັດຕາສ່ວນໜີ້ສິນຕໍ່ທຶນແມ່ນໄດ້ທົບທວນຄືນ ແລະ ກຳນົດໂດຍຄະນະບໍລິຫານໃນແຕ່ລະປີ.

18. ພາລະຜູກພັນ

ບໍລິສັດໄດ້ໃຫ້ເຊົ່າພື້ນທີ່ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ຂໍ້ຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຈາກຄ່າເຊົ່າຂັ້ນຕ່ຳໃນອະນາຄົດ ນະວັນທີ 31 ທັນວາ 2021 ແລະ 31 ທັນວາ 2020 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	31 ທັນວາ 2021 *ກີບ*	*31 ທັນວາ 2020* *ກີບ*
ຕ່ຳກວ່າ 1 ປີ	2,406,300,134	2,305,304,533
ແຕ່ 1 - 5 ປີ	2,085,396,962	2,506,086,057
ຫຼາຍກວ່າ 5 ປີ	-	20,016,612
ລວມທັງໝົດ	**4,491,697,096**	**4,831,407,202**

ພາລະຜູກພັນພາຍໃຕ້ BCC

ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ ເມເຈີ ແຟຼດທິນ ຊິເນເຟັກ (ລາວ) ຈຳກັດ (ເມເຈີ), ບໍລິສັດໄດ້ນຳໃຊ້ຊັບສິນເພື່ອການລົງທຶນຂອງຕົນໂດຍການໃຫ້ເຊົ່າເປັນໄລຍະເວລາ 20 ປີ ເລີ່ມຕັ້ງແຕ່ວັນທີ 7 ສິງຫາ 2015 ຫາ ວັນທີ 6 ສິງຫາ 2035 ເພື່ອຮ່ວມກັນດຳເນີນທຸລະກິດໂຮງໜັງກັບເມເຈີ. ລາຍຮັບຈາກການດຳເນີນງານດັ່ງກ່າວແມ່ນໄດ້ຖືກແບ່ງສ່ວນລະຫວ່າງ ບໍລິສັດ ແລະ ເມເຈີ ໃນອັດຕາຄົງທີ່ ເຊິ່ງໄດ້ກຳນົດໄວ້ໃນສັນຍາ. ດັ່ງນັ້ນ, ເມເຈີ ຈະຕ້ອງໄດ້ຈ່າຍເງິນໃຫ້ກັບບໍລິສັດ ດັ່ງຕໍ່ໄປນີ້:

- ພື້ນທີ່ A:
  - (i) ແບ່ງສ່ວນລາຍຮັບພື້ນທີ່ການດຳເນີນງານຫຼັກ ແລະ,
  - (ii) ແບ່ງສ່ວນລາຍຮັບຂອງການສຳປະທານ.
- ພື້ນທີ່ B:
  - (i) ແບ່ງສ່ວນລາຍຮັບຂອງໂບລິ່ງ ລວມເຖິງການເຊົ່າ ຫຼື ຂາຍອຸປະກອນທີ່ກ່ຽວຂ້ອງ,
  - (ii) ແບ່ງສ່ວນລາຍຮັບຂອງຍອດຂາຍອາຫານ ແລະ ເຄື່ອງດື່ມ ຈາກສະຖານທີ່ຫຼິ້ນໂບລິ່ງ ແລະ ພື້ນທີ່ຄາຣາໂອເກະທີ່ເມເຈີອາດຈະດຳເນີນງານ.
- ອື່ນໆ: ຄ່າທຳນຽມຄົງທີ່ປະຈຳເດືອນ.

ບໍລິສັດບໍ່ມີສິດຍົກເລີກ BCC ກ່ອນຄົບກຳນົດສັນຍາເຊົ່າ, ເວັ້ນເສຍແຕ່ (i) ມີການລະເມີດອັນຮ້າຍແຮງໂດຍ ເມເຈີ; (ii) ມີເຫດສຸດວິໄສ; (iii) ຝ່າຍໃດຝ່າຍໜຶ່ງຢື່ນຟ້ອງລົ້ມລະລາຍ ຫຼື ບໍ່ສາມາດຊຳລະຕໍ່ໜີ້ສິນໄດ້.

19. ຂໍ້ມູນຈຳແນກສ່ວນງານ

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 3.18, ການບໍລິຫານຂອງບໍລິສັດແມ່ນມີພຽງແຕ່ການຂໍ້ມູນຈຳແນກສ່ວນງານດ້ານທຸລະກິດ ແລະ ດ້ານພູມສັນຖານ. ດັ່ງນັ້ນ, ການນຳສະເໜີຂໍ້ມູນສ່ວນແມ່ນບໍ່ຈຳເປັນ.

20. ກຳໄລຕໍ່ຮຸ້ນ

ລາຍການຕໍ່ໄປນີ້ສະແດງໃຫ້ເຫັນເຖິງລາຍຮັບ ແລະ ຂໍ້ມູນຮຸ້ນທີ່ໃຊ້ເປັນພື້ນຖານ ແລະ ຄິດໄລ່ກຳໄລຕໍ່ຮຸ້ນແບບຫຼຸດ:

	ສຳລັບປີທີ່ ສິ້ນສຸດນະວັນທີ 31 ທັນວາ 2021	*ສຳລັບປີທີ່ ສິ້ນສຸດນະວັນທີ 31 ທັນວາ 2020*
ກຳໄລສຸດທິຈາກຜູ້ຖືຮຸ້ນສາມັນເປັນເງິນກີບ	8,042,395,295	9,501,239,175
ຈຳນວນຮຸ້ນສາມັນສະເລ່ຍຖ່ວງນ້ຳໜັກ (*)	147,199,900	147,199,900
ກຳໄລຕໍ່ຮຸ້ນຂັ້ນພື້ນຖານ	**54.64**	**64.55**

21. ເຫດການທີ່ສຳຄັນ

ພາຍໃນປີ, ພື້ນທີ່ຮ້ານຄ້າຍ່ອຍແມ່ນໄດ້ຢຸດການດຳເນີນການຊົ່ວຄາວຫຼາຍຄັ້ງ ໃນຂະນະທີ່ການບໍລິການຂອງຫ້ອງການຍັງຄົງເປີດໃຫ້ເຊົ່າຢູ່ເພື່ອໃຫ້ສອດຄ່ອງກັບມະຕິກ່ຽວກັບມາດຕະການເພື່ອປ້ອງກັນການແຜ່ລະບາດຂອງພະຍາດ Covid-19 ໂດຍ ຄະນະບໍລິຫານງານບໍລິສັດ. ການຍົກເວັ້ນ ແລະ ການຫຼຸດລາຄາສຳລັບຄ່າເຊົ່າແມ່ນໄດ້ສະໜອງໃຫ້ຜູ້ເຊົ່າໂດຍກົງໃນພື້ນທີ່ຮ້ານ ຄ້າຍ່ອຍຜູ້ທີ່ຕ້ອງໄດ້ປິດຮ້ານຂອງພວກເຂົາ.

ບໍລິສັດໄດ້ດຳເນີນການປະເມີນເບື້ອງຕົ້ນກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນຂອງ Covid-19 ຕໍ່ການດຳເນີນງານ,ກະແສ ເງິນສົດ ແລະ ສະພາບການເງິນພ້ອມທັງການດຳເນີນງານຂອງຜູ້ເຊົ່າ ແລະ ລູກຄ້າ. ຄະນະບໍລິຫານເຫັນວ່າ: ທຸລະກິດໂດຍລວມ ຂອງບໍລິສັດບໍ່ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກໂລກລະບາດດັ່ງກ່າວ.

22. ເຫດການພາຍຫຼັງວັນທີອອກບົດລາຍງານ

ບໍ່ມີບັນຫາ ຫຼື ເຫດການອື່ນທີ່ເກີດຂຶ້ນພາຍຫຼັງວັນທີ 31 ທັນວາ 2021 ທີ່ຮຽກຮ້ອງໃຫ້ມີການປັບປຸງ ຫຼື ເປີດເຜີຍໃນ ເອກະສານລາຍງານການເງິນຂອງບໍລິສັດ.

ກະກຽມໂດຍ:

孙飞虎

ທ່ານ ຊຸນ ເຟີ ຫູ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

6 ເມສາ 2022

[ເອກະສານຄັດຕິດ 4]

ບົດລາຍງານການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດປີ 2022 ຂອງ ວຈຊຕ

ສາລະບານ

1. ຂໍ້ມູນກ່ຽວກັບບໍລິສັດ

1.1 ວິໄສທັດ

1.2 ພາລະກິດ

1.3 ແນະນຳບໍລິສັດ

1.4 ຂໍ້ມູນທົ່ວໄປຂອງບໍລິສັດ

2. ຖານະການເງິນ ແລະ ຜົນການດຳເນີນທຸລະກິດ

2.1 ເສດຖະກິດມະຫາພາກ ສປປ ລາວ ປີ 2021

2.2 ຜົນທຸລະກິດພື້ນເດັ່ນ

2.3 ຂໍ້ມູນທາງດ້ານການເງິນທີ່ສຳຄັນ

2.3.1 ລາຍຮັບ

2.3.2 ກຳໄລ ແລະ ຂາດທຶນ

2.3.3 ຊັບສິນທັງໝົດ

2.3.4 ໜີ້ສິນທັງໝົດ

3. ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ຄະນະກຳມະການ

3.1 ສະພາບໍລິຫານ

3.1.1 ສະມາຊິກສະພາບໍລິຫານ

3.1.2 ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

3.2 ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

4. ຄວາມຮັບຜິດຊອບໃນສັງຄົມ

4.1 ການມອບພັນທະພາສີອາກອນ

4.2 ການມີສ່ວນຮ່ວມໃນວຽກງານສັງຄົມ

5. ແຜນການດຳເນີນທຸລະກິດປະຈຳປີ 2022

1. ຂໍ້ມູນກ່ຽວກັບບໍລິສັດ

1.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງການເງິນ ແລະ ສູນກາງການວາງສະແດງ, ສູນກາງການບໍລິການຂອງປະເທດລາວ.

1.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

1.3 ແນະນຳບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍ ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕ່ອນເໜືອ ຈຳກັດ ທີ່ຮ່ວມກັນສ້າງຕັ້ງຂຶ້ນ ລະຫວ່າງກຸ່ມບໍລິສັດ ກໍ່ສ້າງ ລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ. ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019 (ຊື່ ຫຼັກຊັບ “VCL”), ທຶນຈົດທະບຽນໃນປະຈຸບັນແມ່ນ 147,199,900,000 ກີບ.

ກິດຈະການຫຼັກ ຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າ ວຽງຈັນເຊັນເຕີ ແລະ ຫັກເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງເຊິ່ງ ເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການເກັບຄ່າເຊົ່າປ້າຍໂຄສະນາ, ການ ເກັບຄ່າເຊົ່າສຳນັກງານຫ້ອງການ .

ໂດຍຜ່ານການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບແບບການ ດຳເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການໄດ້ດຶງດູດທຸລະກິດທີ່ມີຊື່ສຽງ ເຊັ່ນ: ທະນາຄານແຫ່ງ ສປ ຈີນ, ຮ້ານກາເຟອາເມຊອນ, ຮ້ານມິນິໂຊ, ແລະວິສາຫະກິດຕ່າງປະເທດຂະໜາດໃຫຍ່ ເຊັ່ນ: ບໍລິສັດລິດ ໄຟລາວຈີນ, ບໍລິສັດໄຟຟ້າເກົາຫລີ, ບໍລິສັດ ປະກັນໄພຮຸ່ງເຄັນໂຊ ໄດ້ເຂົ້າມາເຊົ່າພື້ນທີ່ຮ້ານຄ້າ ແລະ ອາຄານ ສຳນັກງານ ຂອງບໍລິສັດ ວຽງຈັນເຊີນເຕີ ລາວ ມະຫາຊົນ. ມາເຖິງປະຈຸບັນ ວຽງຈັນເຊີນເຕີ ໄດ້ສ້າງເປັນສູນກາງ ການຄ້າ ສູນກາງສຳນັກງານ ສູນກາງທາງດ້ານການເງິນ ແລະ ສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນ

ແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະຕົວແບບການຮ່ວມມື ຂອງລັດຖະບານສອງຊາດລາວ ຈີນ.

1.4 ຂໍ້ມູນທົ່ວໄປຂອງບໍລິສັດ

1.4.1 ທີ່ຕັ້ງ

ສຳນັກງານຂອງ ວຈຊຕ ຕັ້ງຢູ່ ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ

1.4.2 ຕິດຕໍ່ ແລະ ພົວພັນ

ເບີໂທ (+856-21) 228299

ແຟັກ (+856-21) 228299

ເວັບໄຊ: http://www.vclao.com/

1.4.3 ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2021 ແມ່ນ 147,199,900,000 ກີບ.

1.4.4 ຂໍ້ມູນກ່ຽວກັບຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງ ວຈຊຕ ທີ ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ນະວັນທີ 11 ມີນາ 2022 ໄດ້ແກ່:

1. ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕ່ອນເໜືອ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 95.999.200 ຮຸ້ນ ເທົ່າກັບ 65.22% ຂອງຈຳນວນຮຸ້ນທັງໝົດ.
2. ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 47.471.000 ຮຸ້ນ ເທົ່າກັບ 32.25% ຂອງຈຳນວນຮຸ້ນທັງໝົດ.

2. ຖານະການເງິນ ແລະ ຜົນການດຳເນີນທຸລະກິດ

2.1 ເສດຖະກິດມະຫາພາກ ສປປ ລາວ ປີ 2021

ໃນປີ 2021 ທີ່ຜ່ານມາ ພາບລວມເສດຖະກິດຂອງລາວ ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ COVID-19 ຢ່າງໜັກໜ່ວງ. ນັບຕັ້ງແຕ່ເດືອນເມສາປີ 2021, ທາງລັດຖະບົນລາວໄດ້ອອກໜັງສືແຈ້ງການເພື່ອປ້ອງການ ສະກັດກັ້ນການແຜ່ລະບາດຂອງພະຍາດ COVID-19 ມີການກະທົບຕໍ່ການດຳເນີນທຸລະກິດຂອງ ວຈຊຕ ກໍຄື ການປິດດ່ານສາກົນ ແລະ ທ້ອງຖິ່ນ ສ້າງຄວາມບໍ່ສະດວກໃຫ້ແກ່ການຂົນສົ່ງສິນຄ້າ ມີການກະທົບຕໍ່ການນຳເຂົ້າ ແລະ ການສັນຈອນສິນຄ້າຂອງລູກຄ້າ, ແລະ ລັດຖະບານລາວໄດ້ມີການສັ່ງເຈາະກິດຈະກຳທີ່ເຕົ້າໂຮມຫຼາຍຄົນ ເຊັ່ນງານ

ດອງ ງານໂຄສະນາສິນຄ້າ ແລະງານອື່ນໆ ເຮັດໃຫ້ລູກຄ້າຫຼາຍທ່ານໄດ້ມີການຍົກເລີກການຈອງພື້ນທີ່ຈັດງານ ຈຳນວນຄັ້ງການຈັດງານຕ່າງໆກໍມີການໜ້ອຍລົງ, ອີກຢ່າງໜຶ່ງ ສະຖານະການການແຜ່ລະບາດຂອງພະຍາດ ກໍ່ໄດ້ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຂອງບັນດາລູກຄ້າທີ່ເຊົ່າຫ້ອງການນຳ ວຈຊຕ ເຮັດໃຫ້ງົບປະມານຂອງລູກຄ້າ ມີການຕັດລົງ.

ພ້ອມດຽວກັນນັ້ນ ການແຂ່ງຂັນໃນຂະແໜງການອະສັງຫາລິມະຊັບດ້ານການຄ້າ ກໍນັບມີນັບສູງຂຶ້ນ ກໍຄືວ່າກ່ຽວກັບທຸລະກິດການຂາຍຍອຍ, ວຈຊຕ ໄດ້ປະເຊີນໜ້າການແຂ່ງຂັນຈາກຕະຫຼາດ ແລະ ຫ້າງອື່ນທີ່ເປັນຂະແໜງດຽວກັນໃນບໍລິເວັນອ້ອມຂ້າງ ເຊັ່ນການຫຼຸດຄ່າເຊົ່າລົງຢ່າງຫຼວງຫຼາຍ ເປັນການແຂ່ງຂັນແບບຕັ້ງລາຄາຕ່ຳ ສົ່ງຜົນກະທົບບາງຢ່າງຕໍ່ທຸລະກິດ ວຈຊຕ. ອີກຢ່າງໜຶ່ງ ລູກຄ້າຂອງຂະແໜງການຫ້ອງການໃນຕະຫຼາດມີຈຳນວນຈຳກັດ ຈຳນວນການເພີ່ມຂຶ້ນຂອງລູກຄ້າໃໝ່ ກໍ່ບໍ່ຫຼາຍ ເຮັດໃຫ້ໂຄງການຫ້ອງການທີ່ສ້າງຂຶ້ນໃຫມ່ໃນຊຸມປີມໍ່ໆມານີ້ ໄດ້ມີການຫຼຸດລົງຄ່າເຊົ່າເພື່ອດຶງດູດລູກຄ້າໃຫມ່, ການແຂ່ງຂັນກໍ່ຮຸນແຮງຂຶ້ນ.

2.2 ຜົນທຸລະກິດພື້ນເດັ່ນ

ຕໍ່ກັບສະພາບທີ່ກ່າວມາຂ້າງເທິງ, ວຽງຈັນເຊັນເຕີ ໄດ້ຍຶດໝັ້ນທາແຮງທີ່ມີສູນການຄ້າ ແລະ ອາຄານຫ້ອງການປະສົມປະສານກັນ, ສືບຕໍ່ປັບປຸງຄຸນນະພາບຂອງຊັບສິນ, ສ້າງຄວາມສະດວກສະບາຍໃຫ້ແກ່ລູກຄ້າໃນການຈັບຈ່າຍໃຊ້ສອຍ ແລະ ການດຳເນີນງານ, ປັບປຸງຄຸນນະພາບການບໍລິການຢ່າງຮອບດ້ານ ແລະ ໃຫ້ນະໂຍບາຍການສະໜັບສະໜູນແກ່ລູກຄ້າໃນໄລຍະການລະບາດຂອງພະຍາດ COVID-19 ສ້າງອັດຕາການໃຫ້ເຊົ່າໃຫ້ມີສະຖຽນລະພາບ.

ມາຮອດວັນທີ 31 ທັນວາ 2021, ໂຊນຕຶກສຳນັກງານມີທັງໝົດ 25 ບໍລິສັດ, ໃນນັ້ນ ມີ 2 ບໍລິສັດເປັນລູກຄ້າໃໝ່ໃນປີ 2021 ກໍຄືບໍລິສັດເຫຼົ້າເໝົາທາຍຈີນ ແລະ ນູເທັກລາວ. ໂຊນສູນການຄ້າມີທັງໝົດ 177 ຫົວໜ່ວຍທຸລະກິດ, ຫົວໜ່ວຍທຸລະກິດໃໝ່ທີ່ສຳຄັນໃນປີ 2021 ລວມມີ Crowne Plaza (Elephant Lounge ຂອງໂຮງແຮມຄຣາວພລາຊາ), ຮ້ານ Apple, ຮ້ານໂພນໄຊ, ຮ້ານທອງແກ້ວ ແລະ ຮ້ານຂາຍເຄື່ອງປະດັບແບຣນ Jamiena, ຮ້ານຊານົມ Kongkoo ແລະ Shiba ຂອງປະເທດໄທ, ຮ້ານຂາຍເຄື່ອງເຟີນີເຈີລາວ ລ້ານຊ້າງ, ຊຸດຊັ້ນໃນຂອງຍີ່ປຸ່ນ Wacoal, ຮ້ານຂາຍເຄື່ອງເຟີນີເຈີ CBD, Tory Burch ແລະ ຍີ່ຫໍ້ອາເມລິກາ Marc Jacobs, ແລະອື່ນໆ. ເພື່ອສົ່ງເສີມວຽກງານການຊອກຫາລູກຄ້າມາເຊົ່າພື້ນທີ່ຈັດກິດຈະກຳ, ທີມງານ ວຈຊຕ ຫັນໄປສູ່ທິດທາງບໍລິການຈັດງານດ້ວຍຕົນເອງຢ່າງຫ້າວຫັນ, ໃນຂະນະທີ່ມີມາດຕະການປ້ອງກັນການລະບາດຂອງພະຍາດ, ໄດ້ມີການຈັດກິດຈະກຳແບບຂະໜາດໃຫຍ່ ແລະ ກາງ 30 ຄັ້ງ ຂຶ້ນຢ່າງປອດໄພ ເຊັ່ນ: ງານເປີດຕົວ OPPO Reno5, ງານນຳ

ສະເໜີສະບູ່ຍີ່ຫໍ້ໄທ ແລະ ຮ່ວມມືກັບສະມາຄົມອຸດສາຫະກຳ ແລະ ການຄ້າຂອງລາວ ໃນການຈັດງານວາງສະແດງ ການທ່ອງທ່ຽວພາຍໃນປະເທດລາວ Let's Travel II, ການແຂ່ງຂັນການເຕັ້ນຮອບຊະນະເລີດ ຂອງ Pepsi Blackpink, ງານໂຄສະນາ Land Rover, Jaguar, Nissan ແລະອື່ນໆ ສາມາດດຶງດູດຜູ້ບໍລິໂພກເຂົ້າມາຈັບຈ່າຍໃຊ້ສອຍຢູ່ສູນການຄ້າເປັນຈຳນວນຫຼາຍ ໃນໄລຍະທີ່ເກີດພະຍາດລະບາດ.

2.3 ຂໍ້ມູນທາງດ້ານການເງິນທີ່ສຳຄັນ

2.3.1 ລາຍຮັບ

ໃນປີ 2021, ລາຍໄດ້ຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 9.077.518.440,00 ກີບ, ມີການຫຼຸດລົງ 17,5% ຈາກປີທີ່ແລ້ວ. ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 3.284.684.938,64 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີຫ້ອງການ ແມ່ນເປັນເງິນ 4.161.389.339,39 ກີບ, ລາຍໄດ້ຈາກການຮ່ວມທຸລະກິດ ແມ່ນເປັນເງິນ 383.892.231 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີຈັດງານ ແມ່ນເປັນເງິນ 754.859.254,2 ກີບ, ລາຍໄດ້ຈາກການໃຫ້ເຊົ່າປ້າຍໂຄສະນາ ແມ່ນເປັນເງິນ 492.692.676,77 ກີບ.

ເຫດຜົນທີ່ລາຍຮັບຫຼຸດລົງໃນປີ 2021: ໜຶ່ງແມ່ນຍ້ອນມີການແຜ່ລະບາດຂອງພະຍາດໂຄວິດ-19 ທາງລັດຖະບານລາວສັ່ງເຈາະກິດຈະກຳທີ່ເຕົ້າໂຮມຫຼາຍຄົນ ເຊັ່ນງານດອງ ງານໂຄສະນາສິນຄ້າ ແລະອື່ນໆ ເຮັດໃຫ້ບັນດາລູກຄ້າໄດ້ມີການຍົກເລີກສັນຍາເຊົ່າພື້ນທີຈັດງານ. ສອງແມ່ນ ວຈຊຕ ໄດ້ມີການປິດບໍລິການເກືອບ 3 ເດືອນໃນປີ 2021, ເພື່ອສົ່ງເສີມວຽກງານການຊອກຫາລູກຄ້າ ວຈຊຕ ຍັງໄດ້ສ້າງນະໂຍບາຍຍົກເວັ້ນຄ່າເຊົ່າພື້ນທີໃຫ້ກັບລູກຄ້າບາງສ່ວນ ແລະ ຫຼຸດຄ່າເຊົ່າລົງໂດຍອີງຕາມລາຄາເຊົ່າໃນທ້ອງຕະຫຼາດ. ສາມແມ່ນຍ້ອນທຸລະກິດຂອງລູກຄ້າບາງສ່ວນ ທີ່ເຊົ່າພື້ນທີຫ້ອງການນຳ ວຈຊຕ ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ອັນໜັກໜວງ ເຮັດໃຫ້ງົບປະມານການເຊົ່າຫ້ອງການມີການຫຼຸດລົງຫຼາຍ ຈຶ່ງຍົກເລີກລາຍການການເຊົ່າຫ້ອງການ.

2.3.2 ກຳໄລ ແລະ ຂາດທຶນ

ໃນປີ 2021, ລາຍຈ່າຍທັງໝົດຂອງ ວຈຊຕ ແມ່ນ 2.168.144.303,00 ກີບ, ລາຍຮັບຈາກການປ່ຽນແປງຂອງມູນຄ່າຍຸດຕິທຳແຫ່ງການລົງທຶນ ຂອງຂະແໜງອະສັງຫາລິມະຊັບ ແມ່ນ 1.534.358.840,00 ກີບ, ລາຍຮັບຈາກການປ່ຽນແປງຂອງອັດຕາແລກປ່ຽນ ແມ່ນ 2.797.136.009,00 ກີບ, ລາຍຈ່າຍຂອງດອກເບ້ຍ 1.704.837.604,00ກີບ, ກຳໄລກ່ອນເສຍອາກອນແມ່ນ 9.536.031.382,00 ກີບ, ອາກອນກຳໄລແມ່ນ

1.493.636.087,00 ກີບ, ກຳໄລສຸດທິແມ່ນ 8.042.395.295,00 ກີບ ມີການຫຼຸດລົງ 13% ຈາກປີທີ່ແລ້ວ ໂດຍຍ້ອນຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ລາຍຮັບມີການຫຼຸດລົງຫຼາຍ ແລະມີການກະທົບຕໍ່ກຳໄລສຸດທິ.

2.3.3 ຊັບສິນທັງໝົດ

ໃນປີ 2021, ຊັບສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 200.177.031.937,00 ກີບ, ມີການຫຼຸດລົງ 22% ຈາກປີທີ່ແລ້ວ. ສາເຫັດທີ່ຫຼຸດລົງ ແມ່ນຍ້ອນວ່າໄດ້ມີການຊຳລະເງິນກູ້ຕົ້ນທຶນເປັນເງິນ 64.232.500.000,00 ກີບ ຄືນໃຫ້ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນ ເໜືອ ຈຳກັດໃນເດືອນຕຸລາ ປີ 2021, ເຮັດໃຫ້ໜີ້ສິນ ແລະ ເງິນສົດຂອງບໍລິສັດ ມີການຫຼຸດໜ້ອຍລົງພ້ອມກັນ ເຊິ່ງເຮັດໃຫ້ຊັບສິນທັງໝົດມີການຫຼຸດລົງ.

2.3.4 **ໜີ້ສິນທັງໝົດ**

ໃນປີ 2021, ໜີ້ສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 18.883.466.392,00 ກີບ, ມີການຫຼຸດລົງ 77% ຈາກປີທີ່ແລ້ວ. ສາເຫັດທີ່ຫຼຸດລົງ ແມ່ນຍ້ອນວ່າໄດ້ມີການຊຳລະເງິນກູ້ຕົ້ນທຶນຄືນໃຫ້ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດໃນເດືອນຕຸລາ ປີ 2021.

3.ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ຄະນະກຳມະການ

3.1 ສະພາບໍລິຫານ

3.1.1 ສະມາຊິກສະພາບໍລິຫານ

ສະພາບໍລິຫານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສະໄໝທີ່ 2 ປະກອບດ້ວຍ 11 ທ່ານ:

- ທ່ານ ຫວັງ ເຫວີຍຄຸນ (Mr. Wang Weikun) ເປັນປະທານ
- ທ່ານ ນາງ ອໍລະໄທ ສັນຕິຖິງຄາ ເປັນຮອງປະທານ
- ທ່ານ ຫຼີ ສ່ຽວຕົ໋ງ (Mr. Li Xiaodong) ເປັນສະມາຊິກ, ຜູ້ອຳນວຍການໃຫຍ່
- ທ່ານ ບຸລະພາ ສັນຕິຖິງຄາ ເປັນສະມາຊິກ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ
- ທ່ານ ຊຸນ ເຟີຍຫູ້ (Mr. Sun Feihu) ເປັນສະມາຊິກ
- ທ່ານ ຫຼໍ ສ້ຽວຕົ໋ງ (Mr. Luo Xiaodong) ເປັນສະມາຊິກ

- ທ່ານ ສ່ຽວ ໂຢງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ
- ທ່ານ ຈ່າງ ທຽນຢີ (Ms. Zhang Tianyi) ເປັນສະມາຊິກອິດສະຫຼະ
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ
- ທ່ານ ຈໍຊິ່ງ ບິວສີເນັ່ງມາ ເປັນສະມາຊິກອິດສະຫຼະ

3.1.2 ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

（1）ທ່ານ ຫວັ່ງ ເຫວີຍຄຸນ (Mr. Wang Weikun)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 15/05/1984
- ພາສາ: ຈີນ,ອັງກິດ
- ຕຳແໜ່ງ: ປະທານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ. ລະດັບປະລິນຍາໂທຢູ່ມະຫາວິທະຍາໄລວາຊີດາ ຍີ່ປຸ່ນ, ສາຂາການພົວພັນສາກົນ.

（2）ທ່ານ ນາງ ອໍລະໄທ ສັນຕິຄົງຄາ



- ສັນຊາດ: ລາວ

- ວັນເດືອນປີເກີດ: 21/01/1979
- ພາສາ: ລາວ,ໄທ
- ຕຳແໜ່ງ: ຮອງປະທານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

（3）ທ່ານ ຫຼີ ສ່ຽວຕົ໋ງ (Mr. Li Xiaodong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 24/12/1985
- ພາສາ: ຈີນ,ອັງກິດ
- ຕຳແໜ່ງ: ເປັນສະມາຊິກ, ຜູ້ອຳນວຍການໃຫຍ່
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ຮຽນຢູ່ມະຫາວິທະຍາໄລອູຫ້ານຫຼີ້ກົ່ງ, ສາຂາບໍລິຫານທຸລະກິດ.

（4） ທ່ານ ບຸລະພາ ສັນຕິຄົງຄາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 06/02/1967

- ພາສາ: ຈີນ, ລາວ
- ຕຳແໜ່ງ: ເປັນສະມາຊິກ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໜານຫຼີກົງ ຈີນ , ສາຂາບໍລິຫານທຸລະກິດ.

（5）ທ່ານ ອູ່ ຊິງຫວາ (Mr. Wu Xinghua)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 09/01/1984
- ພາສາ: ຈີນ, ອັງກິດ, ລາວ, ໄທ
- ຕຳແໜ່ງ: ເປັນສະມາຊິກ, ອຳນວຍການຝ່າຍປະຕິບັດການ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສັມຊັ່ນ (Assumption Thai), ສາຂາບໍລິຫານທຸລະກິດ.

（6）ທ່ານ ຊຸນ ເຟີຍຫູ້ (Mr. Sun Feihu)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 17 /03/1986
- ພາສາ: ຈີນ

- ຕຳແໜ່ງ: ເປັນສະມາຊິກ, ອຳນວຍການຝ່າຍການເງິນ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລການເງິນ ຢຸນນານ ຈີນ, ສາຂາບໍລິຫານທຸລະກິດ..

（7）ທ່ານ ຫຼໍ ສ້ຽວດົ້ງ (Mr. Luo Xiaodong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 07/03/1989
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢຸນ ນານ ຈີນ, ສາຂາການເງິນ-ບັນຊີ.

（8）ທ່ານ ສ່ຽວ ໂຢງ (Mr. Xiao Yong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 02/07/1977
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ

- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ້ງ ສປຈີນ, ສາຂາການເງິນ.

（9）ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 25/10/1976
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລ ແຂວງຢຸນນານ ສປຈີນ, ສາຂາກົດໝາຍ.

（10）ທ່ານ ວຽງສະຫວັນ ພັນທະລີ



- ສັນຊາດ: ລາວ
- ວັນເດືອນປີເກີດ: 25/01/1976
- ພາສາ:ລາວ, ອັງກິດ, ໄທ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ

ສາຂາກົດໝາຍວ່າດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

（11）ທ່ານ ຈໍຊິ່ງ ບົວສີເມັ່ງມາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 15/12/1972
- ພາສາ: ລາວ, ອັງກິດ, ໄທ, ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

3.2 ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.2.1 ໃນປີ 2021, ຄະນະກຳມະການໄດ້ຈັດກອງປະຊຸມທັງ ໝົດ 7 ຄັ້ງ, ໃນນັ້ນ, ກອງປະຊຸມສາມັນ 4 ຄັ້ງ, ກອງປະຊຸມວິສາມັນ 3 ຄັ້ງ, ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 1 ຄັ້ງ ແລະ ກອງປະຊຸມວິສາມັນຜູ້ຖືຮຸ້ນ 1 ຄັ້ງ.

3.2.2 ອີງຕາມລະບຽບການທີ່ກ່ຽວຂ້ອງຂອງຄະນະກາມະການຄຸ້ມຄອງຫຼັກຊັບລາວ,ຄະນະກຳມະ ການຄັດເລືອກໄດ້ດຳເນີນການຄັດເລືອກລາຍຊື່ຂອງສະມາຊິກສະພາບໍລິຫານ ສະໄໝທີ່ສອງ ເພື່ອປ່ຽນແທນຜູ້ທີ່ລາອອກ ແລະ ສະໜອງຂໍ້ມູນພື້ນຖານໃຫ້ບັນດາສະມາຊິກສະພາບໍລິຫານ ໃນການຕັດສິນໃຈ, ແລະໄດ້ມີການສະເໜີຕໍ່ກອງປະຊຸມສະພາບໍລິຫານ ເພື່ອພິຈາລະນາ ແລະ ຮັບຮອງ.

3.2.3 ເພື່ອຮັບປະກັນຄວາມຖືກຕ້ອງ ຂອງບົດລາຍງານການເງິນຕ່າງໆ, ຄະນະກາມະການກວດສອບ ໄດ້ມີການປະຊຸມ 4 ຄັ້ງ ເພື່ອປະຕິບັດວຽກງານການກວດສອບບົດລາຍງານການເງິນຂອງໄຕມາດທີ່ 1, ໄຕມາດທີ່ 2, ໄຕມາດທີ່ 3 ແລະ ປະຈຳປີ ຂອງປີ 2020 ເປັນຢ່າງດີ ໂດຍອີງຕາມແຜນວຽກປະຈຳປີ.

4. ຄວາມຮັບຜິດຊອບໃນສັງຄົມ

4.1 ການມອບພັນທະພາສີອາກອນ

ໃນປີ 2021, ການມອບພັນທະອາກອນປະຈຳປີທັງໝົດຂອງ ວຈຊຕ ແມ່ນເປັນເງິນ14,845 ລ້ານກີບ ເຊິ່ງມີລາຍລະອຽດຄືດັ່ງລຸ່ມນີ້:

ດ/ລ	ລາຍການ	ຈຳນວນເງິນ(ກີບ)	
		ປີ 2021	ປີ 2020
1	ອາກອນກຳໄລ	845.93	35,667.89
2	ອາກອນມູນຄ່າເພີ່ມ	-	17,283.75
3	ອາກອນລາຍໄດ້	638.58	771.35
4	ອາກອນອື່ນ	-	-
ລວມ		1,484.51	53,722.99

4.2 ການມີສ່ວນຮ່ວມໃນວຽກງານສັງຄົມ

4.2.1 ໃນປີ 2021, ເມື່ອການລະບາດຂອງພະຍາດໂຄວິດ-19 ຄັ້ງທີ 2 ຢູ່ລາວ, ວຈຊຕ ໄດ້ຮ່ວມມືກັບ ກະຊວງສາທາລະນະສຸກລາວ ແລະ ສະຖານທູດຈີນ ເພື່ອສ້າງຕັ້ງຈຸດສັກຢາວັກຊີນຟຣີໃຫ້ປະຊາຊົນຢູ່ສູນການຄ້າ ວຽງຈັນເຊັນເຕີ, ສຳເລັດການສັກວັກຊີນຫຼາຍກວ່າ 13,500 ໂຕຣດ, ແລະ ໄດ້ຮັບໄຊຊະນະ. ກະຊວງສາທາຣະ ນະສຸຂລາວ ໄດ້ມອບໃບກຽດຕິຄຸນໃຫ້ແກ່ສູນການຄ້າວຽງຈັນເຊັນເຕີ ທີ່ມີຜົນງານໃນການປະກອບສ່ວນໃນ ການຈັດຕັ້ງປະຕິບັດການໃຫ້ວັກຊີນປ້ອງການພະຍາດໂຄວິດ-19.



4.2.2 ເປັນເຈົ້າການໃຫ້ບໍລິການ ແລະ ອຳນວຍຄວາມສະດວກ ສາຫຼັບກິດຈະກຳຫາທຶນເພື່ອການກູ້ສົມໃນລາວ, ຈຳນວນເງິນທີ່ລະດົມໄດ້ໃນປີ 2021 ທັງໝົດແມ່ນ 9,626,000 ກີບ.





5. ແຜນການດຳເນີນທຸລະກິດປະຈຳປີ 2022

5.1 ທຸລະກິດຂອງຫ້າງ

5.1.1 ສືບຕໍ່ສ້າງສາລະບົບການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19, ເຮັດໃຫ້ກາຍເປັນແຖວໜ້າຂອງຂະແໜງການບໍລິຫານຫ້າງໃນຍຸກຄວາມປົກກະຕິຮູບແບບໃໝ່

ປີ 2022 ຈະເປັນຍຸກຄວາມປົກກະຕິຮູບແບບໃໝ່ແຫ່ງການແຜ່ລະບາດຂອງພະຍາດໂຄວິດ-19, ໃນ

ຂະນະທີ່ໄດ້ປະຕິບັດຕາມມາດຖານການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ກຳນົດໂດຍອົງການປົກຄອງນະຄອນ ຫຼວງວຽງຈັນ, ສູນການຄ້າ ວຈຊຕ ໄດ້ປະຕິບັດລະບົບການປ້ອງກັນ ແລະ ຄວບຄຸມ ເປັນແບບ “ປອດໄພ ແລະ ສະອາດ” ຢ່າງເຂັ້ມງວດ, ສ້າງໂຄງການເປັນແຖວໜ້າຂອງຂະແໜງການບໍລິຫານຫ້າງໃນຍຸກຄວາມປົກກະຕິຮູບແບບໃໝ່, ແລະ ເພີ່ມທະວີການໂຄສະນາແບຣນທີ່ເປັນທຸລະກິດຂະຫນາດໃຫຍ່, ເຊັ່ນ: ໂຮງສາຍຮູບເງົາ, ແລະພະຍາຍາມສ້າງຈຸດຂັບເຄື່ອນການໄຫຼເຂົ້າຂອງຜູ້ບໍລິໂພກ ແລະ ສົມທົບຄກັບແຜນການຈັດກິດຈະກຳການຕ່າງໆ ເພື່ອເລັ່ງການຟື້ນຟູການຈັບຈ່າຍໃຊ້ສອຍຂອງຜູ້ບໍລິໂພກ , ສິ່ງເສີມທຸລະກິດ "ແບຣນທຳອິດໃນລາວ", ແລະ ເສີມຂະຫຍາຍທຸລະກິດຂອງຍີ່ຫໍ້ສາກົນ ເພື່ອເປີດຮ້ານໃນສູນການຄ້າ ວຈຊຕ.

5.1.2 ສິ່ງເສີມການໂຄສະນາ ແລະ ການຊື້ຂາຍອອນໄລ, ພັດທະນາທຸລະກິດການຮັບຈ້າງຈັດກິດຈະກຳ.

ອັນທີໜຶ່ງ, ສືບຕໍ່ສິ່ງເສີມກິດຈະກຳການຖ່າຍທອດໃນສູນການຄ້າ ວຈຊຕ ສົດເພື່ອຂາຍເຄິ່ງອອນໄລ, ສ້າງເປັນເວທີການຂາຍເຄິ່ງດ້ອຍການໄລສົດ ທີ່ມີມາດຕະຖານ ແລະ ຜົນປະໂຫຍດສູງຂຶ້ນ; ລົງເລິກການຮ່ວມມືກັບບັນດາຮ້ານຄ້າແອັບ **APP** ອອນໄລນ໌ ເພື່ອຊຸກຍູ້ຂະບວນການຂາຍສິນຄ້າທາງອອນໄລຂອງບັນດາຮ້ານຄ້າ, ເຮັດໃຫ້ຍອດຂາຍທາງອອນໄລມີການເພີ່ມຂຶ້ນ; ອັນທີສອງ, ແມ່ນຈະມີການເຈລະຈາກັບຜູ້ປະກອບການຈີນ, ໄທ ແລະ ຍີ່ຫໍ້ອື່ນໆ ທີ່ມີຊື່ສຽງໃນສາກົນຢ່າງຕັ້ງໜ້າ, ສິ່ງເສີມວຽກງານການຊອກຫາລູກຄ້າ ໂດຍຜ່ານການຫຼາຍຊອງທາງ ຫຼາຍຮູບແບບ ເຊັ່ນການຮັບຊື້ການນຳໃຊ້ສິດຂອງແບຣນດ້ວຍຕົນເອງ ຫຼື ຊອກຫາຜູ້ຕົວແທນຈຳໜ່າຍເປັນຜູ້ລົງທຶນ; ອັນທີສາມ, ສູນການຄ້າ ວຈຊຕ ຈະອີງໃສ່ທ່າແຮງຂອງຕົນ ເຊັ່ນ ມີທີມງານ ບຸກຄະລາກອນທີ່ມີປະສົບການໃນການວາງແຜນຈັດງານ ແລະ ການອອກແບບ ສະໜອງບໍລິການແບບປະຕູດຽວໃຫ້ລູກຄ້າ ກໍຄືການວາງແຜນຈັດງານ ເປັນຜູ້ໃຫ້ເຊົ່າພື້ນທີ ແລະ ອຸປະກອນ ເພື່ອຈັດກິດຈະກຳ, ສ້າງຈຸດເຕີບໂຕກຳໄລໃຫມ່, ສ້າງວົງຈອນການໂຕ້ຕອບທີ່ອັນດີງາມໃຫ້ການໄຫຼເຂົ້າຂອງຜູ້ບໍລິໂພກ ແລະ ການສິ່ງເສີມການລົງທຶນ.

5.2 ທຸລະກິດຂອງອາຄານສຳນັກງານ

5.2.1 ໃຫ້ສືບຕໍ່ເພີ່ມທະວີການຊອກຫາວິສາຫະກິດທີ່ໃກ້ຈະໝົດອາຍຸສັນຍາເຊົ່າກັບສຳນັກງານອື່ນໃນລາວ, ຍົກສູງມາດຕະຖານການບໍລິການ

ອັນທີໜຶ່ງແມ່ນດຳເນີນການຊອກຫາລູກຄ້າໂດຍການໄປຢ້ຽມຢາມລູກຄ້າທີ່ມີຢູ່ໃນທ້ອງຕະຫຼາດລາວ, ແລະ ຕິດຕໍ່ພົວພັນກັບຫ້ອງການເສດຖະກິດ ແລະ ການຄ້າຂອງສະຖານທູດຈີນ ເພື່ອຊອກຮູ້ຂ່າວຫຼ້າສຸດຂອງວິສາ

ທະກິດທີ່ເຂົ້າມາລົງທຶນໃນລາວ, ພ້ອມກັນນັ້ນ, ກໍ່ເພີ່ມທະວີການໂຄສະນາຕົກອາຄານສຳນັກງານຢູ່ພາຍນອກ, ສ້າງນະໂຍບາຍສົ່ງເສີມການໃຫ້ເຊົ່າພື້ນທີສຳນັກງານໃນໄລຍະເກີດການແຜ່ລະບາດຂອງພະຍາດໂຄວິດ-19, ເພື່ອສຳເລັດການໃຫ້ເຊົ່າພື້ນທີສຳນັກງານ, ເພີ່ມອັດຕາສ່ວນການໃຫ້ເຊົ່າພື້ນທີຂອງອາຄານສຳນັກງານ. ອັນທີ ສອງ ແມ່ນການເຊື່ອມຕໍ່ລະຫວ່າງອາຄານສຳນັກງານ ແລະ ສູນການຄ້າ, ເພື່ອສ້າງຄວາມຮ່ວມມືລະຫວ່າງ ອາຄານໃຫ້ມີຄວາມເລິກເຊິ່ງເຕີມອີກ, ຂະຫຍາຍລະດັບການແບ່ງປັນຂໍ້ມູນຂ່າວສານ, ພ້ອມກັນນັ້ນໄດ້ປັບປຸງ ມາດຕະຖານການບໍລິການ, ສືບຕໍ່ປັບປຸງມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການບໍລິການພາຍໃຕ້ "ຍຸກຄວາມປົກກະຕິຮູບແບບໃໝ່".

5.2.2 ສ້າງອາຄານສານັກງານ ວຈຊຕ ເປັນຍີ່ຫໍ້ດັງທີ່ມີຮູບລັກສະນະແບບມືອາຊີບ

ອາຄານຫ້ອງການ ວຽງຈັນເຊັນເຕີ ໄດ້ນຳໃຊ້ມາດຕະການໂດຍໄວໃນໄລຍະການລະບາດຂອງພະຍາດ ໂຄວິດ-19, ພ້ອມມີການສົມທົບກັບນະໂຍບາຍການປ້ອງກັນ ແລະ ຄວບຄຸມການລະບາດຂອງລັດຖະບານ ລາວ, ໄດ້ປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມໃນແຕ່ລະໄລຍະຕ່າງໆ, ໃນເວລາປະສານງານກັບລູກ ຄ້າໃນການເຄື່ອນໄຫວວຽກງານ, ຮັກສາຄວາມປອດຊັບສິນ ແລະ ພະນັກງານໄດ້ດີ ພ້ອມມີການໂຄສະນາໃຫ້ ຮັບຮູ້ທົ່ວເຖິງ ສ້າງອາຄານສຳນັກງານ ວຈຊຕ ເປັນຍີ່ຫໍ້ດັງທີ່ມີຮູບລັກສະນະແບບມືອາຊີຂຶ້ນ. ໃນປີ 2022, ພະແນກອາຄານຫ້ອງການ ຈະເພີ່ມການໂຄສະນາຍີ່ຫໍ້ອອນໄລນ໌ແລະອອບໄລນ໌ ດ້ວຍທ່າແຮງຂອງຕົນກໍຄືມີ ບໍລິສັດທີ່ມີຊື່ສຽງລະດັບສາກົນເຂົ້າມາເປີດຫ້ອງການຢູ່ ວຈຊຕ ເຊັ່ນ: ບໍລິສັດ ເຫຼົ້າເໝົາທາຍ ຈີນ, ບໍລິສັດ ປະກັນໄພ Prudential, DKSH, THPC, ແລະອື່ນໆ.

ປະທານສະພາບໍລິຫານ

[ເອກະສານຄັດຕິດ 5]

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ເຫີຈຸ່ນ (Mr. HE Jun)
ສັນຊາດ:	ຈີນ
ວັນເກີດ:	11 /04/1989
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທ ຢູ່ທີ່ມະຫາວິທະຍາໄລ ຢຸນນານ ຈີນ ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- ແຕ່ປີ 2012-2016 ເປັນຫົວໜ້າຝຶກອົບຮົມ ພະແນກບຸກຄະລາກອນ ບໍລິສັດ ຢຸນນານກໍ່ສ້າງ ເລກ4 ຈຳກັດ
- ແຕ່ປີ 2016-2017 ເປັນຫົວໜ້າພະແນກບຸກຄະລາກອນ ບໍລິສັດ ຢຸນນານລົງທຶນຕ່າງປະເທດ ຈຳກັດ

- ແຕ່ປີ 2019-2019 ເປັນຮອງອຳນວຍການ ປະຈຳການ ບໍລິສັດ ເປໂຕຣເຄມີ ລາວ ຈຳກັດ

- ແຕ່ປີ2019-2021 ເປັນຮອງອຳນວຍການ ບໍລິສັດ ບໍລິສັດ ເປໂຕຣເຄມີ ລາວ ຈຳກັດ

- ແຕ່ປີ 2021-ປະຈຸບັນ ເປັນປະທານ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນ ຕອນເໜືອ ຈຳກັດ

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ນາງ ອໍລະໄທ ສັນຕິຖິງຄາ
ສັນຊາດ:	ລາວ
ວັນເກີດ:	21/01/1979
ສະຖານທີ່ເກີດ:	ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:
  - 2008 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ ບໍລິສັດ ກຣິດຕະພິງ ກຣຸບ ຈຳກັດ.
  - 2010 ເຖິງ ປະຈຸບັນ, ຮອງປະທານ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
  - 2014 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ໂຮງແຮມ ແລນມາກ ລິເວີໄຊ
  - 2017 ເຖິງ ປະຈຸບັນ, ຮອງປະທານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ຫວັງເຫວີຍຄຸນ (Mr. Wang Weikun)

ສັນຊາດ: ຈີນ

ວັນເກີດ: 15 /05/1984

ສະຖານທີ່ເກີດ: ແຂວງຫູນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ. ລະດັບປະລິນຍາໂທຢູ່ມະຫາວິທະຍາໄລອາຊິດາ ຍີ່ປຸ່ນ, ສາຂາການພົວພັນສາກົນ.

- ປະສົບການເຮັດວຽກ:

- 2006-2009, ຮຽນປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ
- 2009-2010, ວິຊາການ ຂອງບໍລິສັດ ເຄພີເອັມຈີ ຈີນ ຈຳກັດ
- 2010-2014, ຮອງຫົວໜ້າຫ້ອງການຮ່ວມມືເສດຖະກິດໃນອະນຸພາກພື້ນລ້ານຊ້າງ-ແມ່ນ້ຳຂອງ ຂອງຄະນະກຳມະການພັດທະນາ ແລະ ປະຕິຮູບ ແຂວງຢຸນນານ
- 2014-2018, ຫົວໜ້າຫ້ອງການຮ່ວມມືເສດຖະກິດໃນອະນຸພາກພື້ນລ້ານຊ້າງ-ແມ່ນ້ຳຂອງ ຂອງ ຄະນະກຳມະການພັດທະນາ ແລະ ປະຕິຮູບ ແຂວງຢຸນນານ.
- 2014-2016, ຮຽນປະລິນຍາໂທຢູ່ມະຫາວິທະຍາໄລ ອາຊິເດ ຍີ່ປຸ່ນ, ສາຂາການພົວພັນສາກົນ
- 2018-2019, ຫົວໜ້າພະແນກແຜນການພັດທະນາຍຸດທະສາດບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນນານຈຳກັດ
- 2019-2020, ຫົວໜ້າຫ້ອງການສະພາບໍລິຫານບໍລິສັດ ລົງທຶນຕ່າງປະເທດແຂວງຢຸນນານຈຳກັດ
- 2020 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຮ່ວມທຶນລາວຈີນ ຈຳກັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ບູລະພາ ສັນຕິຖິງຄາ
ສັນຊາດ:	ຈີນ
ວັນເກີດ:	06/02 1967
ສະຖານທີ່ເກີດ:	ແຂວງເສຊວນ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົງ ຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 2005 ເຖິງ ປະຈຸບັນ, ປະທານກິຕິມະສັກສະພາການຄ້າຈີນ ປະຈຳລາວ
- 2008 ເຖິງ ປະຈຸບັນ, ປະທານບໍລິສັດລິສັດ ກຣິດຕະພົງ ກຣຸບ ຈຳກັດ
- 2009 ເຖິງ ປະຈຸບັນ, ສະມາຊິກສະພາບໍລິການສະມາຄົມຊາວຈີນຕ່າງດ້າວແຫ່ງຊາດຈີນປະຈຳ ລາວ
- 2010 ເຖິງ ປະຈຸບັນ, ຮອງປະທານສະມາຄົມຈີນວຽງຈັນລາວ
- 2011 ເຖິງ ປະຈຸບັນ, ຮອງປະທານບໍລິສັດ ລ້ຽງທຶນສາກົນແຄມຊີລາວຈຳກັດ
- 2015 ເຖິງ ປະຈຸບັນ, ປະທານສະພາການຄ້າຊາວຈີນຕ່າງດ້າວປະຈຳ ສປປ ລາວ

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ອູ່ ຊິງຫວາ (Mr. Wu Xinghua)

ສັນຊາດ: ຈີນ

ວັນເກີດ: 09/01/1984

ສະຖານທີ່ເກີດ: ແຂວງອ່ານຮຸຍ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສຳຊັ່ນ(Assumption Thai), ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:
  - 2013 ເຖິງ ປະຈຸບັນ, ຜູ້ຕ່າງໜ້າຂາຮຸ້ນ ບໍລິສັດ ລົງທຶນສາກົນແຄມຊີລາວ ຈຳກັດ.
  - 2014 ເຖິງ ປະຈຸບັນ, ຮອງອຳນວຍການບໍລິສັດ ກຣິດຕະພິງກຣຸບ ຈຳກັດ.
  - 2014 ເຖິງ ປະຈຸບັນ, ຮອງອຳນວຍການ ບໍລິສັດ ລົງທຶນສາກົນເອວີຊີລາວ ຈຳກັດ.
  - 2014-2019, ຜູ້ຕ່າງໜ້າຂາຮຸ້ນບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
  - 2015 ເຖິງ ປະຈຸບັນ, ຜູ້ຕ່າງໜ້າຂາຮຸ້ນໂຮງແຮມ ດອນຈັນພາເລດ.
  - 2019 ເຖິງ ປະຈຸບັນ, ຮອງອຳນວຍການປະຈຳການ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ເຊີ່ວ ເຟີຍຫູ້ (Mr. Sun Feihu)
ສັນຊາດ:	ຈີນ
ວັນເກີດ:	17/03/1986
ສະຖານທີ່ເກີດ:	ແຂວງເຫີເປີ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລການເງິນ ຢຸນນານ ຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

  - 2010-2012, ວິຊາການບັນຊີບໍລິສັດຮັບເໝົາກໍ່ສ້າງ ຢຸນນານຈຳກັດ.
  - 2012-2016, ຫົວໜ້າພະແນກການເງິນ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນ ເໜືອ ຈຳກັດ.
  - 2012 ເຖິງ ປະຈຸບັນ, ຫົວໜ້າພະແນກການເງິນບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນນານຈຳກັດ.
  - 2016 ເຖິງ ປະຈຸບັນ, ອຳນວຍການຝ່າຍການເງິນ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ຫຼໍ ສ້ຽວດົ້ງ (Mr. Luo Xiaodong)

ສັນຊາດ: ຈີນ

ວັນເກີດ: 07/03/1989

ສະຖານທີ່ເກີດ: ນະຄອນໂສງຊິ້ງ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢູນນານ ຈີນ, ສາຂາການເງິນ-ບັນຊີ.

- ປະສົບການເຮັດວຽກ:

  - 2009-2013, ຮຽນຢູ່ມະຫາວິທະຍາໄລການເງິນ ແຂວງຢູນນານ ຈີນ ວິຊາການບໍລິຫານການເງິນ-ບັນຊີ.
  - 2013-2014, ວິຊາການບັນຊີບໍລິສັດຮັບເໝົາການກໍ່ສ້າງ ແຂວງຢູນນານ ຈຳກັດ.
  - 2014-2015, ວິຊາການການເງິນບໍລິສັດຮ່ວມມືການພັດທະນາກະສິດກຳຟັ້ນຢ້າແຂວງຢູນນານ ຈຳກັດ.
  - 2015-2017, ວິຊາການການເງິນບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ.
  - 2017-2019, ຮອງຫົວໜ້າພະແນກການເງິນບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ.
  - 2019 ເຖິງ ປະຈຸບັນ, ຫົວໜ້າພະແນກການເງິນບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ.

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ:	ທ່ານ ສ່ຽວ ໂຢງ (Mr. Xiao Yong)
ສັນຊາດ:	ຈີນ
ວັນເກີດ:	02/07/1977
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ້ງ ສປຈີນ, ສາຂາການເງິນ.

- ປະສົບການເຮັດວຽກ:
  - ປີ 1999 – ປະຈຸບັນ ບໍລິສັດທີ່ປຶກສາບັນຊີຢ້າຫ້າຍ
  - ປີ 2010– ປະຈຸບັນ ເປັນສະມາຊິກຄະນະກຳມະການຜູ້ຊ່ຽວຊານ ຂອງຄະນະຕ່າງໆຂອງ ຫ້ອງການການເງິນແຂວງຢຸນນານ ເຊັ່ນ ຄະນະກຳມະການກວດສອບກອງທຶນເພື່ອຊີ້ນຳຂະແໜງການຕ່າງໆ ແລະ ຄະນະກຳມະການການຊຳລະສະສາງ ແລະ ການປັບປຸງຂອງຕະຫຼາດຫລັກຊັບ
  - ປີ 2011– ປະຈຸບັນ ເປັນຜູ້ຊ່ຽວຊານພາຍນອກ ຂອງຄະນະກຳມະການກວດສອບ ຂອງຄະນະກຳມະການຄຸ້ມຄອງສັບສິນແຫ່ງລັດ ແຂວງຢຸນນານ
  - ປີ 2012– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ ຂາຍຮຸ້ນ ສີເກີ ເຊີນເຈີ້ນ ສປຈີນ
  - ປີ 2013– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ ຂາຍຮຸ້ນ ເຫວີຍສີ ຢຸນນານກົ່ງໂຖວ
  - ປີ 2013– ປະຈຸບັນ ເປັນວິຊາການກວດສອບດ້ານການບໍລິຫານການເງິນ ແລະ ທີ່ປຶກສາ ບໍລິສັດ ທີ່ໄດ້ເຂົ້າຕະຫຼາດຫລັກຊັບຈີນ ເຊັ່ນບໍລິສັດໄອເອີຟາ ເຢ້ຍປາວເຊີງວູ້ ແລະ ທຽນສີງຈ້ຽນ
  - ປີ 2017 –ປະຈຸບັນ ເປັນຜູ້ອຳນວຍການບໍລິສັດທີ່ປຶກສາການຄຸ້ມຄອງບໍລິຫານ ຊີງຫົວ ລີ້ຊິ້ນ ປັກກິ່ງ
  - ປີ 2017 –ປະຈຸບັນ ເປັນຜູ້ ອຳນວຍການບໍລິສັດທີ່ປຶກສາບັນຊີ ຈົ່ງເສີ້ນຈົ້ງຫວນ ລາວ

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ: ທ່ານ ຈ່າງທຽນຢີ້ (Mr. Zhang Tianyi)

ສັນຊາດ: ຈີນ

ວັນເກີດ: 25/10/1976

ສະຖານທີ່ເກີດ: ແຂວງເສສວນ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລ ແຂວງຢຸນນານ ສປຈີນ, ສາຂາກົດໝາຍ.

- ປະສົບການເຮັດວຽກ:

  - 2008 – 2015 ເປັນທະນາຍຄວາມບໍ່ເປັນແບບສົມບູນ ບໍລິສັດກົດໝາຍປາຊຽນແຂວງຢຸນນານ ສປຈີນ;
  - 2015– ປະຈຸບັນ ເປັນທະນາຍຄວາມແບບສົມບູນ ແລະ ເປັນຄູ່ຮ່ວມທຶນ ຂອງ ບໍລິສັດກົດໝາຍ ປາຊຽນແຂວງຢຸນນານ ສປຈີນ ;
  - 2016– ປະຈຸບັນ ເປັນອຳນວຍການ ຂອງ ບໍລິສັດ ບາຈ່ຽງ ລໍ ແອນ ຄອນເຊົ້າເທິນຊີ ລາວ;
  - 2017– ປະຈຸບັນ ເປັນທີ່ປຶກສາອາວຸໂສ ບໍລິສັດກົດໝາຍ ລ້ານຊ້າງ-ແມ່ນ້ຳຂອງ ສປຈີນ;

ຕັ້ງແຕ່ທ່ານ ຈ່າງທຽນຢີ້ ເປັນທະນາຍຄວາມໃນປີ 2008 ເປັນຕົ້ນມາ, ເພິ່ນໄດ້ມີປະສົບການຫຼາຍໃນຂະແໜງການຕ່າງໆ ເຊັ່ນ ການລົງທຶນຕ່າງປະເທດ ການລະດົມທຶນໃນຕ່າງປະເທດ ການພັດທະນາພະລັງງານໃນຕ່າງປະເທດ ການກໍ່ສ້າງໂຄງຮ່າງພື້ນຖານໃນຕ່າງປະເທດ ການໄກ່ເກ່ຍຂໍ້ຂັດແຍ້ງໃນການດຳເນີນທຸລະກິດຢູ່ຕ່າງປະເທດ ໂດຍສະເພາະທາງດ້ານກົດໝາຍຂອງປະເທດອາຊຽນ ແລະ ປະເທດອາຊີໃຕ້.

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ:	ທ່ານ ຈໍຊົ່ງ ບົວສີເມັ່ງມາ
ສັນຊາດ:	ລາວ
ວັນເກີດ:	15/12/1972
ສະຖານທີ່ເກີດ:	ແຂວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:
  - 09/1998 - 09/2004 ຫົວໜ້າໜ່ວຍງານທຸລະກິດກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ໂລຫະມີຄ່າ.
  - 07/2007 - 01/2012, ຮອງຫົວໜ້າກົມຮ່ວມມືສາກົນທະນາຄານກາງແຫ່ງ ສປປ ລາວ.
  - 02/2012 - 04/2015, ຫົວໜ້າພະແນກຄຸ້ມຄອງການປະຕິບັດການພາຍທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.
  - 04/2015 ເຖິງ ປະຈຸບັນ, ຮອງອຳນວຍການທະນາຄານອຸດສາຫະກາ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ:	ທ່ານ ວຽງສະຫວັນ ພັນທະລີ
ສັນຊາດ:	ລາວ
ວັນເກີດ:	25/01/1976
ສະຖານທີ່ເກີດ:	ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ, ສາຂາກົດໝາຍວ່າດ້ວຍ ບໍລິສັດ ແລະ ກົດໝາຍຫຼັກຊັບ.

- ປະສົບການເຮັດວຽກ:

  - 09/2000 - 11/2009 ທະນາຍຄວາມ ຂອງ DFDL Lao Legal & Tax Adviser.
  - 12/2009 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ພັນທະລີ ກົດໝາຍ ຈຳກັດ.
  - 11/2016 ເຖິງ ປະຈຸບັນ, ຄູ່ຮ່ວມງານຢູ່ລາວ ຂອງ one Asia lawyers.

ເອກະສານຄັດຕິດ 6

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ: ທ່ານ ຈໍຊົ່ງ ບົວສີເມັ່ງມາ

ສັນຊາດ: ລາວ

ວັນເກີດ: 15/12/1972

ສະຖານທີ່ເກີດ: ແຂວງວຽງຈັນ

ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

ປະສົບການເຮັດວຽກ:

09/1998 - 09/2004 ຫົວໜ້າໜ່ວຍງານທຸລະກິດກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ໂລຫະມີຄ່າ.

07/2007 - 01/2012, ຮອງຫົວໜ້າກົມຮ່ວມມືສາກົນທະນາຄານກາງແຫ່ງ ສປປ ລາວ.

02/2012 - 04/2015, ຫົວໜ້າພະແນກຄຸ້ມຄອງການປະຕິບັດການພາຍທະນາຄານອຸດສາຫະກາ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.

04/2015 ເຖິງ ປະຈຸບັນ, ຮອງອຳນວຍການທະນາຄານອຸດສາຫະກາ ແລະ ການຄ້າຈີນ ສາຂາ ນະຄອນຫຼວງ ວຽງຈັນ.

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ: ທ່ານ ວຽງສະຫວັນ ພັນທະລີ

ສັນຊາດ: ລາວ

ວັນເກີດ: 25/01/1976

ສະຖານທີ່ເກີດ: ນະຄອນຫຼວງວຽງຈັນ

ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ, ສາຂາກົດໝາຍວ່າດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

ປະສົບການເຮັດວຽກ:

09/2000 - 11/2009 ທະນາຍຄວາມ ຂອງ DFDL Lao Legal & Tax Adviser.

12/2009 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ພັນທະລີ ກົດໝາຍ ຈຳກັດ.

11/2016 ເຖິງ ປະຈຸບັນ, ຄູ່ຮ່ວມງານຢູ່ລາວ ຂອງ one Asia lawyers.

[ເອກະສານຄັດຕິດ 7]

ໃບມອບສິດ

ຂຽນທີ.....

ວັນທີ.....ເດືອນ.....ປີ.....

ຂ້າພະເຈົ້າ ທ້າວ/ນາງ.....ສັນຊາດ : .....

ວັນທີເດືອນປີເກີດ.....ບັດປະຈຳຕົວ / ເລກທີໜັງສືຜ່ານແດນເລກທີ:.....,

ເຮືອນເລກທີ.....ບ້ານ.....ເມືອງ.....ແຂວງ

ປະເທດ.....;

ເປັນຜູ້ຖືຮຸ້ນຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ.....ຮຸ້ນ, ເຊິ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.

ຂໍມອບສິດໃຫ້

☐ (1)ທ້າວ/ນາງ.....ອາຍຸ.....ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ

ເຮືອນເລກທີ.....ບ້ານ.....ເມືອງ.....ແຂວງ

ປະເທດ.....; ຫຼື

☐ (2) ທ່ານ ວຽງສະຫວັນ ພັນທະລີ ອາຍຸ 45 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ A1-0010349
ເຮືອນເລກທີ ບ້ານ ແສງສະຫວ່າງ ເມືອງ ໄຊເສດຖາ ແຂວງ ນະຄອນຫຼວງວຽງຈັນ ປະເທດ ລາວ ; ຫຼື

☐ (3) ທ່ານ ຈໍຊົ່ງ ບົວສີເນ່ັງມາ ອາຍຸ 49 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ 01-18 005815
ເຮືອນເລກທີ ບ້ານ ສີສັງວອນ ເມືອງ ໄຊເສດຖາ ແຂວງ ນະຄອນຫຼວງວຽງຈັນ ປະເທດ ລາວ .

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2021 ໃນວັນທີ 29 ເມສາ 2022 ເວລາ 14:00 ໂມງ ທີ່ຫ້ອງປະຊຸມ ໄດເອີ້ມ້ອນ ຊັ້ນ 4 ຂອງໂຮງແຮມແລນມາກ, ບ້ານ ທາດ ຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນອີກ ດ້ວຍ.

ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງໃນກອງປະຊຸມ ດັ່ງລຸ່ມນີ້:

ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

☐ ອະນຸມັດ ☐ ບໍ່ອະນຸມັດ

ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນ ຂ້າພະເຈົ້າ ໄດ້ບາງວາລະ;

☐ ອະນຸມັດ ☐ ບໍ່ອະນຸມັດ

ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້):

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021 ;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2021

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດປີ 2022

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2021 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 6: ພິຈາລະນາ ແລະ ຮັບຮອງແຜນການຄັດເລືອກສະມາຊິກສະພາບໍລິຫານສະໄໝທີ 3 ຂອງບໍລິສັດ ວຈຊຕ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 8: ພິຈາລະນາ ແລະ ຮັບຮອງແຜນການຄັດເລືອກສະມາຊິກຄະນະກຳມະການຕ່າງໆຂອງບໍລິສັດ ວຈຊຕ ຊຸດໃໝ່

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 09: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 10 : ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ

12 ວ່າດ້ວຍສະພາບໍລິຫານ

☐ ເຫັນດີ ☐ ບໍ່ເຫັນດີ

ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນອາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

ໃນກໍລະນີຂ້າພະເຈົ້າບໍ່ໄດ້ລະບຸຄວາມປະສົງໃນການລົງຄະແນນສຽງໃນອາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ຫຼື ໃນກໍລະນີທີ່ກອງປະຊຸມພິຈາລະນາ ຫຼື ລົງມະຕິໃນເລື່ອງໃດນອກເໜືອຈາກເລື່ອງທີ່ລະບຸໄວ້ຂ້າງຕົ້ນ ລວມເຖິງກໍລະນີທີ່ມີການແກ້ໄຂປ່ຽນແປງ ຫຼື ເພີ່ມເຕີມຂໍ້ເທັດຈິງໃດໜຶ່ງ ໃຫ້ຜູ້ຮັບມອບສິດມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

ການກະທຳໃດທີ່ຜູ້ຮັບມອບສິດໄດ້ກະທຳໄປໃນການປະຊຸມນັ້ນ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າໄດ້ລະບຸໄວ້ໃນໃບມອບສິດສະບັບນີ້ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ.

ລົງລາຍເຊັນຜູ້ມອບສິດ:.....

(.....)

ລົງລາຍເຊັນຜູ້ຮັບມອບສິດ:.....

(.....)

ໝາຍເຫດ:

ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້;

ໜັງສືມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບສິດ ແລະ ຜູ້ຕາງໜ້າໃນທາງກົດໝາຍ ຕາມກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009. ຢ່າງໃດກໍຕາມ, ໃນກໍລະນີທີ່ໜັງສືມອບສິດສະບັບນີ້ຫາກບໍ່ໄດ້ຈົດທະບຽນສານ ແລະ ໄດ້ຍື່ນຕໍ່ບໍລິສັດ, ບໍລິສັດຈະບໍ່ຮັບຜິດຊອບໃດໆໃນຄວາມຂັດແຍ່ງທີ່ເກີດຂຶ້ນລະຫວ່າງຜູ້ມອບສິດ ແລະ ຜູ້ຮັບມອບສິດ.

[ເອກະສານຄັດຕິດ 8]

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2021

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2021, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ. ຢ່າງໃດກໍ່ຕາມ, ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະ ເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.

<u>ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມ</u>

ກໍລະນີຜູ້ຖືຮຸ້ນເປັນບຸກຄົນທຳມະດາ

ຜູ້ຖືຮຸ້ນທີ່ເຂົ້າປະຊຸມດ້ວຍຕົນເອງ ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຖືຮຸ້ນ ແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ);

ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;

ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ;

ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊິ່ງປາກົດພາບຖ່າຍ ແລະ ຍັງບໍ່ໝົດກຳນົດເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນ

ກໍລະນີຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້:

ເອກະສານທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ

ເຊິ່ງເປັນຜູ້ຖືຮຸ້ນເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ;

ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຜູ້ອຳນວຍການທີ່ເປັນນິຕິບຸກຄົນເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ.

ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າ (ຜູ້ທີ່ບໍ່ແມ່ນອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ) ເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນພ້ອມປະທັບກາບໍລິສັດ ໂດຍໃຫ້ຂຽນຊື່ແຈ້ງຂອງຜູ້ມອບສິດ ແລະ ຜູ້ຮັບມອບສິດ;

ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຜູ້ອຳນວຍການທີ່ເປັນນິຕິບຸກຄົນເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ.

ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳກາ ນຜູກພັນນິຕິບຸກຄົນ ແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການດັ່ງກ່າວ.

ເອກະສານທີ່ທາງລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຕາງໜ້າແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

<u>ໝາຍເຫດ:</u> ໃນກໍລະນີທີ່ຜູ້ຖືຮຸ້ນເປັນບຸກຄົນຕ່າງປະເທດໃຫ້ປະຕິບັດຕາມຂໍ້ 1 ຫຼື ຂໍ້ 2 ແລ້ວແຕ່ກໍລະນີເຊິ່ງຫາກເອກະສານດັ່ງກ່າວເປັນພາສາອື່ນ ນອກເໜືອຈາກພາສາລາວ ຫຼື ພາສາອັງກິດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ໂດຍໃຫ້ບຸກຄົນທຳມະດາ ຫຼື ອຳນວຍການທີ່ມີອຳນາດລົງລາຍເຊັນຜູກພັນນິຕິບຸກຄົນນັ້ນລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວດ້ວຍ.

<u>ການມອບໝາຍ</u>

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງ ໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບພັນທະໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

ນຳສົ່ງໜັງສືມອບສິດຄືນ ທີ່ຫ້ອງການ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ, ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ເບີໂທ: (+856) 21 228299 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 26 ເມສາ 2022 ຫຼື ນຳສົ່ງໜ້າສະຖານທີ່ຈັດງານກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນ ໜ້ອຍກ່ວາຈຳນວນທີ່ຕົນຖືຢູ່ໄດ້.

<u>ການລົງທະບຽນ</u>

ບໍລິສັດເປີດຮັບລົງທະບຽນຕັ້ງແຕ່ເວລາ 13:00 ໂມງ ທີ່ຫ້ອງປະຊຸມ ໄດເອີ້ມ້ອນ ຊັ້ນ 4 ຂອງໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ.

ກໍລະນີມາດ້ວຍຕົນເອງ

ໃຫ້ຕິດຕໍ່ຈຸດລົງທະບຽນ ພ້ອມສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ;

ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມອາລະ.

ກໍລະນີມອບສິດໃຫ້ບຸກຄົນອື່ນ

ໃຫ້ຕິດຕໍ່ຈຸດກວດເອກະສານ ພ້ອມທັງສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ;

ຕິດຕໍ່ຈຸດລົງທະບຽນ ພ້ອມຍື່ນເອກະສານຕາມຂໍ້ 2.1 ຂ້າງຕົ້ນ ເຊິ່ງໄດ້ຜ່ານການກວດສອບແລ້ວ;

ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມອາລະ (ສະເພາະກໍລະນີຜູ້ມອບສິດບໍ່ໄດ້ ອອກສຽງລົງຄະແນນໄວ້ໃນໜັງສືມອບສິດ).

<u>ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ</u>

ການລົງຄະແນນສຽງ:

ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.

ໃນການລົງຄະແນນສຽງໃນແຕ່ລະອາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີໃນບັດລົງຄະແນນທີ່ເຈົ້າໜ້າທີ່ ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກ່ວາຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນອາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມ ທີ່ສະເໜີໃນກອງປະຊຸມ.

ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສິດໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມ ຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນ ລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍ ແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມ ຕື່ມອີກ.

ການນັບຜົນການລົງຄະແນນສຽງ:

ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ເຂົ້າມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງກ່າວມານັບເປັນຄະແນນສຽງຕື່ມອີກ.

ເອກະສານຄັດຕິດ 9

ແຜນທີ່ສະຖານທີ່ (ຈຸດສີແດ່ງ)

ຈັດກອ່ງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈ່ຳປີ 2021

ຫ້ອ່ງ Diamond ໂຮ່ງແຮມແລນມາກ, ບ້ານ ທາດຂາວ, ເມືອ່ງ ສີສັດຕະນາກ, ນະຄອນຫຼວ່ງວ່ງຈັນ.

